LIBRARIES
UNIVERSITY OF WISCONSIN–MADISON

# Peace talks (Royal Lao Government and Neo Lao Hak Xat). 1972-11

[s.l.]: [s.n.], 1972-11

https://digital.library.wisc.edu/1711.dl/JGE6ZSFWB5V6X8K

This material may be protected by copyright law (Title 17, US Code).

For information on re-use see:
http://digital.library.wisc.edu/1711.dl/Copyright

The libraries provide public access to a wide range of material, including online exhibits, digitized collections, archival finding aids, our catalog, online articles, and a growing range of materials in many media.

When possible, we provide rights information in catalog records, finding aids, and other metadata that accompanies collections or items. However, it is always the user's obligation to evaluate copyright and rights issues in light of their own use.

728 State Street | Madison, Wisconsin 53706 | library.wisc.edu

4ème séance
7 - 11 - 72

7 NOV 1972

ຄຳປາໄສ

ຂອງ ທ່ານ ພູມ ສີປະເສີດ ຫົວໜ້າຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ,
ກ່າວໃນກອງປະຊຸມ ເທື່ອທີ ໔ (ວັນທີ ໗/໑໑/໗໒).

---

ຮຽນ ບັນດາທ່ານ,

ພວກຂ້າພະເຈົ້າໄດ້ຄົ້ນຄວ້າ ຄຳປາໄສ ຂອງຄະນະຜູ້ແທນຝ່າຍຂວາວຽງຈັນ ທີ່ໄດ້ອ່ານໃນກອງ ປະຊຸມຄັ້ງວັນທີ ໓໑/໑໐/໗໒ ນັ້ນ ຢ່າງລະອຽດຖີ່ຖ້ວນແລ້ວ ຈຶ່ງເຫັນແຈ້ງ ເຖິງເຈດຕະນາອັນແທ້ຈິງ ຂອງພວກທ່ານ ກ່ຽວກັບການເຈລະຈາເທື່ອນີ້, ເຈດຕະນາດັ່ງກ່າວນັ້ນ ແມ່ນພວກທ່ານ ຢາກເຈລະຈາໃນ ຖານະ ບໍ່ສະເໝີພາບ. ພຽງແຕ່ໃສ່ຊື່ "ຄະນະກຳມະການ ຂອງລັດຖະບານປະສົມ ຊົ່ວຄາວແຫ່ງຊາດ" ມາເຈລະຈາ ກັບຄະນະກຳມະການ ຝ່າຍແນວລາວຮັກຊາດ" ນັ້ນກໍເຫັນແຈ້ງໃນເລື່ອງນີ້ ເພາະວ່າການ ຕັ້ງຊື່ຜູ້ແທນ ນັ້ນເປັນການບໍ່ຖືກຕ້ອງກັບສະພາບ ຄວາມເປັນຈິງຂອງມັນ. ພວກທ່ານ ບໍ່ສາມາດຈະຕາງ ໜ້າ ໃຫ້ລັດຖະບານປະສົມແຫ່ງຊາດ ໓ ຝ່າຍ ທີ່ໝົດຊີວິດແລ້ວ ຕັ້ງແຕ່ປີ ໑໙໖໔ ພຸ້ນມາ, ແລະພວກທ່ານ ກໍບໍ່ຄວນເອີ້ນ ຄະນະຜູ້ແທນບັນດາກຳລັງຮັກຊາດວ່າ ເປັນພຽງແຕ່ ຄະນະຜູ້ແທນ ແນວລາວຮັກຊາດ ເພາະ ວ່າ ໃນຄະນະຜູ້ແທນອັນນີ້ ມັນມີທັງບັນດາກຳລັງແນວລາວຮັກຊາດ ແລະບັນດາກຳລັງເປັນກາງຮັກຊາດ ດັ່ງພວກຂ້າພະເຈົ້າ ໄດ້ຊີ້ແຈງໄປແລ້ວ. ການທີ່ພວກທ່ານ ດຶງດັນເອົາຫຸ່ນມາໄວ້ຢູ່ໃນຫ້ອງປະຊຸມ, ເອົາ ຜູ້ແທນຂອງອັນທີ່ເອີ້ນວ່າ "ລັດຖະສະພາ" ຂອງຝ່າຍຂວາວຽງຈັນ [illegible] ແລະເອົາເຄື່ອງອັດສຽງມາອັດເອົາໄປ ໃຊ້ແຕ່ຝ່າຍດຽວ ໂດຍບໍ່ໄດ້ເປີກສາຫາລື ຕົກລົງກັນກ່ອນນັ້ນ ມັນຢືນຢັນ ເຈດຕະນາຂອງພວກທ່ານ ດັ່ງກ່າວ ຢ່າງຈະແຈ້ງທີ່ສຸດ. ເຈດຕະນາອັນນັ້ນ ແມ່ນໃຊ້ທຸກຮູບ ແລະສິດຂອງຝ່າຍຕົນ ມາຍົກຍໍ ຄະນະຜູ້ແທນ ຂອງ ຝ່າຍຂວາວຽງຈັນໃຫ້ສູງຂຶ້ນ ແລະຍຸບຍອບຄະນະຜູ້ແທນ ຂອງຝ່າຍບັນດາກຳລັງຮັກຊາດ ໃຫ້ຕ່ຳລົງ ເພື່ອ ຈະເຮັດໃຫ້ການເຈລະຈາ ກາຍເປັນບ່ອນທີ່ພວກທ່ານ ຈະໃຊ້ຄຳສັ່ງ ໃຫ້ບັນດາກຳລັງຮັກຊາດ ປະຕິບັດ ຕາມຄວາມມັກ ຂອງຕົນແຕ່ຝ່າຍດຽວ. ຖ້າວ່າ ຝ່າຍຂວາວຽງຈັນ ຫາກຍັງຮັກສາ ແນວຄິດອັນນີ້ຢູ່ ໂດຍບໍ່ຄຳນຶງເຖິງ ສະພາບຄວາມເປັນຈິງ ຢູ່ໃນລາວແລ້ວ ມັນຈະເປັນອຸປະສັກ ອັນຕ້ານຕ່າຍາກທີ່ສຸດ ໃຫ້ແກ່ການເຈລະຈາ ຂອງພວກເຮົາ ໃນເທື່ອນີ້.

ໃນຄຳປາໄສ ຂອງຄະນະຜູ້ແທນຝ່າຍຂວາວຽງຈັນ ໄດ້ອ້າງໄປອ້າງມາຫຼາຍເທື່ອ ເຖິງຊື່ລັດຖະ ບານປະສົມ ໓ ຝ່າຍ ແລ້ວທ້າຍສຸດ ກໍໄດ້ເວົ້າຢືນຢັນຕື່ມອີກເທື່ອໜຶ່ງວ່າ ລັດຖະບານປະສົມ ໓ ຝ່າຍ ທີ່ ຕັ້ງຂຶ້ນຕາມພະລາຊະອົງການ ເລກທີ ໑໑໙ ລົງວັນທີ ໒໓ ມິຖຸນາ ໑໙໖໒ ນັ້ນຍັງຄົງມີຢູ່. ພວກຂ້າພະ ເຈົ້າຢາກຖາມ ຝ່າຍຂວາວຽງຈັນຄືນວ່າ ລັດຖະບານອັນນີ້ ຍັງຄົງມີຢູ່ແບບໃດ? ເພື່ອເປັນຫຼັກຖານວ່າ ມັນຄົງມີຢູ່ຫຼືບໍ່ນັ້ນ ຂໍໃຫ້ເອົາພະລາຊະອົງການ ສະບັບນັ້ນມາວາງລົງ ແລ້ວອ່ານເບິ່ງລາຍຊື່ຂອງຜູ້ທີ່ຖືກແຕ່ງ ຕັ້ງໃນເວລານັ້ນແລ້ວ ເອົາມາປຽບໃສ່ ລາຍຊື່ຄົນທີ່ຢູ່ໃນ ອັນທີ່ພວກທ່ານເອີ້ນວ່າ ລັດຖະບານໃນເວລານີ້ ເບິ່ງດູ ເພື່ອຈະໃຫ້ເຫັນວ່າ ມັນກົງກັນຫຼືບໍ່. ພວກຂ້າພະເຈົ້າໄດ້ເວົ້າແລ້ວວ່າ ມັນບໍ່ກົງກັນ. ໃນຄຳປາໄສ ຂອງພວກທ່ານ ມື້ວັນທີ ໓໑/໑໐/໗໒ ນີ້ ພວກທ່ານ ກໍໄດ້ຮັບຮູ້ວ່າ "ຢູ່ຕໍ່ມາກໍໄດ້ມີການແກ້ໄຂ ແລະ ດັດ

ແບ່ງສະເພາະຝ່າຍຂວາ ແລະ ຝ່າຍກາງ," ແລະ "ຕັ້ງແຕ່ປີ ໑໙໕໔ ມາເຖິງປະຈຸບັນນີ້ ຈະມີການ ດັດແປງລັດຖະບານກໍຕາມ... ". ນອກຈາກນັ້ນ, ພວກທ່ານຍັງ ~~ເວົ້າ~~ ກ່າວວ່າ "ຕາມຫຼັກລັດຖະທຳມະນູນ ແລະ ຕາມກົດຫມາຍແລ້ວ, ຫມາຍຄວາມວ່າ ລັດຖະບານປະສົມຊື່ວຄາວແຫ່ງຊາດຍັງຄົງຕິດຢູ່". ເວລາ ພວກທ່ານເວົ້າຕອນນີ້ ປະກົດວ່າພວກທ່ານລືມວິທີເຮັດວຽກຂອງລັດຖະບານປະສົມ ມ ຝ່າຍ ທີ່ວ່າ ຫຼາຍວຽກ ງານສຳຄັນ ແລະ ທຸກການປ່ຽນແປງ ໃນລັດຖະບານປະສົມ ມ ຝ່າຍນີ້ ຕ້ອງປຶກສາຫາລືໃຫ້ເປັນເອກະສັນ ກັນທັງ ມ ຝ່າຍແລ້ວຈຶ່ງເຮັດໄດ້. ເວລາກຳລັງປະຕິການຝ່າຍຂວາ ເຮັດລັດຖະປະຫານວັນທີ ໑໙/໔/ ໑໙໕໔ ~~ແລ້ວ~~ ນັ້ນ ຍັງໄດ້ປຶກສາເປັນເອກະສັນ ລະຫວ່າງ ມ ຝ່າຍບໍ່ ? ພວກຂ້າພະເຈົ້າຢືນຢັນວ່າ ບໍ່ມີ ເພາະຝ່າຍແນວລາວຮັກຊາດບໍ່ໄດ້ຮູ້ເລື່ອງນີ້ ຈຶ່ງໄດ້ຂຶ້ນສຽງຄັດຄ້ານໃນທັນໃດນັ້ນໂລດ. ຕໍ່ຈາກນັ້ນມາ ລັດຖະບານປະສົມແຫ່ງຊາດໄດ້ຖືກມ້າງເພ ຕາມຄຳສັ່ງຂອງຈັກກະພັດອາເມລິກາ ເປັນລຳດັບມາດັ່ງນີ້:

ເທື່ອທີ່ໜຶ່ງໄດ້ໃຊ້ກຳລັງທະຫານຝ່າຍຂວາ ເຮັດລັດຖະປະຫານໂຄ່ນລົ້ມລັດຖະບານປະສົມ ມ ຝ່າຍ ໃນວັນທີ ໑໙/໔/໕໔ ແລະ ຈັບເອົາສະເດັດເຈົ້າສຸວັນນະພູມາ ເຊິ່ງເປັນນາຍົກລັດຖະມົນຕີ ລັດຖະບານປະສົມແຫ່ງຊາດ ໃນເວລານັ້ນໄປກັກຂັງ. ເນື່ອງຈາກມີການຄັດຄ້ານຢ່າງຮຸນແຮງ ຂອງພະ ບາດສົມເດັດ ພະເຈົ້າມະຫາຊີວິດ, ຂອງຝ່າຍແນວລາວຮັກຊາດ ແລະ ທູດານຸທູດຕ່າງໆ ພວກເຂົາ ໄດ້ປ່ຽນສະເດັດເຈົ້າສຸວັນນະພູມາອອກມາແລ້ວ ບີບບັງຄັບ ໃຫ້ມ້າງເພລັດຖະບານປະສົມແຫ່ງຊາດ ມ ຝ່າຍ. ດ້ວຍເຫດນັ້ນ, ໃນວັນທີ ໒໔/໕/໕໔ ເຂົາຈຶ່ງໄດ້ປົດ ທ່ານ ຄຳສຸກ ແກ້ວລາ, ລັດຖະມົນຕີ ກະຊວງ ສາທາລະນະສຸກອອກແລ້ວ ເອົາທ່ານ ອຸທອງ ສຸວັນນະວົງ ເຂົ້າມາແທນ; ປົດທ່ານ ເຮືອນ ມົງຄົນວິໄລ, ລັດຖະມົນຕີຊ່ວຍວ່າການ ກະຊວງພັກອົບເກົ່າ ແລ້ວເອົາທ່ານ ສຸກັນ ວິໄລສານເຂົ້າມາແທນ, ແລະ ໃນວັນທີ ໒໗/໕/໕໔ ໄດ້ເອົາກະຊວງເສດຖະກິດ ແລະ ແຜນຍັງຂອງສະເດັດເຈົ້າສຸພານຸວົງ ໄປມອບ ໃຫ້ທ່ານໂງນ ຊະນະນິກອນ ແລະ ເອົາກະຊວງຖະແຫຼງຂ່າວ ໂຄສະນາການ ແລະ ທ່ອງທ່ຽວ ຂອງ ທ່ານ ພູມີ ວົງວິຈິດ ໄປມອບໃຫ້ເຈົ້າ ສີສຸມັງ ສີສະເລີມສັກ. ນັ້ນ ~~ເປັນ~~ ແມ່ນການມ້າງເພລັດຖະບານປະສົມ ມ ຝ່າຍ ຄັ້ງທີໜຶ່ງ.

ວັນທີ ໒໗/໗/໕໔ ໄດ້ປົດທ່ານ ບຸນທັນ ວົງວິໄລ ລັດຖະມົນຕີກະຊວງທຳມະການອອກ ແລ້ວ ເອົາທ່ານ ອຸ່ນເຮືອນ ນໍລະສິງ ເຂົ້າມາແທນ; ປົດທ່ານ ຄຸນອ່ອນ ອໍລະວົງ, ລັດຖະມົນຕີກະຊວງຍຸຕິທຳ ແລ້ວ ເອົາທ່ານ ບົວວັນ ນໍລະສິງເຂົ້າມາແທນ; ປົດທ່ານ ພອງເພັດ ພັນນະເລດ ລັດຖະມົນຕີຊ່ວຍວ່າ ການ ກະຊວງການຄັງອອກ ແລ້ວເອົາທ່ານ ສີສຸກ ນະຈຳປາສັກເຂົ້າມາແທນ; ປົດທ່ານ ບຸນທົງ ອໍລະວົງ ລັດຖະມົນຕີຊ່ວຍວ່າການ ກະຊວງ ກິລາ ແລະ ຍຸວະຊົນ ແລ້ວເອົາທ່ານ ໄຕ ແກ້ວຫຼວງໂຄດເຂົ້າມາແທນ.

ນັ້ນແມ່ນການມ້າງເພລັດຖະບານປະສົມ ຄັ້ງທີສອງ.

ຫຼັງຈາກການປະທະກັນ ວັນທີ ໓໑/໑/໑໙໕໕ ແລ້ວ, ໃນວັນທີ ໑໑/໓/໑໙໕໕ ໄດ້ປົດທ່ານ ພູມີ ໜໍ່ສະຫວັນອອກຈາກຕຳແໜ່ງ ຮອງນາຍົກແລ້ວ ເອົາທ່ານລຽນ ອິນສີຊຽງໃໝ່ເຂົ້າເປັນຮອງ ນາ ຍົກລັດຖະມົນຕີແທນ, ເອົາທ່ານ ສີສຸກ ນະຈຳປາສັກ ຂຶ້ນເປັນລັດຖະມົນຕີກະຊວງການຄັງ, ເອົາທ່ານ ສຸກັນ ວິໄລສານໄປເປັນລັດຖະມົນຕີ ຊ່ວຍວ່າການ ກະຊວງມະຫາດໄທ ທັງເປັນອະທິບໍດີ ກົມຕຳຫຼວດ ແລະ ~~ໄປ~~ ໃຫ້ ຈັບເອົາທ່ານ ບົວວັນ ນໍລະສິງໄປກັກຂັງ. ນັ້ນແມ່ນການ ມ້າງເພລັດຖະບານປະສົມເທື່ອທີ ມ.

ວັນທີ ໗/໙/໑໙໕໕ ໂດຍລອງໃຊ້ການເລືອກຕັ້ງ ແບບຈຳກັດແຕ່ຜ່ານດຽວກໍໄດ້ ປົດທ່ານ ຄຳເພັງ ບຸບຜາ, ລັດຖະມົນຕີ ຊ່ວຍວ່າການກະຊວງປັບປຸງໝູ່ບ້ານອອກ ແລ້ວເອົາທ່ານ ອິນແປງ ສຸຣິຍະໄທເຂົ້າ ມາເປັນລັດຖະມົນຕີ ກະຊວງຍຸຕິທຳ, ເອົາທ່ານ ໄຕ ແກ້ວຫຼວງໂຄດເຂົ້າມາເປັນ ລັດຖະມົນຕີ ກະຊວງ ສາທາລະນະສຸກ ແລະ ເອົາເຈົ້າບຸນອົ້ມ ມາເປັນລັດຖະມົນຕີກະຊວງທຳມະການ. ນັ້ນແມ່ນການນ້າງ ເພລັດຖະບານປະສົມເທື່ອທີ ໔.

ຫຼັງຈາກການເລືອກຕັ້ງວັນທີ ໑/໑/໑໙໕໗ ກໍໄດ້ມີການນ້າງເພລັດຖະບານປະສົມອີກຄື: ປົດ ທ່ານໄຕ ແກ້ວຫຼວງໂຄດ ລັດຖະມົນຕີກະຊວງສາທາລະນະສຸກອອກ ແລ້ວເອົາເຈົ້າສີສຸມັງ ສີສະເຫຼີມສັກ ເຂົ້າໄປແທນ; ຫຼັງຈາກນັ້ນ ຍັງໄດ້ເອົາທ່ານ ຄຳໄພ ອາໄພ ເຂົ້າມາເປັນລັດຖະມົນຕີຊ່ວຍວ່າການ ກະ ຊວງສາທາລະນະສຸກ, ເອົາທ່ານ ທຸມພັນ ໄຊຍະສິດ ມາເປັນລັດຖະມົນຕີຊ່ວຍວ່າການກະຊວງການຄັງ, ເອົາທ່ານ ສຸກ ອຸປລາວັນ ມາເປັນລັດຖະມົນຕີຊ່ວຍວ່າການ ກະຊວງປັບປຸງໝູ່ບ້ານແລ້ວ ເອົາທ່ານ ລຽນ ປະວົງວຽງຄຳ ເຂົ້າມາເປັນລັດຖະມົນຕີຊ່ວຍວ່າການກະຊວງ ກິລາ ແລະ ຍຸວະຊົນ. ນັ້ນແມ່ນການນ້າງ ເພລັດຖະບານປະສົມ ມ ຝ່າຍເທື່ອທີ ໕.

ການນ້າງເພລັດຖະບານປະສົມແຫ່ງຊາດ ມ ຝ່າຍທີ່ສຳຄັນແມ່ນ ຕັ້ງແຕ່ ວັນທີ ໘/໑໐/໑໙໕໖ ພຸ້ນມາ. ສະເດັດເຈົ້າສຸວັນນະພູມາໄດ້ຜ່າຟືນຄວາມຄັດຄ້ານຂອງຝ່າຍແນວລາວຮັກຊາດ ແລ້ວເອົາລັດຖະ ບານປະສົມແຫ່ງຊາດ ມ ຝ່າຍທີ່ຈັດຕັ້ງຂຶ້ນຕາມແບບພິເສດ ດັ່ງກ່າວແລ້ວນັ້ນ ໄປຂໍນກັບ "ສະພາ" ຂອງ ຝ່າຍສະຫງັນນະເຂດ ແລະ ທຸກໆ "ສະພາ" ຂອງຝ່າຍຂວານາຮອດປະຈຸບັນນີ້, ເຮັດໃຫ້ຫຼາການຈັດຕັ້ງ ລັດຖະບານປະສົມ ມ ຝ່າຍ ທີ່ບັງໄວ້ໃນສັນຍາ ຊຽງລົກ ແລະ ທົ່ງໄຫຫີນ ຖືກລະເມີດຢ່າງຮ້າຍແຮງທີ່ສຸດ.

ໃນຖະແຫຼງການຂອງພວກທ່ານໃນວັນທີ ໓໑/໑໐/໑໙໖໖, ພວກທ່ານໄດ້ອ້າງເອົາລັດຖະທຳມະ ນູນ ແລະ ກົດໝາຍຂອງຝ່າຍຂວາວຽງຈັນ ມາຢັ້ງຢືນວ່າ, ລັດຖະບານປະສົມຊົ່ວຄາວແຫ່ງຊາດຍັງຢູ່. ໃນຕອນນີ້, ພວກທ່ານ ປະກົດລືມເສຍວ່າ ລັດຖະບານປະສົມຊົ່ວຄາວແຫ່ງຊາດ ທີ່ຕັ້ງຂຶ້ນຕາມສັນຍາ ຊຽງລົກ ແລະ ທົ່ງໄຫຫີນນັ້ນ ແມ່ນຈັດຕັ້ງຂຶ້ນແບບພິເສດ ໂດຍບໍ່ຜ່ານອັນທີ່ເອີ້ນວ່າ ສະພາແຫ່ງຊາດຂອງຝ່າຍຂວາ. ການທີ່ຢັ້ງຢືນວ່າ ລັດຖະບານອັນນີ້ ຍັງຄົງຢູ່ ກໍມີແຕ່ຢ່າງດຽວຄືວ່າ ຕົວລັດຖະມົນຕີທີ່ປະກອບເຂົ້າລັດຖະບານປະສົມ ແຫ່ງໄກ ໃຊ້ຝ່າຍນັ້ນ ຍັງຄົງຢູ່ ~~ໃນລັດຖະບານ~~ ທີ່ໄດ້ ແລະ ບູ່ທີ່ເສຍຊີວິດໄປແລ້ວ ກໍເອົາຕົວອື່ນເຂົ້າມາແທນ ຕາມຄວາມຕົກ ລົງເປັນເອກະສັນຂອງ ມ ຝ່າຍ; ກົດໝາຍ ແລະ ສະພາຂອງຝ່າຍຂວາບໍ່ສາມາດຈະມາຢັ້ງຢືນການຄົງ ຕົວຂອງລັດຖະບານອັນນີ້ໄດ້.

ເຫດຜົນທີ່ພວກຂ້າພະເຈົ້າ ໄດ້ຍົກບາງອັນຂຶ້ນມາຢັ້ງຢືນຂ້າງເທິງນີ້ ພໍຈະຊີ້ໃຫ້ເຫັນແຈ້ງແລ້ວວ່າ ລັດຖະບານປະສົມ ມ ຝ່າຍ ບໍ່ມີອີກແລ້ວ ດັ່ງທີ່ພວກຂ້າພະເຈົ້າໄດ້ເວົ້າໄປໃນວາລະປະຊຸມຄັ້ງທີ ມ ກ່ອນນີ້, ອັນທີ່ເອີ້ນວ່າ "ລັດຖະບານ" ທີ່ພວກທ່ານເອົາມາອ້າງນັ້ນ ມັນເປັນພຽງແຕ່ການຈັດຕັ້ງອຳນາດການປົກ ຄອງອັນໜຶ່ງ ເພື່ອຮັບໃຊ້ ເຈຕະນາຂະຫຍາຍສົງຄາມຂອງຈັກກະພັດອາເມລິກາ ແລະ ລູກມືຂອງມັນເທົ່າ ນັ້ນ. ອັນທີ່ເອີ້ນວ່າ "ສະພາແຫ່ງຊາດ" ກໍເປັນພຽງແຕ່ການຈັດຕັ້ງທາງການເມືອງອັນໜຶ່ງເພື່ອຄອບຄຸມ "ລັດຖະບານ" ໃຫ້ປະຕິບັດ ເຈຕະນາຂອງຈັກກະພັດອາເມລິກາ ແລະ ລູກມືດັ່ງກ່າວນັ້ນ. ການຈັດຕັ້ງອັນ ອັນນີ້, ພວກຂ້າພະເຈົ້າ ບໍ່ຮັບຮູ້ວ່າ ເປັນລັດຖະບານປະສົມແຫ່ງຊາດ ແລະ ສະພາແຫ່ງຊາດ ຝ່າຍເດົາ ຂາດ; ການຈະເອົາຊື່ຄະນະຜູ້ແທນລັດຖະບານມາເຈລະຈາກັບພວກຂ້າພະເຈົ້າ ແລະ ເອົາຄືນຂອງ "ສະ

ຕົວ" ມາເປັນຕົວສັ່ງການໃນກອງປະຊຸມ ເພື່ອບັງຄັບໃຫ້ພວກຂ້າພະເຈົ້າຮັບຮູ້ອັນທີ່ເອີ້ນວ່າ ລັດຖະບານ ແລະ ສະພາຂອງພວກທ່ານ ໂດຍທາງອ້ອມນັ້ນ ແມ່ນບໍ່ຖືກຕ້ອງ ແລະ ເປັນອຸປະສັກອັນໃຫຍ່ຫຼວງໃຫ້ແກ່ກອງປະຊຸມຂອງພວກເຮົາ.

ໃນຄຳປາໄສຂອງພວກທ່ານ ວັນທີ ໓໑/໑໐/໗໒ ນັ້ນ, ພວກທ່ານໄດ້ເວົ້າວ່າ ບັນດາລັດຖະມົນຕີຂອງແນວລາວຮັກຊາດ ໄດ້ໜີຈາກລັດຖະບານໄປ ແລ້ວເອົາຄົນຕ່າງດ້າວ ທ້າວຕ່າງແດນ ຊຶ່ງພວກທ່ານເອີ້ນວ່າ ແມ່ນປະເທດສາທາລະນະລັດ ປະຊາທິປະໄຕຫວຽດນາມ ເຂົ້າມາກໍ່ຄວາມວຸ້ນວາຍໃສ່ບ້ານເມືອງລາວ, ເລື່ອງນີ້ ພວກຂ້າພະເຈົ້າເຫັນວ່າ ພວກທ່ານເສກສັນປັ້ນເລື່ອງມາເວົ້າ ໂດຍບໍ່ຄຳນຶງເຖິງຕົ້ນເຫດ ເພື່ອແກ້ຕົວ, ເມື່ອພວກຂ້າພະເຈົ້າຍົກຕົ້ນເຫດມາເວົ້າ, ພວກທ່ານກໍ່ຊອກທຸກວິທີກີດຂວາງ ໂດຍຫາວ່າ ເອົາເລື່ອງເກົ່າເລື່ອງຫຼັງມາເລົ່າຄືນ. ພວກທ່ານຢ້ານການເວົ້າເລື່ອງເກົ່າເລື່ອງຫຼັງກໍ່ເພາະມັນເປັນຄວາມຈິງທີ່ເກີດມີຢູ່ໃນປະເທດລາວເຮົາ ແລະ ພວກທ່ານຢ້ານຄວາມຈິງອັນນັ້ນ ຈຶ່ງຈັບເອົາແຕ່ສະພາບການບາງຕອນ ທີ່ເປັນຢູ່ໃນບ້ານເມືອງເຮົາ ເພື່ອປົກປິດຄວາມຈິງທີ່ໄດ້ເປັນມາ. ອັນນັ້ນແຫຼະ ທີ່ພວກຂ້າພະເຈົ້າວ່າ ພວກທ່ານຈະເອົາໃບບົວມາປົກຊ້າງຕາຍທັງໂຕບໍ່ໄດ້.

ຄວາມເປັນຈິງຢູ່ໃນປະເທດເຮົາແມ່ນແນວໃດແທ້ ? ຕົ້ນເຫດທີ່ກໍ່ໃຫ້ເກີດມີຄວາມວຸ້ນວາຍຢູ່ໃນບ້ານເມືອງເຮົາແມ່ນຫຍັງ ? ແມ່ນເປັນຍ້ອນຈັກກະພັດອາເມລິກາຮຸກຮານລາວຫຼື ເປັນຍ້ອນບັນດາທ່ານລັດຖະມົນຕີຂອງແນວລາວຮັກຊາດໜີໄປ ? ແລະ ບັນດາທ່ານເຫຼົ່ານີ້ໜີໄປ ແມ່ນຍ້ອນເຫດຜົນອັນໃດ? ພວກຂ້າພະເຈົ້າຂໍຍົກບາງເລື່ອງ ກ່ຽວກັບຄວາມຈິງນີ້ມາຊີ້ແຈງຕໍ່ພວກທ່ານດັ່ງຕໍ່ໄປນີ້ :

ພວກທ່ານຄົງຈຳໄດ້ດີວ່າ ຫຼັງຈາກສັນຍາເຊີແນວປີ ໑໙໕໔ ແລ້ວ ແນວລາວຮັກຊາດ ໄດ້ເຂົ້າມາເຈລະຈາ ກັບຝ່າຍລາຊະອານາຈັກ ເປັນເວລາ ໓ ປີ. ຕະຫຼອດຊ່ວງໄລຍະເຈລະຈານັ້ນ, ພວກເຮົາມີແຕ່ຖືກຖ່ວງກັນ ກ່ຽວກັບເລື່ອງ ຈະຕ້ານຢັນການແຊກແຊງຮຸກຮານຂອງຈັກກະພັດອາເມລິກາເຂົ້າລາວແນວໃດ. ການແຊກແຊງຮຸກຮານອັນນັ້ນ ມັນມີມາທັງທາງດ້ານການທະຫານ, ທັງທາງດ້ານການເມືອງພ້ອມກັນ. ທາງດ້ານການທະຫານ ແມ່ນບຸກຕີເຂົ້າເຂດເຕົ້າໂຮມ ໒ ແຂວງຂອງແນວລາວຮັກຊາດ ແລະ ປາບປາມຈັບກຸມຂ້າພັນ ຜູ້ທີ່ໄດ້ຮ່ວມມືກັບຝ່າຍແນວລາວຮັກຊາດຢູ່ທົ່ວ ໑໐ ແຂວງ. ທາງດ້ານການເມືອງແມ່ນຜິດປອງຂັດຂວາງການເຈລະຈາ ດັ່ງພວກຂ້າພະເຈົ້າໄດ້ເວົ້າມາແລ້ວ ເທື່ອກ່ອນນີ້. ເປັນຍ້ອນການແຊກແຊງຮຸກຮານຂອງຈັກກະພັດອາເມລິການັ້ນເອງ ລັດຖະບານປະສົມເທື່ອທຳອິດຈຶ່ງຖືກໂຄ່ນລົ້ມລົງ, ບັນດາຜູ້ນຳຂອງແນວລາວຮັກຊາດ ທີ່ເປັນຜູ້ແທນຢູ່ໃນສະພາແຫ່ງຊາດກໍ່ຖືກຈັບກຸມຄຸມຂັງຢ່າງຜິດກົດໝາຍລັດຖະທຳມະນູນ; ກອງທະຫານຂອງຝ່າຍແນວລາວຮັກຊາດ ທີ່ກຽມຕົວຈະເຂົ້າຮ່ວມ ກອງທັບແຫ່ງຊາດຕາມສັນຍາວຽງຈັນ ກໍ່ຖືກບັງຄັບໃຫ້ຍຸບ ປົດອົດ ແລະ ລົດຈຳນວນລົງຢ່າງຜິດສັນຍາ. ການກະທຳເຫຼົ່ານັ້ນ ເຮັດໃຫ້ຄວາມຖືກຕ້ອງປອງດອງຊາດຖືກມ້າງເພ, ເຮັດໃຫ້ສະພາບການບ້ານເມືອງ ບັບມັບເຄັ່ງຕຶງ ແລະ ເຮັດໃຫ້ສົງຄາມທີ່ຫາກໍ່ສະງົບລົງກັບເກີດຄືນມາອີກ. ຈັກກະພັດອາເມລິກາ ໄດ້ສວຍໃຊ້ໂອກາດອັນນັ້ນ ເພື່ອນຳເອົາບາງທະຫານ ແລະ ອາວຸດຍຸທະພັນ ເຂົ້າມາຂະຫຍາຍສົງຄາມອັນນັ້ນໃຫ້ລາມກວ້າງອອກໄປທົ່ວປະເທດ. ອັນນີ້ແມ່ນສາຍເຫດຕົ້ນຕໍທີ່ພາໃຫ້ບ້ານເມືອງ ເຮົາມີຄວາມວຸ້ນວາຍຕະຫຼອດມາ.

ພວກທ່ານເວົ້າວ່າ ຄວາມວຸ້ນວາຍອັນນັ້ນ ເກີດຂຶ້ນ ຍ້ອນມີການແຊກແຊງຂອງປະເທດ ສາທາລະນະລັດ ປະຊາທິປະໄຕຫວຽດນາມ, ອັນນັ້ນແມ່ນບໍ່ຖືກຕາມຄວາມຈິງຢູ່ໃນປະເທດລາວຂອງເຮົາ. ຫຼັງ

ຈາກການຢຸດຍິງປີ ໑໙໕໔ ແລ້ວ, ທາງຝ່າຍປະລັ່ງ, ສາທາລະນະລັດ ປະຊາທິປະໄຕຫວຽດນາມ, ແນວລາວຮັກຊາດ ແລະ ລາວອຽງຈັນໄດ້ພ້ອມກັນຈັດຕັ້ງ ຄະນະກຳມະການກວດກາ ການຢຸດຍິງຂຶ້ນ ແລະ ຄະນະກຳມະການກວດກາສາກົນ ກໍໄດ້ຈັດການສົ່ງທະຫານອາສາສະໝັກຫວຽດນາມ ແລະ ທະຫານປະລັ່ງອອກຈາກດິນລາວໄປ. ມາຮອດກາງປີ ໑໙໕໘, ເວລາທ່ານ ຜຸຍ ຊະນະນິກອນ ໄດ້ຕັ້ງລັດຖະບານຂອງເພິ່ນຂຶ້ນແລ້ວ, ເພິ່ນກໍໄດ້ເວົ້າວ່າ ທະຫານຕ່າງດ້າວຢູ່ໃນດິນລາວໄດ້ຖອນອອກໝົດແລ້ວ, ຄະນະກຳມະການສາກົນບໍ່ມີວຽກເຮັດແລ້ວ ຈຶ່ງຂໍເຊີນຄະນະກຳມະການສາກົນນັ້ນຖອນໜີອອກໄປ. ນັ້ນແມ່ນຫຼັກຖານຕົວຈິງທີ່ຈະແຈ້ງທີ່ສຸດ.

ການຈັບກຸມຂຸມຂັງ ບັນດາຜູ້ນຳແນວລາວຮັກຊາດ ແມ່ນການປະຕິບັດເຈດຈຳນົງຂອງ ຈັກກະພັດອາເມລິກາ ແລະ ລູກມືທີ່ຢາກທຳລາຍ ບັນດາກຳລັງ ແລະ ປະຊາຊົນຜູ້ຮັກຊາດຢູ່ໃນປະເທດລາວ. ເວລານັ້ນ ພວກຂ້າພະເຈົ້າໄດ້ເຕືອນແລ້ວວ່າ ຄວນໃຫ້ຝ່າຍອຽງຈັນທີ່ເປັນລູກມືອາເມລິກາ ປະຖິ້ມແນວຄິດທີ່ຢາກໃຊ້ກຳລັງດັບສູນບັນດາກຳລັງທີ່ຮັກຊາດ, ເພາະຖ້າຍັງຄິດ ແນວນັ້ນ ມີແຕ່ຈະເຮັດໃຫ້ບ້ານເມືອງວຸ້ນວາຍ ແລະ ທາງສຸດທ້າຍກໍແມ່ນບັນດາກຳລັງຮັກຊາດຈະເປັນຜູ້ຊະນະ – ຝ່າຍລູກມືອາເມລິກາຢູ່ໃນລາວບໍ່ຍອມຟັງຄວາມຕັກເຕືອນອັນຫວັງດີນັ້ນ, ຍັງດັ້ນດ້ານຂໍອາວຸດຈາກອາເມລິກາມາຂະຫຍາຍສົງຄາມ ໃຫ້ກວ້າງຂວາງ ແລະ ດຸເດືອດຂຶ້ນອີກ, ຝ່າຍບັນດາກຳລັງຮັກຊາດ ແລະ ປະຊາຊົນລາວ ທັງໝົດ ຈຶ່ງຈຳເປັນຕ້ອງສາມັກຄີກັນລຸກຂຶ້ນກຳອາວຸດປາບຜູ້ກໍ່ສົງຄາມອັນນັ້ນ ເພື່ອຟື້ນຟູສັນຕິພາບກັບຄືນມາໃຫ້ແກ່ປະເທດລາວ.

ມາເຖິງປີ ໑໙໖໑, ການຕໍ່ສູ້ຂອງບັນດາກຳລັງຮັກຊາດ ແລະ ປະຊາຊົນຜູ້ຮັກຊາດໄດ້ຮັບໄຊຊະນະອັນໃຫຍ່ຫຼວງ, ບັງຄັບໃຫ້ຈັກກະພັດອາເມລິກາ ແລະ ລູກມື ຕ້ອງຍອມຢຸດຍິງ ແລະ ເຂົ້ານັ່ງຮ່ວມໃນກອງປະຊຸມເຈນີວ ປີ ໑໙໖໑-໖໒ ກ່ຽວກັບລາວ. ຫຼັງຈາກນັ້ນ ລັດຖະບານປະສົມແຫ່ງຊາດ ມ ຝ່າຍ ກໍໄດ້ຈັດຕັ້ງຂຶ້ນ ແລະ ສັນຍາເຈນີວ ປີ ໑໙໖໒ ກ່ຽວກັບລາວກໍໄດ້ເຊັນກັນ, ແຕ່ວ່າ ຈັກກະພັດອາເມລິກາ ແລະ ລູກມືຍັງບໍ່ທັນປະຖິ້ມແນວຄິດທີ່ຈະໃຊ້ອາວຸດທຳລາຍ ດັບສູນບັນດາກຳລັງຮັກຊາດລາວ, ພວກມັນໄດ້ໃຊ້ທຸກວິທີທຳລາຍກຳລັງເປັນກາງ ແລະ ມ້າງເພລັດຖະບານປະສົມແຫ່ງຊາດ ມ ຝ່າຍ. ຜູ້ກໍ່ການວຸ້ນວາຍຂຶ້ນໃນເວລານັ້ນ ກໍບໍ່ແມ່ນຜູ້ອື່ນໃດ ນອກຈາກຈັກກະພັດອາເມລິກາ ແລະ ລູກມືມັນເອງ. ພວກທ່ານໄປ່າວຫາວ່າ ມີການແຊກແຊງ ແລະ ຮຸກຮານຂອງປະເທດ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ນັ້ນແມ່ນຫຼັບຕາເວົ້າ ໂດຍບໍ່ເບິ່ງຄວາມຈິງ ພາຍໃນປະເທດ. ການຖອນຄືນຫວຽດນາມ ທີ່ສະເດັດເຈົ້າສຸວັນນະພູມາກັບຍໍເອງວ່າ ມີພຽງແຕ່ ມວ ກອງຄືນ ທີ່ເຮັດວຽກການກໍ່ສ້າງຢູ່ຄັງໄຂນັ້ນ ໄດ້ເຮັດສຳເລັດໄປແລ້ວ, ແຕ່ຝ່າຍອາເມລິກາທີ່ມີນາຍ ທະຫານຢູ່ລາວເຖິງ ໑.໗໐໐ ຄົນ ຊໍ້າພັດຖອນອອກໄປພຽງແຕ່ ໗໗໗ ຄົນ, ຖອນອອກໄປແລ້ວ ຈຳນວນໜຶ່ງກໍຍັງນຸ່ງເຄື່ອງພົນລະເຮືອນກັບຕົວຄືນມາອີກ. ນາຍທະຫານອາເມລິກາທີ່ຍັງເຫຼືອຢູ່ນັ້ນ ໄປເຮັດວຽກຢູ່ທີ່ສຳນັກ ຢູໂຊມ ທີ່ປ່ຽນຊື່ມາເປັນ ຢູແຊດ, ສຳນັກ ຢູຊິດ ທີ່ເປັນກອງບັນຊາການ ສົງຄາມຈິດຕະສາດ ແລະ ທີ່ສະຖານທູດ ອາເມລິກາທີ່ເປັນສຳນັກຜູ້ສຳເລັດ ລາຊະການ ດັ່ງທີ່ພວກຂ້າພະເຈົ້າໄດ້ເວົ້າໄປແລ້ວ. ພວກພະນັກງານ ຟີລິບປິນ ທີ່ເປັນນັກສືບໃຫ້ອາເມລິກາ, ບໍລິສັດແອອະເມລິກາ ທີ່ເປັນອົງການຈັດຕັ້ງຄັງທະຫານຂອງອາເມລິກາ ແລະ ພວກທະຫານແຕກທັບ ຈຽງໄຄເຊັກ ທີ່ມາກໍ່ກວນຄວາມວຸ້ນວາຍຢູ່ໃນລາວບໍ່ໄດ້ຖອນອອກໄປເລີຍ. ພວກທ່ານຄົງຈື່ໄດ້ວ່າ ໃນປີ ໑໙໖໒ ພວກທ່ານສົງໄສວ່າ ມີກອງທະຫານຫວຽດນາມຢູ່ບ່ອນໃດ, ຄະນະກຳມະການສາກົນກໍໄດ້ໄປກວດ ແລະ

ສະຫຼຸບວ່າ ບໍ່ຈິງຕາມຄວາມກ່າວຫາ. ສ່ວນບ່ອນພວກຂ້າພະເຈົ້າສົງໄສວ່າ ມີທະຫານ ຈ.ງງໃດເຫຼືອຢູ່ບ້ານ ດົນເຜິ້ງ ແລະ ມີບາງທະຫານອາເມລິກາຢູ່ພູກະແດ, ຄະນະກຳມະການສາກົນໄປກວດຊອກພັດເຫັນວ່າ ມີເຮືອນຢູ່ຂອງເຂົາ ແລະ ຕາມລາຍງານຂອງປະຊາຊົນວ່າ ພວກເຂົາຫາກໍ່ຍ້າຍໄປໃໝ່ໆ. ດັ່ງນັ້ນຈຶ່ງ ສະຫຼຸບວ່າ ການຕໍ່ສູ້ຕັ້ງແຕ່ ປີ ໑໙໕໔ ມາຮອດປີ ໑໙໖໒ ຈຶ່ງລ້ວນແຕ່ເປັນການຕໍ່ສູ້ໃຫ້ຖອນຈັກກະພັດອາ ເມລິກາ ແລະ ລູກມືອອກຈາກປະເທດລາວ. ແຕ່ວ່າ ບໍ່ພຽງແຕ່ພວກນີ້ ບໍ່ຖອນອອກໄປເທົ່ານັ້ນ, ພວກ ເຂົາຍັງເອົາກັບເຂົ້າມາຕື່ມອີກນັບມື້ນັບຫຼາຍ ໂຄ່ນລົ້ມລັດຖະບານປະສົມສົງເທື່ອທີ ໑, ເຮັດການຄາດຕະ ກຳລັດຖະມົນຕີ ກີນີມ ໂພນເສນາ ແລະ ຜູ້ທີ່ຮັກຊາດເປັນຈຳນວນຫຼາຍ ແລ້ວກໍ່ເອົາເຮືອບິນອາເມລິກາ, ທະຫານຫຸ່ນພາກໃຕ້ຫວຽດນາມ ແລະ ທະຫານປະຕິການໄທ ມາຂະຫຍາຍສົງຄາມທັງທາງດິນ ແລະ ທາງ ອາກາດຢູ່ໃນບ້ານເມືອງລາວ, ເຮັດໃຫ້ປະຊາຊົນລາວໄດ້ຖືກບາດເຈັບລົ້ມຕາຍສັບອາງຈິບຫາຍຢ່າງນັບບໍ່ ຖ້ວນ. ອັນນັ້ນ ແຫຼະ ແມ່ນເຫດຜົນຄືຈຶ່ງທີ່ບໍ່ມີໃຜປະຕິເສດໄດ້ ອັນກໍ່ໃຫ້ເກີດມີຄວາມວຸ້ນວາຍຢູ່ໃນປະເທດ ລາວຈົນຮອດປະຈຸບັນນີ້.

ມັນເປັນທຳມະດາຢູ່ເອງ ທີ່ວ່າຈັກກະພັດອາເມລິກາ ຍິ່ງກໍ່ລັງມາຂະຫຍາຍສົງຄາມຢູ່ໃນລາວ ຫຼາຍເທົ່າໃດ, ປະຊາຊົນລາວທີ່ຍິ່ງສາມັກຄີກັນເຂົ້າ ລຸກຂຶ້ນຕໍ່ຕ້ານພວກມັນຄືນຈົນໃຫ້ພວກມັນ ຕ້ອງຍອມ ປ່ອຍໃຫ້ ປະເທດລາວມີສັນຕິພາບ, ເອກະລາດ, ປະຊາທິປະໄຕ ແລະ ຄວາມເປັນກາງຢ່າງແທ້ຈິງ. ພວກທ່ານຈະໄປກ່າວຫາວ່າ ຜູ້ໃດທີ່ລຸກຂຶ້ນກໍ່ອາວຸດຕີຈັກກະພັດອາເມລິກາ ແລະ ລູກມືໜ້າຊຸກຊານລາວ ນັ້ນແມ່ນ ເປັນຄົນຊາດອື່ນໄປ ແມ່ນເປັນການບໍ່ຖືກຕ້ອງຈັກດີ. ພວກທ່ານຈະໄປກ່າວຫາແນວໃດ, ພວກຄົນ ລາວທີ່ຮັກຊາດລາວ ແລະ ຕໍ່ສູ້ເພື່ອເອກະລາດຂອງລາວ ກໍຄືງເປັນຄົນລາວຢູ່ນັ້ນເອງ. ບັນດາຫຼັກຖານ ທີ່ພວກທ່ານຍົກຂຶ້ນມາກ່າວ ເລື່ອງນັ້ນເລື່ອງນີ້ ແມ່ນລ້ວນແຕ່ບໍ່ມີມູນຄວາມຈິງ ແລະ ເປັນການກົດຂວາງທີ່ ໃຫ້ກອງປະຊຸມຄືບໜ້າໄປເຖິງບ່ອນສຳເລັດໄດ້. ເລື່ອງນີ້ ແມ່ນພວກທ່ານຕ້ອງຮັບຜິດຊອບແຕ່ຝ່າຍດຽວ ໂດຍສິ້ນເຊີງ.

ໃນກອງປະຊຸມເທື່ອແລ້ວ, ພວກທ່ານໄດ້ສະເໜີໃຫ້ພ້ອມກັນພິຈາລະນາ ເອົາຂໍ້ສະເໜີ ໗ ຂໍ້ ຂອງພວກທ່ານ ມາລວມເຂົ້າໃນວິທີການ ໕ ຂໍ້ ທີ່ພວກ ຂ້າພະເຈົ້າສະເໜີໄປ ແລະ ທີ່ພວກທ່ານ ໄດ້ ຮັບເອົາເປັນພື້ນຖານການເຈລະຈາແລ້ວນັ້ນ. ເມື່ອມາພິຈາລະນາຢ່າງຄັກແນ່ແລ້ວ, ພວກຂ້າພະເຈົ້າ ເຫັນວ່າ ການທີ່ຈະເອົາຂໍ້ສະເໜີ ໗ ຂໍ້ ຂອງພວກທ່ານມາລວມເຂົ້າກັບວິທີການ ໕ ຂໍ້ ຂອງພວກຂ້າພະ ເຈົ້ານັ້ນ ແມ່ນເປັນໄປບໍ່ໄດ້, ເພາະວ່າຂໍ້ສະເໜີ ໗ ຂໍ້ຂອງພວກທ່ານລ້ວນແຕ່ແມ່ນຂັດກັບວິທີການ ໕ ຂໍ້ທີ່ພວກຂ້າພະເຈົ້າໄດ້ສະເໜີໄປແລ້ວ ເພື່ອແກ້ໄຂບັນຫາລາວ. ພວກຂ້າພະເຈົ້າ ເຂົ້າໃຈວ່າພວກທ່ານ ສະເໜີ ໗ ຂໍ້ອອກມານັ້ນ ບໍ່ແມ່ນເພື່ອແກ້ໄຂບັນຫາລາວ ບົນພື້ນຖານວິທີການ ໕ ຂໍ້ທີ່ພວກຂ້າພະເຈົ້າໄດ້ສະ ເໜີໄປ ແລະ ພວກທ່ານກໍ່ໄດ້ເຫັນດີນຳແລ້ວ. ຄຳສະເໜີ ໗ ຂໍ້ຂອງພວກທ່ານນັ້ນບໍ່ມີອັນໃດຈະນອນ ຢູ່ໃນ ໕ ຂໍ້ຂອງພວກຂ້າພະເຈົ້າດັ່ງກ່າວ, ມັນມີແຕ່ຈະເຮັດໃຫ້ການຖົກຖຽງໃນກອງປະຊຸມເພີ່ມຄວາມຫຍຸ້ງ ຍາກ ແລະ ແກ່ດຶງໄປ(ໃຫ້)ຍືດຍາວຢ່າງບໍ່ມີຜົນຫຍັງໝົດ. ພວກທ່ານອ້າງວ່າຈະປະຕິບັດສັນຍາເຊແນວປີ ໑໙໖໒ ຢ່າງເຄັ່ງຄັດ, ແຕ່ຊ້ຳພັດມີແນວຄິດຢາກປ່ຽນແປງແກ້ໄຂສັນຍາເຊແນວ, ພວກທ່ານເວົ້າ ...ການຢຸດ ຍິງ ແລະ ການຖອນທະຫານຕ່າງປະເທດ, ແຕ່ຊ້ຳພັດບໍ່ເວົ້າເຖິງການແກ້ໄຂບັນຫາການເມືອງ, ພວກທ່ານ

ຢາກໃຊ້ຖານະ ແລະ ຮູບຂອງກົດຫມາຍຂອງພວກທ່ານ ເພື່ອບັງຄັບໃຫ້ພວກຂ້າພະເຈົ້າຕ້ອງຮັບເອົາຮູບອັນຫຼ້າສະໄຫມທີ່ເປັນໄປໃນປີ ໑໙໕໔, ໃຫ້ເອົາການປົກຄອງ ແລະ ກອງທັບມາມອບໃຫ້ພວກທ່ານ. ຫມາຍຄວາມວ່າ ພວກທ່ານຈະໃຊ້ການເຈລະຈານັ້ນ ເພື່ອບັງຄັບໃຫ້ພວກຂ້າພະເຈົ້າຍອມຈຳນົນ. ພວກຂ້າພະເຈົ້າຈຶ່ງຢາກຂໍເຕືອນໃຫ້ພວກທ່ານຕື່ມອີກເທື່ອຫນຶ່ງວ່າ ຄວາມຄິດແບບນັ້ນຈະບໍ່ນຳຜົນອັນໃດມາໃຫ້ແກ່ພວກທ່ານເລີຍ. ການເຈລະຈາຈະໄດ້ຮັບຜົນດີກໍ່ຕໍ່ເມື່ອທຸກຝ່າຍມີເຈດຕະນາດີຢາກແກ້ໄຂບັນຫາລາວໂດຍສັນຕິວິທີແທ້, ດຳເນີນການເຈລະຈາ ຢ່າງສະເຫມີພາບກັນຢ່າງແທ້ຈິງ ແລະ ອີງໃສ່ບັນຫາຕົວຈິງຂອງລາວ ໃນປັດຈຸບັນ ເພື່ອແກ້ໄຂບັນຫາລາວ ບົນພື້ນຖານສັນຍາເຊີແນວປີ ໑໙໕໔ ກ່ຽວກັບລາວເທົ່ານັ້ນ. ທ່າທີໃນການເຈລະຈາຂອງພວກທ່ານ ພາໃຫ້ພວກຂ້າພະເຈົ້າຕັ້ງຄວາມຖາມຂຶ້ນວ່າ ເປັນຫຍັງພວກທ່ານຈຶ່ງວາງຖານະອັນບໍ່ສະເຫມີພາບ, ບັງຄັບໃຫ້ພວກຂ້າພະເຈົ້າຍອມຈຳນົນແບບນັ້ນ. ເມື່ອພິຈາລະນາຄັກແນ່ແລ້ວ, ພວກຂ້າພະເຈົ້າກໍ່ພໍເຂົ້າໃຈໄດ້. ພວກທ່ານເຂົ້າໃຈວ່າ ພວກຂ້າພະເຈົ້າທີ່ພວມຕໍ່ສູ້ມີໄຊຢູ່ໃນທຸກສະຫນາມຮົບຄືຈະບໍ່ຍອມຈຳນົນແບບນັ້ນ, ແຕ່ພວກທ່ານກໍ່ວາງບັນຫາແບບນັ້ນອອກ ເພື່ອໃຫ້ຕົກລົງກັນບໍ່ໄດ້ ແລະ ໃຫ້ກອງປະຊຸມຖືກແກ່ດຶງຍືດຍາວອອກໄປ. ເປັນຫຍັງພວກທ່ານຈຶ່ງຢາກແກ່ດຶງກອງປະຊຸມໃຫ້ຍືດຍາວໄປແນວນັ້ນ ? ຖ້າສັງເກດເບິ່ງສະພາບການໃນທົ່ວປະເທດແລ້ວ ກໍ່ເຂົ້າໃຈເລື່ອງນີ້ໄດ້. ດຽວນີ້ພວກທ່ານພວມສົ່ງເຮືອບິນເຂົ້າໄປຖິ້ມລະເບີດ ແລະ ຍິງທຳລາຍເຂດປົດປ່ອຍຂອງພວກຂ້າພະເຈົ້າ ເພີ່ມທະວີຂຶ້ນ, ແລະ ພວກທ່ານພວມເອົາທະຫານໄທເຂົ້າມາລາວເພີ່ມຂຶ້ນຫຼາຍເທື່ອ ແລະ ລວບລວມເອົາກອງທະຫານປະຕິການຝ່າຍຂວາ ໄປຮ່ວມມືກັບບຸກໂຈມຕີເຂົ້າເຂດປົດປ່ອຍຂອງພວກຂ້າພະເຈົ້າ ໃນພາກໃຕ້, ພາກກາງ ແລະ ພາກເຫນືອຂອງລາວ. ຫມາຍຄວາມວ່າ ພວກທ່ານຈະໃຊ້ເວທີກ່າວຮ້າຍປ້າຍສີໃນກອງປະຊຸມ ສົມທົບກັບການບຸກໂຈມຕີທາງດ້ານທະຫານ ເພື່ອກີດຂວາງການແກ້ໄຂບັນຫາລາວໂດຍສັນຕິວິທີ. ເມື່ອເປັນແບບນັ້ນ, ຄວາມທີ່ພວກທ່ານເວົ້າວ່າ ມີຄວາມຮ້ອນຮົນຢາກແກ້ໄຂບັນຫາລາວ ແລະ ຢາກສ້າງຄວາມຖືກຕ້ອງປອງດອງຊາດນັ້ນ ເປັນພຽງແຕ່ຄວາມເວົ້າຫຼອກລວງທາງສຽງພາຍໃນ ແລະ ນອກປະເທດລ້າໆ. ພວກຂ້າພະເຈົ້າເຫັນວ່າ ຄວາມຄິດ, ຄວາມເວົ້າ ແລະ ການກະທຳຂອງພວກທ່ານນັ້ນ ມັນຈະມີແຕ່ນຳຜົນຮ້າຍອັນທີ່ກຸຂອງລ່ວງຫນ້າໄດ້ມາສູ່ປະເທດຊາດຂອງພວກເຮົາ ເຊິ່ງພວກທ່ານຈະຕ້ອງເປັນຜູ້ຮັບຜິດຊອບທັງຫມົດຕໍ່ປະຫວັດສາດຂອງຊາດລາວ.

ທາງຝ່າຍບັນດາກຳລັງຮັກຊາດນີ້, ເຖິງວ່າພວກທ່ານຈະເວົ້າ ແລະ ເຮັດແນວໃດໃສ່ພຽງໃດກໍ່ຕາມ, ພວກຂ້າພະເຈົ້າກໍ່ບໍ່ປ່ຽນແປງເຈດຈຳນົງຂອງຕົນທີ່ຈະອົດທົນພະຍາຍາມຈົນສຸດຄວາມສາມາດເພື່ອໃຫ້ບັນລຸເຖິງຄວາມຖືກຕ້ອງປອງດອງຊາດ ຢ່າງສະເຫມີພາບ, ຍຸດຕິທຳ ແລະ ຖາວອນ. ພວກຂ້າພະເຈົ້າຍັງຖືວ່າ ວິທີການ ໕ ຂໍ້ທີ່ພວກຂ້າພະເຈົ້າໄດ້ສະເຫນີໄປ ແລະ ທີ່ທາງຝ່າຍພວກທ່ານກໍ່ໄດ້ຮັບເອົາເປັນພື້ນຖານການເຈລະຈາແລ້ວນັ້ນ ເປັນວິທີການອັນດຽວທີ່ຈະສາມາດຊ່ວຍໃຫ້ແກ້ໄຂບັນຫາລາວໂດຍສັນຕິວິທີ ດັ່ງກ່າວຂ້າງບົນນີ້. ທຸກຄວາມສະເຫນີທີ່ເຂົ້າຢູ່ໃນຂອບເຂດຂອງວິທີການ ໕ ຂໍ້ດັ່ງກ່າວນັ້ນ ແມ່ນບໍ່ສາມາດຈະຮັບເອົາມາເປັນພື້ນຖານໃຫ້ແກ່ການເຈລະຈາໄດ້ ແລະ ມີແຕ່ຈະເຮັດໃຫ້ການເຈລະຈາຍືດຍາວໄປຢ່າງໄຮ້ຫມາກຜົນລ້າໆ.

ດັ່ງເຫດນັ້ນ ຄະນະຜູ້ແທນບັນດາກຳລັງຮັກຊາດ ຈຶ່ງຂໍເຊີນຊວນບັນດາທ່ານໃນຄະນະຜູ້ແທນຝ່າຍ

ຂອງວຽງຈັນ ຈຶ່ງຄິດຄືນໃໝ່ ແລະ ດັດ ແປງແກ້ໄຂແບບຄິດອັນບໍ່ເໝາະສົມຂອງຕົນ ເພື່ອດຳເນີນການເຈລະຈາຕາມແບບສະເໝີພາບ ເພື່ອວ່າ ເມື່ອການເຈລະຈາບັນລຸຜົນສຳເລັດແລ້ວ ກໍ່ເຂົ້າຮ່ວມກັນໃນວົງສາຄະນາຍາດ ຕາມແບບສະເໝີພາບຄືດຽວກັນ ເພື່ອພ້ອມກັນສ້າງສາປະເທດຊາດບ້ານເມືອງໃຫ້ວັດທະນາຖາວອນ. ພວກຂ້າພະເຈົ້າຂໍເນັ້ນຕື່ມອີກວ່າ ເພື່ອຈະໃຫ້ເຮັດໄດ້ແນວນັ້ນ, ແມ່ນພວກທ່ານຄວນເບິ່ງ ແລະ ຄວນເວົ້າໃຫ້ຖືກຕາມສະພາບການຕົວຈິງຢູ່ລາວ, ຄວນວາງວິທີແກ້ໄຂອັນຍຸດຕິທຳ, ບໍ່ຕີປອງເອົາລັດ ເອົາປຽບກັນ, ບໍ່ໃຊ້ຮູບການໃດໆ ບັງຄັບໃຫ້ຄູ່ເຈລະຈາ ຕ້ອງຍອມຈຳນົນ. ຖ້າບໍ່ເຮັດດັ່ງນັ້ນ, ພວກທ່ານຈະເປັນຜູ້ຮັບຜິດຊອບໝົດທັງສິ້ນ ໃນການບໍ່ຄືບໜ້າ ຂອງການເຈລະຈາຂອງພວກເຮົາ. ທາງຝ່າຍບັນດາກຳລັງຮັກຊາດນີ້, ຍາມໃດກໍ່ຈິງໃຈເຈລະຈາຕາມຫຼັກການ ທີ່ວາງມາຂ້າງບົນນີ້ ແລະ ຈະພະຍາຍາມອົດທົນຕໍ່ໄປອີກຈົນກວ່າ ຈະໃຫ້ການເຈລະຈາບັນລຸຜົນສຳເລັດ, ເຮັດໃຫ້ປະເທດຊາດອັນແສນຮັກຂອງພວກເຮົາ ມີສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເປັນກາງ, ເອກະພາບ ແລະ ວັດທະນາຖາວອນ ສົມດັ່ງຄວາມມຸ່ງມາດ ປາຖະໜາອັນແຮງກ້າຂອງປະຊາຊົນລາວໝົດທັງຊາດ./.

5ème séance
12-11-72

16 NOV 1972

# ຄຳປາໄສ

ຂອງ ທ່ານ ພົນ ສີປະເສີດ ຫົວໜ້າຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ,
ກ່າວໃນວາລະ ປະຊຸມ ເທື່ອທີ ໕ (ວັນທີ ໑໖-໑໑-໗໒).

---

ບັນດາທ່ານ,

ຕາມການແລກປ່ຽນຄວາມຄິດຄວາມເຫັນ ໃນກອງປະຊຸມ ແລະການຄົ້ນຄວ້າ ຄຳປາໄສ ຂອງຄະນະຜູ້ແທນຝ່າຍຂວາວຽງຈັນ ໃນວັນທີ ໗/໑໑/໗໒ ແລ້ວນີ້, ພວກຂ້າພະເຈົ້າ ຍິ່ງເຫັນແຈ້ງວ່າ ພວກທ່ານ ບໍ່ມີຄວາມຈິງໃຈ ໃນການເຈລະຈາ, ເປັນຕົ້ນແມ່ນ ພວກທ່ານ ໄດ້ໃຊ້ ວິທີການຕ່າງໆ ແລະຄຳເວົ້າ ອັນບໍ່ມີເຫດຜົນ ນັບແຕ່ເລື່ອງນ້ອຍ ໄປຫາເລື່ອງໃຫຍ່ ມາຂັດຂວາງ ບໍ່ໃຫ້ກອງປະຊຸມ ເຈລະຈາ ກ້າວໜ້າໄປໄດ້.

ມັນເປັນທຳມະດາຢູ່ແລ້ວວ່າ ທຸກກອງປະຊຸມເຈລະຈາ ຈະຕ້ອງປຶກສາຫາລື ແລະຕົກລົງກັນ ກ່ຽວກັບລະບຽບການກ່ອນ. ໂດຍສະເພາະ ກອງປະຊຸມຂອງພວກເຮົາ ຊຶ່ງແມ່ນກອງປະຊຸມເຈລະຈາ ລະຫວ່າງຄະນະຜູ້ແທນ ຂອງຝ່າຍລາວ ທີ່ກ່ຽວຂ້ອງ ອັນມີຄວາມພົວພັນເຖິງ ໂຊກຊາຕາ ຂອງປະເທດຊາດນັ້ນ, ຍິ່ງຕ້ອງປຶກສາຕົກລົງ ລະບຽບການນຳກັນ ຢ່າງຈິງໃຈສາກ່ອນ. ແຕ່ກົງກັນຂ້າມ, ລະບຽບການທີ່ສອງຝ່າຍ ບໍ່ທັນໄດ້ປຶກສາ ແລະຕົກລົງກັນເທື່ອ, ພວກທ່ານຊ້ຳພັດດື້ດ້ານ ລັກເຮັດໄປຕາມລຳພັງໃຈ ແຕ່ຝ່າຍດຽວ, ບາງບັນຫາກ່ຽວກັບ ລະບຽບການ ທີ່ຕົກລົງກັນແລ້ວ ພວກທ່ານ ກໍ່ບໍ່ປະຕິບັດ. ເຖິງວ່າ ພວກຂ້າພະເຈົ້າ ທັກທ້ວງການກະທຳ ທີ່ບໍ່ຖືກຕ້ອງດັ່ງກ່າວ ຂອງພວກທ່ານ ມາຫລາຍເທື່ອແລ້ວກໍ່ຕາມ, ພວກທ່ານ ກໍ່ບໍ່ໄດ້ເອົາໃຈໃສ່ ຕໍ່ການທັກທ້ວງ ແຕ່ປະການໃດ. ພວກທ່ານ ຢາກບັງຄັບ ໃຫ້ພວກຂ້າພະເຈົ້າ ຮັບຮູ້ ການກະທຳ ທີ່ບໍ່ຖືກຕ້ອງນັ້ນ ຂອງພວກທ່ານ.

ພວກທ່ານ ຍັງຍຶດໝັ້ນ ຢູ່ບໍ່ເຊົາວ່າ ຕົນເປັນຄະນະຜູ້ແທນ ຂອງລັດຖະບານປະສົມ ແຫ່ງຊາດ ໓ ຝ່າຍ ຊຶ່ງໄດ້ຖືກ ຈັກກະພັດອາເມລິກາ ແລະພວກລູກມື ເຮັດລັດຖະປະຫານ ໂຄ່ນລົ້ມໄປແລ້ວແຕ່ປີ ໑໙໖໔ ພຸ້ນ. ໃນວາລະປະຊຸມຫລາຍໆເທື່ອທີ່ຜ່ານມາ, ພວກຂ້າພະເຈົ້າ ກໍ່ໄດ້ຊີ້ອອກ ຢ່າງຈະແຈ້ງແລ້ວວ່າ ອຳນາດການປົກຄອງວຽງຈັນ ປະຈຸບັນນີ້ ເປັນພຽງແຕ່ເຄື່ອງມື ຮັບໃຊ້ນະໂຍບາຍ ດຳເນີນສົງຄາມຮຸກຮານ ຂອງຈັກກະພັດອາເມລິກາ ຢູ່ລາວເທົ່ານັ້ນ, ມັນບໍ່ສາມາດ ຕາງໜ້າໃຫ້ໃຜໄດ້, ນອກຈາກ ເປັນຕົວແທນໃຫ້ແກ່ ກຸ່ມນິຍົມ ອາເມລິກາ ເທົ່ານັ້ນ.

ໃນ ຄຳປາໄສ ວັນທີ ໓໑/໑໐/໗໒ ແລະວັນທີ ໗/໑໑/໗໒ ນັ້ນ, ພວກທ່ານເອງ ກໍ່ໄດ້ຮັບສາລະພາບວ່າ ອັນທີ່ພວກທ່ານເອີ້ນວ່າ "ລັດຖະບານປະສົມ ແຫ່ງຊາດ ໓ ຝ່າຍ" ໄດ້ມີການດັດແປງໄປມາຫລາຍເທື່ອແລ້ວ ໂດຍຝ່າຍດຽວ. ເມື່ອເປັນແບບນັ້ນ, ເຮັດແນວໃດ ພວກທ່ານຈຶ່ງມາອ້າງວ່າ ລັດຖະບານປະສົມ ແຫ່ງຊາດ ໓ ຝ່າຍ ຍັງຄົງຕົວຢູ່. ການປ່ຽນແປງໂດຍຝ່າຍດຽວ ດັ່ງກ່າວນັ້ນ, ເປັນການທຳລາຍ ຫລັກການຈັດຕັ້ງ, ພາກສ່ວນປະກອບ, ກໍຄື ຫລັກການເຮັດວຽກ ຂອງລັດຖະບານປະສົມ ແຫ່ງຊາດ ໓ ຝ່າຍ ທີ່ໄດ້ລະບຸໄວ້ ໃນສັນຍາ ຊູລິກ ແລະ ທົ່ງໄຫຫີນ ຢ່າງສິ້ນເຊີງ.

ເບິ່ງເລິກເຂົ້າໄປ ໃນດ້ານນະໂຍບາຍ ພາຍໃນ ແລະຕ່າງປະເທດ, ກໍຄື ການກະທຳຂອງມັນແລ້ວ, ກໍແຈ້ງເຫັນໄດ້ ຢ່າງຈະແຈ້ງທີ່ສຸດວ່າ ອຳນາດການປົກຄອງວຽງຈັນ ປະຈຸບັນນີ້, ເປັນຜູ້ທໍລະຍົດ ຕໍ່ຜົນປະໂຫຍດຂອງຊາດ, ເປັນເຄື່ອງມື ຮັບໃຊ້ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາ, ທຳລາຍສັນຍາເຈນີວປີ ໑໙໕໔ ກ່ຽວກັບລາວ ຢ່າງເປີດເຜີຍ. ຄືດັ່ງທຸກຄົນໄດ້ຮູ້ແລ້ວ, ດັ່ງແຕ່ລັດຖະບານປະສົມແຫ່ງຊາດ ໓ ຝ່າຍ ໄດ້ຖືກໂຄ່ນລົ້ມ ເມື່ອເດືອນ ໔/໑໙໖໔ ເປັນຕົ້ນມາ, ອຳນາດການປົກຄອງວຽງຈັນ ໄດ້ປະຖິ້ມ ນະໂຍບາຍ ສັນຕິພາບ ເປັນກາງ ໃນທັນທີ, ແລ້ວລົງມືປະຕິບັດ ນະໂຍບາຍ ກໍ່ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາຢູ່ລາວ ຢ່າງບໍ່ອາຍເປີດເຜີຍ, ໃຊ້ກຳລັງທະຫານເປັນຈຳນວນຫຼວງຫຼາຍ ເປີດບັ້ນບຸກໂຈມຕີເຂົ້າເຂດປົດປ່ອຍ ຢ່າງຂະຫນານໃຫຍ່ ທີ່ບໍ່ເຄີຍເຫັນມາແຕ່ກ່ອນ, ເຊັ່ນ ບັ້ນຮົບ ໓ ສອນ, ສອນໄຊ, ສີໂຄດຕະບອງ ແລະ ອື່ນໆ ເຊິ່ງລ້ວນແຕ່ເກີດຂຶ້ນໃນກາງປີ ໑໙໖໔ ທັງນັ້ນ; ໂດຍສະເພາະ ເລີ່ມແຕ່ວັນທີ ໑໗/໕/໖໔ ເປັນຕົ້ນມາ, ຍົນຂອງອາເມລິກາທຸກຊະນິດ ກໍໄດ້ເປີດການໂຈມຕີຖິ້ມລະເບີດ ໃສ່ດິນແດນລາວໂດຍກົງ; ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາຢູ່ລາວ ແລະ ອິນດູຈີນເພີ່ມຄວາມຮ້າຍແຮງຂຶ້ນທີ່ໃດ, ອຳນາດການປົກຄອງລູກມື ຂອງອາເມລິກາຢູ່ລາວ ກໍໄດ້ຖືກດັດແປງ ໃຫ້ເປັນເຄື່ອງມືປະຕິການ ໃນການຮັບໃຊ້ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາຫຼາຍຂຶ້ນຖືກໃຈ. ມັນຕັ້ງແນ່ນຈັກກະພັດອາເມລິກາ ແລະ ອຳນາດການປົກຄອງວຽງຈັນນັ້ນເອງ ສົມຮູ້ຮ່ວມຄິດກັນ ເອົາຍົນມາຖິ້ມລະເບີດ, ນຳເອົາທີ່ປຶກສາ, ນາຍທະຫານ ແລະ ພົນທະຫານຂອງອາເມລິກາ, ກອງທະຫານຫຸ່ນໄຊ່ງ່ອນ, ແລະ ກອງທະຫານປະຕິການໄທ ເປັນຫມື່ນໆ, ພ້ອມທັງສາດາອາວຸດຂອງອາເມລິກາ ຢ່າງຫຼວງຫຼາຍເຂົ້າມາ ເຂັ່ນຂ້າທຳລາຍປະຊາຊົນເຮົາ, ຈູດເລົ້າເຂົ້າເຜົາຫຼັງເຮືອນ, ທຳລາຍບ້ານເພໄຮ່ນາຮົ້ວສວນ ຕະຫຼອດວັດວາອາຮາມ ທີ່ເປັນສິ່ງສັກກະລະບູຊາ ຂອງປະຊາຊົນເຮົາ, ອັນເປັນການກໍ່ໂທດກຳລືນຟ້າ ເຫຼືອແຜ່ນດິນ ຕໍ່ປະຊາຊົນເຮົາ.

ບໍ່ພຽງແຕ່ເທົ່ານັ້ນ, ເຂດຄວບຄຸມ ຂອງພວກເຂົາໄດ້ກາຍເປັນເມືອງຂຶ້ນແບບໃຫມ່ ຂອງຈັກກະພັດອາເມລິກາຢ່າງເຕັມຂັ້ນ, ເສດຖະກິດປັ່ນປ່ວນຢ່າງຮ້າຍແຮງ, ການຜະລິດ ແລະ ເສດຖະກິດພື້ນຖານພາຍໃນປະເທດ ຖືກທຳລົ້ມຈົມລົງຫັກໄຊ້, ເງິນກີບນັບມື້ນັບລົງລາຄາ ຈົນກາຍເປັນເງິນເຟີ້, ຄ່າຄອງຊີບຖີບຂຶ້ນສູງ ອັນເປັນເຫດໃຫ້ຊີວິດການເປັນຢູ່ຂອງປະຊາຊົນເຮົາ ອັດຕະຄັດ ຂັດສົນ, ເດືອດຮ້ອນຢ່າງຫນັກ, ໂດຍສະເພາະແມ່ນຢູ່ໃນຕົວເມືອງ, ເຮັດໃຫ້ວັດທະນະທຳ ສັງຄົມ ອັນເນົ່າເຫມັນ, ເປື້ອນເປິະ ຂອງອາເມລິກາ ເຂົ້າມາເບື່ອເມົາ ປະຊາຊົນເຮົາ, ເຮັດໃຫ້ວັດທະນະທຳ, ຮີດຄອງປະເພນີ ແລະ ມູນເຊື້ອອັນດີງາມ, ສີສັນຂອງຊາດ ນັບມື້ນັບເສົ້າຫມອງ ແລະ ເສື່ອມໂຊມລົງ.

ໃນຂະນະດຽວກັນນັ້ນ, ພວກຂວາຈັດຈ່ອມຫນຶ່ງ ໃນອຳນາດການປົກຄອງວຽງຈັນ ທີ່ເປັນລູກມືຮັບໃຊ້ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາຢູ່ລາວ, ຂາຍຜົນປະໂຫຍດຂອງຊາດນັ້ນ, ຊ້ຳພັດກາຍເປັນຜູ້ຮັ່ງຜູ້ມີ ເປັນເສດຖີ ຂຶ້ນຢ່າງໄວວາ. ຍ້ອນຫຍັງ ພວກເຂົາຈຶ່ງຮັ່ງມີຄືແນວນັ້ນ ? ຄັນບໍ່ແມ່ນໄດ້ມາຈາກ ການຂາຍ ຜົນປະໂຫຍດ ສ່ວນລວມຂອງຊາດ, ປະຕິບັດຕາມຄຳສັ່ງ ແລະ ຮັບໃຊ້ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາ. ແມ່ນພວກນີ້ເອງທີ່ເກາະຫັງ ເປັນເຄື່ອງມືໃຫ້ຈັກກະພັດອາເມລິກາສືບຕໍ່ສົງຄາມຮຸກຮານ, ເອົາຊີວິດ ເລືອດເນື້ອ ຂອງຊາວຫນຸ່ມລາວ, ຂອງທະຫານ ໄປລົ້ມຕາຍຕາງພວກ

ເຂົາ ເພື່ອແລກເອົາເງິນໂດລາອາເມລິກາ, ເຮັດໃຫ້ລູກເມຍເຂົາເຈົ້າ ກາຍເປັນແມ່ຮ້າງນາງຫມ້າຍ ຢ່າງຫນ້າສົມເພດເວທະນາ ຄືຊຸມນີ້. ໃນສະພາບທີ່ບ້ານເມືອງເຮົາ ພວມຕົກຢູ່ໃນຄວາມເດືອດຮ້ອນ, ປະຊາຊົນພວມຕົກທຸກໄດ້ຍາກ ແລະ ບາດເຈັບລົ້ມຕາຍ ຍ້ອນລະເບີດລູກປືນ ຂອງຈັກກະພັດອາເມລິກາ ຄືແນວນັ້ນ, ພວກລູກມືຈັກກະພັດອາເມລິກາ ຊ້ຳພັດເບີກບານ ສຳລານໃຈ, ພ້ອມກັນສະເຫວີຍສຸກ ຢູ່ເທິງ ກອງກະດູກ, ບວກເລືອດ, ບວກນ້ຳຕາ ຂອງປະຊາຊົນ, ຂ້າລາຊະການ, ທະຫານ ແລະ ຕຳຫຼວດ.

ເມື່ອເປັນແນວນັ້ນ, ອຳນາດການປົກຄອງວຽງຈັນປະຈຸບັນນີ້ ຈະອ້າງວ່າ ຍັງເປັນ "ລັດຖະບານປະສົມແຫ່ງຊາດ ໒ ຝ່າຍ" ນັ້ນແມ່ນບໍ່ຖືກຕ້ອງຈັກດີ້, ເພາະມັນໄດ້ກາຍເປັນເຄື່ອງມື ຮັບໃຊ້ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາແລ້ວ. ຂ່າວສານອຸເປອີ ຂອງອາເມລິກາ ເມື່ອວັນທີ ໒໑/ ໒/ ໑໙໗໓ ກໍ່ໄດ້ດີລາຄາວ່າ "ບໍ່ແມ່ນວ່າ ອາເມລິກາຄວບຄຸມ ອຳນາດການປົກຄອງວຽງຈັນແຕ່ບົນ ພື້ນຜິວໜ້ານັ້ນ, ແຕ່ຍັງຄວບຄຸມແຕ່ບົນທີ່ສຸດ ເພື່ອໃຊ້ພວກນີ້ ເຂົ້າໃນການປະຕິບັດ ແຜນການທີ່ວາງອອກຢູ່ ໂຮໂນລູລູ" (ໝາຍຄວາມວ່າ ກອງປະຊຸມຜູ້ຊ່ຽວຊານການທູດ ແລະ ການທະຫານຊັ້ນສູງ ຂອງອາເມລິກາ ທີ່ໂຮມປະຊຸມຢູ່ ໂຮໂນລູລູ ເມື່ອເດືອນ ໗/ ໑໙໗໔).

ພວກທ່ານ ບໍ່ມີສິດຫຍັງທີ່ຈະອ້າງເອົາ ຊື່ ແລະ ຖານະຂອງລັດຖະບານປະສົມແຫ່ງຊາດ ໒ ຝ່າຍ ມາເຈລະຈາກັບບັນດາ ກຳລັງຮັກຊາດຢ່າງບໍ່ສະເໝີພາບ. ການທີ່ພວກທ່ານ ຍັງຊຸ້ຊົງຮັກສາຊື່ ແລະ ຖານະຂອງລັດຖະບານດັ່ງກ່າວ, ຮັກສາທາງໄວ້ໃນຫ້ອງປະຊຸມ ເຊິ່ງສອງຝ່າຍບໍ່ທັນໄດ້ຕົກລົງກັນເທື່ອ, ແລະ ຍັງນຳເອົາຜູ້ຕາງໜ້າຂອງອັນທີ່ເອີ້ນວ່າ "ສະພາ" ມາເປັນຜູ້ສັງເກດການ, ທັງໆທີ່ຜູ້ຕາງໜ້າ ຂອງຄະນະຜູ້ແທນທັງສອງຝ່າຍ ໄດ້ເຫັນດີນຳກັນວ່າ ໃຫ້ຍົກເລີກແລ້ວນັ້ນ. ທັງໝົດເຫຼົ່ານັ້ນລ້ວນແຕ່ ແມ່ນໄສຢາກບັງຄັບໃຫ້ບັນດາກຳລັງຮັກຊາດ ຮັບຮູ້ອັນທີ່ເອີ້ນວ່າ "ລັດຖະບານ" ແລະ "ສະພາ" ຂອງຝ່າຍຊາວວຽງຈັນ ອັນເປັນການຂັດຂວາງ ການເຈລະຈາບໍ່ໃຫ້ຄືບໜ້າໄປໄດ້.

ອີກປະການໜຶ່ງ, ພວກທ່ານໄດ້ເອີ້ນຊື່ ຄະນະຜູ້ແທນບັນດາກຳລັງຮັກຊາດວ່າ ເປັນຄະນະຜູ້ແທນແນວລາວຮັກຊາດ, ເຊິ່ງໃນຕົວຈິງແລ້ວ, ຄະນະຜູ້ແທນ ບັນດາກຳລັງຮັກຊາດພວກຂ້າພະເຈົ້າປະກອບດ້ວຍຜູ້ຕາງໜ້າຂອງແນວລາວຮັກຊາດ, ແລະ ຜູ້ຕາງໜ້າກຳລັງເປັນກາງຮັກຊາດ. ດັ່ງທຸກຄົນໄດ້ຮູ້ແລ້ວວ່າ, ກຳລັງເປັນກາງຮັກຊາດແມ່ນຍຶດຖື ອຸດົມຄະຕິ ຂອງການລັດຖະປະຫານ ໙/ ໘/ ໖໐, ມັນໄດ້ເຕີບໃຫຍ່ຂະຫຍາຍຕົວ ແລະ ມີບົດບາດ ຢູ່ພາຍໃນ ແລະ ຕ່າງປະເທດ, ມັນໄດ້ສາມັກຄີພົວພັນ ແລະ ຮ່ວມບ່າຮ່ວມໄຫຼ່ກັບ ແນວລາວຮັກຊາດ ດຳເນີນການຕໍ່ສູ້ກູ້ຊາດ ຕ້ານຈັກກະພັດອາເມລິກາຕະຫຼອດມາ. ມັນຕ່າງກັບທີ່ສຸດກັບ ອັນທີ່ເອີ້ນວ່າ "ກຳລັງເປັນກາງ" ຂອງພວກທ່ານ ທີ່ໄດ້ຍຸບຕົວເອງ ແລະ ປະກາດເຂົ້າກັບຝ່າຍຂວາ ນັບຕັ້ງແຕ່ເດືອນ ໖/ ໑໙໗໔ ພຸ້ນແລ້ວ. ການທີ່ພວກທ່ານເອີ້ນຊື່ຂອງ ຝ່າຍບັນດາກຳລັງຮັກຊາດ ຢ່າງບໍ່ຖືກຕ້ອງນັ້ນ, ມັນສະແດງໃຫ້ເຫັນວ່າ ພວກທ່ານມີເຈດຕະນາ ຢາກຍຸບຍອບຖານະຂອງຄະນະຜູ້ແທນ ບັນດາກຳລັງຮັກຊາດ ເພື່ອເຈລະຈາຢ່າງບໍ່ສະເໝີພາບ. ພວກທ່ານຖືວ່າ ກອງປະຊຸມເຈລະຈານີ້, ຄືກັນກັບກອງປະຊຸມ ກັບຂັ້ນຕ່າງໆ ທີ່ຢູ່ໃຕ້ອຳນາດຂອງພວກທ່ານ. ເລື່ອງນີ້ ແມ່ນເປັນໄປບໍ່ໄດ້ຢ່າງເດັດຂາດ. ນັ້ນກໍ່ເພື່ອຂັດຂວາງ ບໍ່ໃຫ້ກອງປະຊຸມກ້າວເຂົ້າ ໄປຕາມເນື້ອໃນໄດ້, ພວກທ່ານ ຕ້ອງຮັບຜິດຊອບກ່ຽວກັບ ພຶດຕິກຳອັນຂາດເຈດຕະນາດີ ຂອງພວກທ່ານທຸກປະການ.

ເຂົາ ເພື່ອແລກເອົາເງິນໂດລາອາເມລິກາ, ເຮັດໃຫ້ລູກເມຍເຂົາເຈົ້າ ກາຍເປັນແມ່ຮ້າງບາງໜ້າງ ຢ່າງໜ້າສົມເພດເວທະນາ ຄືຊຸມນີ້. ໃນສະພາບທີ່ບ້ານເມືອງເຮົາ ພວມຕົກຢູ່ໃນຄວາມເດືອດຮ້ອນ, ປະຊາຊົນພວມຕົກທຸກໄດ້ຍາກ ແລະ ບາດເຈັບລົ້ມຕາຍ ຍ້ອນລະເບີດລູກປືນ ຂອງຈັກກະພັດອາເມລິກາ ຄືແນວນັ້ນ, ພວກລູກມືຈັກກະພັດອາເມລິກາ ຊ້ຳພັດເບີກບານ ສຳລານໃຈ, ພ້ອມກັນສະເຫວີຍສຸກ ຢູ່ເທິງກອງກະດູກ, ນອກເລືອດ, ນອກນ້ຳຕາ ຂອງປະຊາຊົນ, ຂ້າລາຊະການ, ທະຫານ ແລະ ຕຳຫຼວດ.

ເມື່ອເປັນແນວນັ້ນ, ອຳນາດການປົກຄອງວຽງຈັນປະຈຸບັນນີ້ ຈະອ້າງວ່າ ຍັງເປັນ "ລັດຖະບານປະສົມແຫ່ງຊາດ ໓ ຝ່າຍ" ນັ້ນແມ່ນບໍ່ຖືກຕ້ອງຈັກດີ້, ເພາະມັນໄດ້ກາຍເປັນເຄື່ອງມື ຮັບໃຊ້ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາແລ້ວ. ຂ່າວສານຂູເປີ ຂອງອາເມລິກາ ເມື່ອວັນທີ ໓໑/ ໓/ ໑໙໖໓ ກໍ່ໄດ້ຕີລາຄາວ່າ "ບໍ່ແມ່ນວ່າ ອາເມລິກາຄວບຄຸມ ອຳນາດການປົກຄອງວຽງຈັນແຕ່ບົນພື້ນຄວບທີ່ນັ້ນ, ແຕ່ຍັງຄວບຄຸມແຕ່ບົນທີ່ສຸດ ເພື່ອໃຊ້ພວກນີ້ ເຂົ້າໃນການປະຕິບັດ ແຜນການທີ່ວາງອອກຢູ່ ໂຮໂນລູລູ"_(ໝາຍຄວາມວ່າ ກອງປະຊຸມຊີ້ນຳອຳນາດການທູດ ແລະ ການທະຫານຊັ້ນສູງ ຂອງອາເມລິກາ ທີ່ໂຮມປະຊຸມຢູ່ໂຮໂນລູລູ ເມື່ອເດືອນ ໗/ ໑໙໖໔).

ພວກທ່ານ ບໍ່ມີສິດທີ່ຈະອ້າງເອົາ ຊື່ ແລະ ຖານະຂອງລັດຖະບານປະສົມແຫ່ງຊາດ ໓ ຝ່າຍ ມາເຈລະຈາກັບບັນດາ ກຳລັງຮັກຊາດຢ່າງບໍ່ສະເໝີພາບ. ການທີ່ພວກທ່ານ ຍັງຊຸຊີ້ຮັກສາຊື່ ແລະ ຖານະຂອງລັດຖະບານດັ່ງກ່າວ, ຮັກສາທາງໄວ້ໃນຫ້ອງປະຊຸມ ເຊິ່ງສອງຝ່າຍບໍ່ທັນໄດ້ຕົກລົງກັນເທື່ອ, ແລະ ຍັງນຳເອົາຜູ້ຕາງໜ້າຂອງອັນທີ່ເອີ້ນວ່າ "ສະພາ" ມາເປັນຜູ້ສັງເກດການ, ທັງໆທີ່ຜູ້ຕາງໜ້າ ຂອງຄະນະຜູ້ແທນທັງສອງຝ່າຍ ໄດ້ເຫັນດີນຳກັນວ່າ ໃຫ້ຍົກເລີກແລ້ວນັ້ນ. ທັງໝົດເຫຼົ່ານັ້ນລ້ວນແຕ່ ແນໃສ່ຢາກບັງຄັບໃຫ້ບັນດາກຳລັງຮັກຊາດ ຮັບຮູ້ອັນທີ່ເອີ້ນວ່າ "ລັດຖະບານ" ແລະ "ສະພາ" ຂອງຝ່າຍຂວາວຽງຈັນ ອັນເປັນການຂັດຂວາງ ການເຈລະຈາບໍ່ໃຫ້ຄືບໜ້າໄປໄດ້.

ອີກປະການໜຶ່ງ, ພວກທ່ານໄດ້ເອີ້ນຊື່ ຄະນະຜູ້ແທນບັນດາກຳລັງຮັກຊາດວ່າ ເປັນຄະນະຜູ້ແທນແນວລາວຮັກຊາດ, ເຊິ່ງໃນຕົວຈິງແລ້ວ, ຄະນະຜູ້ແທນ ບັນດາກຳລັງຮັກຊາດພວກຂ້າພະເຈົ້າປະກອບດ້ວຍຜູ້ຕາງໜ້າຂອງແນວລາວຮັກຊາດ, ແລະ ຜູ້ຕາງໜ້າກຳລັງເປັນກາງຮັກຊາດ. ດັ່ງທຸກຄົນໄດ້ຮູ້ແລ້ວວ່າ, ກຳລັງເປັນກາງຮັກຊາດແມ່ນຍຶດຖື ອຸດົມຄະຕິ ຂອງການລັດຖະປະຫານ ໙/ ໘/ ໖໐, ມັນໄດ້ເຕີບໃຫຍ່ຂະຫຍາຍຕົວ ແລະ ມີບົດບາດ ຢູ່ພາຍໃນ ແລະ ຕ່າງປະເທດ, ມັນໄດ້ສາມັກຄີພັນ ແລະ ຮ່ວມບ່າຮ່ວມໄຫຼ່ກັບ ແນວລາວຮັກຊາດ ດຳເນີນການຕໍ່ສູ້ກູ້ຊາດ ຕ້ານຈັກກະພັດອາເມລິກາຕະຫຼອດມາ. ມັນຕ່າງກັບທີ່ສຸດກັບ ອັນທີ່ເອີ້ນວ່າ "ກຳລັງເປັນກາງ" ຂອງພວກທ່ານ ທີ່ໄດ້ຍຸບຕົວເອງ ແລະ ປະກາດເຂົ້າກັບຝ່າຍຂວາ ນັບຕັ້ງແຕ່ເດືອນ ໖/ ໑໙໖໔ ພຸ້ນແລ້ວ. ການທີ່ພວກທ່ານເອີ້ນຊື່ຂອງ ຝ່າຍບັນດາກຳລັງຮັກຊາດ ຢ່າງບໍ່ຖືກຕ້ອງນັ້ນ, ມັນສະແດງໃຫ້ເຫັນວ່າ ພວກທ່ານມີເຈດຕະນາ ຢາກຍຸບຍອບຖານະຂອງຄະນະຜູ້ແທນ ບັນດາກຳລັງຮັກຊາດ ເພື່ອເຈລະຈາຢ່າງບໍ່ສະເໝີພາບ. ພວກທ່ານຖືວ່າ ກອງປະຊຸມເຈລະຈານີ້, ຄືກັນກັບກອງປະຊຸມ ກັບຂັ້ນຕ່າງໆ ທີ່ຢູ່ໃຕ້ອຳນາດຂອງພວກທ່ານ. ເລື່ອງນີ້ ແມ່ນເປັນໄປບໍ່ໄດ້ຢ່າງເດັດຂາດ. ນັ້ນກໍ່ເພື່ອຂັດຂວາງ ບໍ່ໃຫ້ກອງປະຊຸມກ້າວເຂົ້າ ໄປຫາເບື້ອງໜ້າໄດ້, ພວກທ່ານ ຕ້ອງຮັບຜິດຊອບກ່ຽວກັບ ພຶດຕິກຳອັນຂາດເຈດຕະນາດີ ຂອງພວກທ່ານທຸກປະການ.

ໃນວາລະປະຊຸມເມື່ອວັນທີ ໗/໑໑/໗໔ ແລ້ວນີ້, ພວກທ່ານ ຍັງຊູຊີ ປະຕິເສດຄວາມຈິງ ກ່ຽວກັບການຮຸກຮານ ຂອງຈັກກະພັດອາເມລິກາຢູ່ລາວ ເຊິ່ງພວກຂ້າພະເຈົ້າ ກໍໄດ້ອະທິບາຍ ແລະອ້າງເຫດຜົນ ຢ່າງກະຈ່າງແຈ້ງມາແລ້ວ. ແຕ່ພວກທ່ານຊ້ຳພັດ ກັບມາໃສ່ຮ້າຍປ້າຍສີ ຖິ້ມໂທດໃສ່ ບັນດາກຳລັງຮັກຊາດ ແລະຜູ້ອື່ນໆ ຢ່າງໄຮ້ມູນຄວາມຈິງ ເພື່ອປົກປິດໂທດກຳ ອັນໜັກໜາ ຂອງຈັກກະພັດອາເມລິກາ ຕໍ່ປະຊາຊົນເຮົາ.

ການທີ່ຈັກກະພັດອາເມລິກາ ເປັນຜູ້ກໍ່ເລີກສົງຄາມຂຶ້ນ ໃນບ້ານເມືອງເຮົາ ຕະຫລອດເກືອບ ໒໐ ປີມານີ້ ແລະເປັນຜູ້ສ້າງຄວາມທຸກ ທໍລະມານ, ຄວາມເຈັບເປັນ ລົ້ມຕາຍ ໃສ່ປະຊາຊົນເຮົານັ້ນ, ນັ້ນບໍ່ມີຜູ້ໃດ ຈະປະຕິເສດໄດ້. ດັ່ງທີ່ພວກຂ້າພະເຈົ້າ ເຄີຍໄດ້ເວົ້າມາແລ້ວ, ຈັກກະພັດອາເມລິກາ ໄດ້ມີໂຄງການ ດຳເນີນສົງຄາມ ລ່າເມືອງຂຶ້ນແບບໃໝ່ ຂອງມັນຢູ່ ອາຊີ ອາຄະເນ, ໃນນັ້ນນັບທັງຢູ່ໃນລາວເຮົາ ມາຕັ້ງແຕ່ດົນແລ້ວ. ໃນໂຄງການເຄື່ອນໄຫວ ຂອງ ສະພາ ຄວາມປອດໄພ ຂອງອາເມລິກາ ເຊິ່ງວາງອອກເມື່ອວັນປີ ໑໙໕໔ ກໍໄດ້ມີຕອນເວົ້າອອກ ຢ່າງຈະແຈ້ງວ່າ: "ກ່ຽວກັບ ອາຊີ ອາຄະເນ, ສະຫະລັດອາເມລິກາ ຕ້ອງມີການເຄື່ອນໄຫວ ເພື່ອໃຫ້ຂົງເຂດນີ້ ເຂົ້າໃນແຖວ ຂອງໂລກເສລີກວ່າເກົ່າ" ແລະ "ຕ້ອງປັບປຸງລັດຖະບານພື້ນເມືອງ ໃນຂົງເຂດນີ້ ໃຫ້ເຂັ້ມແຂງ". ໃນລາຍງານ ຂອງຄະນະກຳມະການພິເສດ ຂອງອາເມລິກາ ກ່ຽວກັບອັນທີ່ເອີ້ນວ່າ "ການຂົ່ມຂູ່ ຂອງກອມມູນິດ" ເມື່ອປີ ໑໙໕໔ ນັ້ນ ກໍໄດ້ເວົ້າວ່າ "ສະຫະລັດອາເມລິກາ ບໍ່ມີນະໂຍບາຍອັນໃດ ນອກຈາກເອົາຊະນະທາງທະຫານ ໃນອິນດູຈີນ", ໃນເດືອນ ໗/໑໙໕໔, ກອງປະຊຸມ ນັກການທູດ ແລະຜູ້ຊ່ຽວຊານການທະຫານຊັ້ນສູງ ຂອງອາເມລິກາ ກໍໄດ້ໄຂປະຊຸມກັນຢູ່ ໄຊໃນດູດູ ເພື່ອປຶກສາ ອັນທີ່ເອີ້ນວ່າ "ແຜນການເພື່ອທະລໍ ຕ້ານກອມມູນິດຢູ່ ອາຊີ ອາຄະເນ ໂດຍສະເພາະແມ່ນຢູ່ ລາວ ແລະພາກໃຕ້ຫວຽດນາມ". ຫລັກຖານພິຍານບາງຢ່າງເຊິ່ງແມ່ນກະໂຕຄົງການກຳອຳນາດ ຂອງອາເມລິກາເອງ ເປີດເຜີຍອອກ ດັ່ງທີ່ຂ້າພະເຈົ້າ ໄດ້ຍົກຂຶ້ນໃນວາລະປະຊຸມນັ້ນ ກໍຄືເທື່ອກ່ອນນັ້ນ, ມັນເປັນການເປີດແປຢ່າງ ກະຈ່າງແຈ້ງທີ່ສຸດ ກ່ຽວກັບກົນອຸບາຍພື້ນຖານ ແລະການກະທຳຕົວຈິງ ຂອງຈັກກະພັດອາເມລິກາ ໃນການຮຸກຮານລາວ. ໃນເມື່ອຈັກກະພັດອາເມລິກາ ຜູ້ເປັນເຈົ້າຂອງ ໂຄງການດຳເນີນ ສົງຄາມຮຸກຮານລາວ, ແລະເປັນຜູ້ຄອບງຳ ອຳນາດການປົກຄອງວຽງຈັນ ເວົ້າອອກແນວນັ້ນ, ເຮັດແນວໃດ ພວກທ່ານ ຈຶ່ງຈະປະຕິເສດ ແລະປົກປິດເລື່ອງນີ້ ໄວ້ໄດ້ ? ຖ້າຜູ້ໃດຫາກມີ ຄຳເວົ້າ ແລະການກະທຳ ເພື່ອປົກປິດເລື່ອງນີ້ໄວ້, ນັ້ນກໍແມ່ນເປີດແປໃບໜ້າ ເປັນລູກມື ຜູ້ບໍລິສຸດ ຂອງຈັກກະພັດອາເມລິກາ, ເປັນທໍ່ລະໂຄງ ຮ້ອງໄຮ ປະສານສຽງ ໃຫ້ຈັກກະພັດອາເມລິກາ ສືບຕໍ່ສົງຄາມຮຸກຮານ ແລະທຳລາຍປະຊາຊົນເຮົາ ໃຫ້ຍືດເຍື້ອ ໄປອີກນັ້ນ.

ໃນຄຳປາໄສ ຂອງພວກທ່ານ ເມື່ອວັນທີ ໗ ແລ້ວນີ້, ພວກທ່ານ ກໍບໍ່ໄດ້ລະເວັ້ນ ໃນການໃສ່ຮ້າຍປ້າຍສີ ບັນດາກຳລັງຮັກຊາດ, ແລະປະຊາຊົນ ບັນດາປະເທດອິນດູຈີນ ທີ່ສາມັກຄີກັນຕໍ່ສູ້ ຕ້ານການຮຸກຮານ ຂອງຈັກກະພັດອາເມລິກາ. ຄຳໃສ່ຮ້າຍປ້າຍສີ ຂອງພວກທ່ານ ດັ່ງກ່າວນັ້ນ ແມ່ນໄຮ້ເຫດຜົນທີ່ສຸດ. ປະຊາຊົນໃນທົ່ວໂລກ ໃຜກໍຮູ້ຄັກແລ້ວວ່າ ແມ່ນຈັກກະພັດອາເມລິກາ ເປັນຜູ້ຮຸກຮານລາວ, ແລະຮຸກຮານທົ່ວອິນດູຈີນ. ໃນເມື່ອປະເທດຊາດຖືກ ຈັກກະພັດອາເມລິກາຮຸກຮານ ຄືແນວນັ້ນ, ມັນເປັນທຳມະດາທີ່ ບັນດາກຳລັງຮັກຊາດລາວ, ແລະປະຊາຊົນລາວທົ່ວຊາດ ຕ້ອງສາມັກຄີກັນ ແລະພ້ອມກັນລຸກຂຶ້ນ ຕໍ່ຕ້ານການຮຸກຮານ ຂອງພວກມັນ ເພື່ອປົກປັກຮັກສາ ເອກະລາດ ແລະອະທິປະໄຕ

ຂອງຊາດ. ນັ້ນ, ແມ່ນສິດປ້ອງກັນຕົວ ອັນຊອບທຳ, ຖືກຕ້ອງ ແລະສົມເຫດສົມຜົນທີ່ສຸດ. ໃນເມື່ອປະຊາຊົນ ໓ ຊາດຢູ່ໃນອິນດູຈີນ ສາມັກຄີກັນ ແລະປະສົມປະສານ ການສູ້ຮົບ ຕ້ານຈັກກະພັດອາເມລິກາ ຜູ້ເປັນສັດຕູລວມ ຂອງເຂົາເຈົ້າ ເພື່ອຄວາມເປັນ ເອກະລາດ, ອະທິປະໄຕ ຂອງປະເທດໃຜລາວ, ແລະເພື່ອສັນຕິພາບ ຢູ່ໃນຂົງເຂດນີ້. ຜູ້ໃດ ຫລືກຸ່ມໃດ ທີ່ບໍ່ເຫັນດີນຳຜູ້ທີ່ຮັກຊາດ ຕ້ານການຮຸກຮານ, ແລ້ວຊູ້ພັດ ໄປເຫັນພ້ອມ ນຳຈັກກະພັດອາເມລິກາ ຜູ້ມາຮຸກຮານ, ແລະໃສ່ຮ້າງປ້າງສີຜູ້ຮັກຊາດນັ້ນ, ມັນກໍແຈ້ງ ປານກາງເວັນແລ້ວວ່າ ຜູ້ນັ້ນ ຫລື ກຸ່ມນັ້ນ ລ້ວນແຕ່ແມ່ນລູກມື ຜູ້ບອກໄດ້ໃຊ້ຟັງ ຂອງຈັກກະພັດອາເມລິກາ ຢ່າງສິ້ນເຊີງ, ແມ່ນພວກເຂົາຕັ້ງແກ້ງ ຢາກໃຫ້ຈັກກະພັດອາເມລິກາ ສືບຕໍ່ແກວ່ງສົງຄາມຮຸກຮານລາວ ກໍຄື ອິນດູຈີນ ໃຫ້ຍືດເຍື້ອໄປ. ເມື່ອເປັນແນວນັ້ນ, ຄຳໂຄສະນາ ໃສ່ຮ້າງປ້າງສີ ຂອງພວກທ່ານ ແມ່ນບໍ່ສາມາດ ຈະຫລອກລວງ ໃຜໄດ້ຢ່າງເດັດຂາດ.

ໃນຂະນະ ທີ່ພວກທ່ານ ໃສ່ຮ້າງປ້າງສີ ບັນດາກຳລັງຮັກຊາດ ຢ່າງບໍ່ກະດາກປາກນັ້ນ, ພວກທ່ານ ຊູ້ພັດບໍ່ເວົ້າຄວາມຈິງ ກ່ຽວກັບ ໂທດກຳອັນປ່າເຖື່ອນ ເຊິ່ງຈັກກະພັດອາເມລິກາ ໄດ້ກໍ່ຂຶ້ນ ຢູ່ໃນບ້ານເມືອງເຮົາ. ພວກທ່ານ ຈະເອົາອັນໃດ ມາປົກປິດ ຊຸມລູກລະເບີດ ຕັ້ງ ໓-໔ ລ້ານໂຕນ ທີ່ຈັກກະພັດອາເມລິກາ ຖອກເທລົງຢູ່ໃນດິນແດນລາວ ? ເຮັດແນວໃດ, ພວກທ່ານ ຈະປິດບັງໂທດກຳ ອັນແສນປ່າເຖື່ອນ ຂອງຈັກກະພັດອາເມລິກາ ແລະລູກມື ທີ່ໃຊ້ຍົນໄປຈູດບ້ານ ເຜົາເຮືອນປະຊາຊົນ, ຫວ່ານຢາພິດຄີມີ ເຂັ່ນຂ້າປະຊາຊົນ, ທຳລາຍເຄື່ອງປູກຂອງຝັງ ຂອງປະຊາຊົນໄດ້ ? ພັ້ນຍັງບໍ່ພໍ, ພວກເຂົາ ຍັງເອົາຍົນ ແລະທະຫານ ໄປບັງຄັບ ຈັບກຸມ ກວາດຕ້ອນ ເອົາເຂົາເຈົ້າມາຢູ່ໃນຄ້າງຄຸມຂັງ ຢ່າງຂະຫນານໃຫຍ່ ທີ່ພວກທ່ານເອີ້ນວ່າ "ເຂດອົບພະຍົບຫລົບໄພ", ເຮັດໃຫ້ເຂົາເຈົ້າ ຈຳຕ້ອງ ໄດ້ພັດພາກຈາກ ຖິ່ນຖານບ້ານຊ່ອງ ອັນແສນຮັກ ຂອງເຂົາເຈົ້າ, ປະລະນູນ້ຳມໍລະດົກ, ໄຮ່ນາ ຕາກ້າ ອັນອຸດົມສົມບູນ ມາດຳລົງຊີວິດຢູ່ ດ້ວຍຄວາມທົນທຸກທໍລະມານ. ດັ່ງນັ້ນ ຈັກກະພັດອາເມລິກາ ແລະລູກມື ຕ້ອງເປັນຜູ້ຫາບແບກ ໂທດກຳ ອັນຫນັກຫນາ ທີ່ແມ່ນພວກເຂົາເປັນຜູ້ກໍ່ຂຶ້ນນັ້ນ ທຸກປະການ.

ພວກທ່ານ ໄດ້ເວົ້າລື່ນໄປລື່ນມາ ກ່ຽວກັບອັນທີ່ເອີ້ນວ່າ "ປະຊາຊົນອົບພະຍົບ", ຄວາມຈິງມັນເປັນແນວໃດແທ້ ? ນັກຫນັງສືພິມຊາວຕ່າງປະເທດ ແລະຊາວອາເມລິກາ ຈຳນວນຫນຶ່ງ ໄດ້ໄປຢ້ຽມຢາມ "ເຂດອົບພະຍົບຫລົບໄພ" ບາງແຫ່ງ ທີ່ຈັກກະພັດອາເມລິກາ ແລະລູກມືສ້າງຂຶ້ນ ແລະໄດ້ສອບຖາມ ພວກອົບພະຍົບຕໍ່ປາກ. ຕໍ່ຄຳຖາມທີ່ວ່າ, ເປັນຫຍັງ ຈຶ່ງພາກັນອົບຍ້າຍມາ ? ພວກເຂົາເຈົ້າ ໄດ້ຕອບວ່າ, ແມ່ນຍ້ອນການຖິ້ມລະເບີດ ຂອງອາເມລິກາ, ແລະຍ້ອນຝ່າຍອາເມລິກາ ແລະລູກມື ບັງຄັບ ຈັບກຸມມາ. ຄວາມຈິງ ກໍແມ່ນແນວນັ້ນແທ້. ໃນຫລາຍບັ້ນຮົບ, ພວກເຂົາໄດ້ບັງຄັບຈັບກຸມ ກວາດຕ້ອນ ເອົາປະຊາຊົນ ໄປຢ່າງປ່າເຖື່ອນ. ອັນເດັ່ນທີ່ສຸດນັ້ນແມ່ນ ໃນບັ້ນຮົບ ກູ້ກຽດເມື່ອທ້າຍປີ ໑໙໖໙ ຕົ້ນປີ ໑໙໗໐, ໃນເວລາພວກເຂົາ ໄດ້ບຸກໂຈມຕີເຂົ້າເຂດ ທົ່ງໄຫຫີນ-ຊຽງຂວາງ, ພວກທະຫານລູກມືອາເມລິກາ ໄດ້ບັງຄັບຈັບກຸມ ເອົາປະຊາຊົນເມືອງງານ ຂຶ້ນຍົນ ເຮລິກົບແຕ ຂອງພວກເຂົາ, ເພື່ອເອົາໄປເຕົ້າໂຮມ ຢູ່ຄ້າງຄຸມຂັງ. ເມື່ອປະຊາຊົນ ຄັດຄ້ານ ບໍ່ຍອມໄປ, ພວກເຂົາ ກໍໄດ້ໃຊ້ປືນຍິງກວາດໃສ່ ເຮັດໃຫ້ປະຊາຊົນເມືອງງານ, ເປັນຕົ້ນແມ່ນ ແມ່ຍິງ, ຜູ້ເຖົ້າ ແລະເດັກນ້ອຍຕາຍ ເກືອບ ໖໐໐ ຄົນ ຢ່າງຫນ້າສົມເພດເວທະນາ. ຢູ່ຄ້າງຄຸມຂັງ ນາລອງ

(ແຂວງຊຽງຂວາງ), ພວກເຂົາໄດ້ປະປ່ງ ໃຫ້ປະຊາຊົນ ທົນທຸກທໍລະມານ, ເຈັບປ່ວຍ ແລະລົ້ມຕາຍ ເປັນພັນໆຄົນ. ຮ້າຍແຮງໄປກວ່ານັ້ນ, ໃນເວລາພຽງແຕ່ ໕-໗ ມື້ເທົ່ານັ້ນ, ຄືແຕ່ວັນທີ ໗ ຮອດວັນທີ ໑໒/ ໖/ ໗໐, ຈັກກະພັດອາເມລິກາ ແລະລູກມື ໄດ້ໃຊ້ຍົນ ຊະນິດຕ່າງໆ ລ້າງຮົ້ອງອາກາດ ລະຫວ່າງວຽງຈັນ-ຊຽງຂວາງ ກວາດໂຍນເອົາປະຊາຊົນ ເປັນໝື່ນໆຄົນ ເຂົ້າມາວຽງຈັນ. ຜູ້ໃດບໍ່ຍອມຂຶ້ນຍົນ ກໍຖືກທະຫານລູກມືອາເມລິກາ ເອົາປືນຍິງກວາດໃສ່, ດັ່ງຢ່າງ ພວກເຂົາໄດ້ຂ້າປະຊາຊົນ ບ້ານກາງແສນ (ເມືອງແປກ, ແຂວງຊຽງຂວາງ) ຕາງໜົດເຄິ່ງບ້ານ ໃນບາດດຽວ ຢ່າງປ່າເຖື່ອນທີ່ສຸດ.

ນັ້ນ, ແມ່ນຄວາມຈິງ ກ່ຽວກັບອັນທີ່ ພວກທ່ານເອີ້ນວ່າ "ພວກອົບພະຍົບຫລົບໄພ" [redacted], ມັນກົງກັນຂ້າມ ກັບການໂຄສະນາ ຫລອກລວງ, ໃສ່ຮ້າຍປ້າຍສີ ຂອງພວກທ່ານ ຢ່າງສິ້ນເຊີງ.

ບັນດາທ່ານ,

ໃນວາລະປະຊຸມທີ່ຜ່ານມາ, ບໍ່ພຽງແຕ່ພວກທ່ານ ໄດ້ນຳເອົາເລື່ອງຕ່າງໆ ມາຂັດຂວາງກອງປະຊຸມເຈລະຈາ ດັ່ງທີ່ຂ້າພະເຈົ້າ ໄດ້ເວົ້າມາແລ້ວນັ້ນ, ແຕ່ພວກທ່ານຍັງ ຊອກວິທີປະຕິເສດ ວິທີການການເມືອງ ໕ ຂໍ້ ຂອງບັນດາກຳລັງຮັກຊາດ ເຊິ່ງສະເດັດເຈົ້າ ສຸວັນນະພູມາ ກໍໄດ້ຮັບເອົາເປັນພື້ນຖານ ໃຫ້ແກ່ການປຶກສາຫາລືກັນ ແລະພວກທ່ານເອງ ກໍຈຳຕ້ອງໄດ້ເວົ້າເຖິງ ຫລາຍເທື່ອແລ້ວ. ແຕ່ ໃນການກະທຳຕົວຈິງ, ພວກທ່ານ ຊ້ຳພັດວາງວິທີການ ໗ ຂໍ້ອອກມາ. ພວກຂ້າພະເຈົ້າ ຢາກຖາມເບິ່ງວ່າ, ຖ້າພວກທ່ານ ຫາກເຫັນດີ ເອົາວິທີການການເມືອງ ໕ ຂໍ້ ຂອງພວກຂ້າພະເຈົ້າ ເປັນພື້ນຖານ ໃຫ້ແກ່ການປຶກສາຫາລືກັນແທ້, ເປັນຫຍັງ ພວກທ່ານບໍ່ຍອມພ້ອມກັນ ກັບພວກຂ້າພະເຈົ້າ ຮ່ວມກັນປຶກສາຫາລື ແກ້ໄຂ ລະບຽບການ ຂອງກອງປະຊຸມ ໃຫ້ລຸລ່ວງໄປຢ່າງໄວວາ, ແລ້ວກໍພ້ອມກັນ ເຂົ້າໄປປຶກສາຫາລື ເນື້ອໃນ ຂອງວິທີການການເມືອງ ໕ ຂໍ້ ຂອງພວກຂ້າພະເຈົ້າໂລດ? ແຕ່ກົງກັນຂ້າມ, ພວກທ່ານ ຊ້ຳພັດວາງບັນຫາ ໗ ຂໍ້ອອກມາ ເຊິ່ງເປັນການປະຕິເສດໃນຕົວ ຕໍ່ວິທີການການເມືອງ ໕ ຂໍ້ ທີ່ພວກທ່ານ ກໍໄດ້ຮັບເອົາເປັນພື້ນຖານ ປຶກສາຫາລືກັນແລ້ວ. ຍິ່ງກວ່ານັ້ນ ໃນຄຳປາໄສ ເມື່ອວັນທີ ໗/ ໑໑/ ໗໖ ແລ້ວນີ້, ພວກທ່ານ ຍັງຮຽກຮ້ອງ ໃຫ້ພວກຂ້າພະເຈົ້າ ປຶກສາຫາລື ຂໍ້ສະເໜີ ໗ ຂໍ້ ຂອງພວກທ່ານ ຢ່າງເຂັ້ມງວດ, ແລະວ່າ ຖ້າບໍ່ຍອມໃດ່ແລ້ວ ພວກທ່ານ ກໍຈະອະທິບາຍ ໃຫ້ພວກຂ້າພະເຈົ້າ ຢ່າງລະອຽດ, ນັ້ນແມ່ນເລ່ຫລ່ຽມ ຫລອກລວງຢ່າງດື້ດ້ານ ແລະສະແດງເຖິງ ຄວາມບໍ່ຈິງໃຈ ຂອງພວກທ່ານ. ນັ້ນ, ແມ່ນສາຍເຫດຕົ້ນຕໍ ທີ່ພາໃຫ້ກອງປະຊຸມເຈລະຈາ ຂອງພວກເຮົາ ທີ່ດຳເນີນມາເກືອບ ຈະໄດ້ເດືອນໜຶ່ງແລ້ວນັ້ນ ຍັງບໍ່ທັນກ້າວໄປໄດ້.

ເປັນຫຍັງ ພວກທ່ານຈຶ່ງບໍ່ຢາກຮັບເອົາ ແລະບໍ່ຢາກປຶກສາ ວິທີການການເມືອງ ໕ ຂໍ້ໂລດ?. ໃນດ້ານຄວາມເວົ້າ, ພວກທ່ານ ໄດ້ໂຄສະນາວ່າ, ຢາກເຮັດໃຫ້ກອງປະຊຸມ ເຂົ້າໄປທາງເນື້ອໃນ, ຢາກໃຫ້ເວົ້າບັນຫາໃຫຍ່ ແລະອື່ນໆ. ແຕ່ບາດການກະທຳ ຂອງພວກທ່ານ ຊ້ຳພັດໄປທາງກົງກັນຂ້າມ. ຄຳເວົ້າ ຂອງພວກທ່ານ ດັ່ງກ່າວນັ້ນ, ມັນເປັນພຽງແຕ່ ຄຳໂຄສະນາ ຫລອກລວງເທົ່ານັ້ນ. ວິທີການການເມືອງ ໕ ຂໍ້ ຂອງບັນດາກຳລັງຮັກຊາດ, ນັບແຕ່ໄດ້ວາງອອກ ເມື່ອເດືອນ ມ/ ໑໙໗໐ ເປັນຕົ້ນມາ, ແມ່ນໄດ້ຮັບການສະໜັບສະໜູນ ເຫັນດີເຫັນພ້ອມ ຢ່າງສຸດອົກສຸດໃຈ ແລະກວ້າງຂວາງ ຈາກ

ປະຊາຊົນພາຍໃນ ແລະຈາກທາງສາກົນໃນໂລກ, ບັນດາຊັ້ນຄົນ ທີ່ມີຈິດໃຈຊາດ ຢູ່ໃນເຂດກວດກາ ຂອງອຳນາດການປົກຄອງວຽງຈັນ. ຈາກກຳລັງແຮງ ແຫ່ງຄວາມເປັນທຳ ດັ່ງກ່າວນັ້ນ, ມາຮອດ ເດືອນ ໗ ປີນີ້, ສະເດັດເຈົ້າ ສຸວັນນະພູມາ ກໍໄດ້ຮັບເອົາ ວິທີການການເມືອງ ໕ ຂໍ້ນັ້ນ ເປັນພື້ນ ຖານ ໃຫ້ແກ່ການປຶກສາຫາລືກັນ. ຄວາມຈິງແລ້ວ, ວິທີການການເມືອງ ໕ ຂໍ້ ຂອງບັນດາກຳລັງ ຮັກຊາດ ແມ່ນສອດຄ່ອງ ກັບສະພາບການຕົວຈິງ ຂອງລາວ ໃນປະຈຸບັນນີ້ ເພື່ອແກ້ໄຂບັນຫາລາວ ໂດຍສັນຕິ, ສອດຄ່ອງກັບສິດປະໂຫຍດ ອັນສູງສົ່ງຂອງຊາດ, ຂອງປະຊາຊົນທຸກຊັ້ນຄົນ; ມີແຕ່ປະຕິ ບັດ ຕາມວິທີການການເມືອງ ໕ ຂໍ້ນັ້ນ ຈຶ່ງຈະນຳເອົາ ສັນຕິພາບ, ເອກະລາດ ແລະຄວາມຖືກຕ້ອງ ປອງດອງຊາດ ມາສູ່ບ້ານເມືອງ ເຮົາໄດ້.

ໃນຂໍ້ທີ່ນຶ່ງ, ກໍໄດ້ເວົ້າຢ່າງຈະແຈ້ງວ່າ: ອາເມລິກາ ຕ້ອງເຄົາລົບຢ່າງແທ້ຈິງ ຕໍ່ອຳນາດ ອະທິປະໄຕ, ເອກະລາດ, ເປັນກາງ, ເອກະພາບ ແລະພື້ນແຜ່ນດິນ ອັນຄົບຖ້ວນຂອງລາວ, ອາ ເມລິກາ ຕ້ອງຢຸດເຊົາ ທຸກການແຊກແຊງ ຮຸກຮານລາວ. ຖ້າເຮັດແນວນັ້ນໄດ້, ກ່ອນອື່ນໝົດແມ່ນ ປະ ເທດເຮົາ ຈະໄດ້ພົ້ນຈາກ ໄພສົງຄາມຮຸກຮານ ຂອງຈັກກະພັດອາເມລິກາ, ຄົນລາວເຮົາ ຈະໄດ້ພົ້ນ ຈາກຄວາມ ເຈັບເປັນ ລົ້ມຕາຍ, ປະເທດເຮົາ ຈະໄດ້ຮັບຄວາມ ເປັນເອກະລາດ ຢ່າງສົມບູນ. ເມື່ອເປັນແນວນັ້ນ, ປະຊາຊົນລາວທັງຊາດ ຈະເປັນຜູ້ໄດ້ຮັບ ຜົນປະໂຫຍດ ອັນໃຫຍ່ຫລວງທີ່ສຸດ, ສ່ວນຜູ້ເສັຽຜົນປະໂຫຍດນັ້ນ, ມີແຕ່ ຈັກກະພັດອາເມລິກາ ແລະພວກລູກມື ທີ່ມັນ.

ສ່ວນຂໍ້ທີສອງ, ກໍໄດ້ເວົ້າແຈ້ງວ່າ: ລາວຕ້ອງປະຕິບັດນະໂຍບາຍ ສັນຕິພາບເປັນກາງ, ສ້າງສາຍພົວພັນອັນດີງາມ ກັບທຸກປະເທດ ທີ່ນັບຖື ເອກະລາດ ແລະອຳນາດ ອະທິປະໄຕຂອງລາວ, ຮັບເອົາການຊ່ວຍເຫລືອ ທາງດ້ານເສດຖະກິດ ຢ່າງບໍ່ມີເງື່ອນໄຂຜູກມັດ ທາງການເມືອງ ຈາກທຸກ ປະເທດ ມາສ້າງເສດຖະກິດ ແລະແກ້ໄຂຊີວິດການເປັນຢູ່ ໃຫ້ແກ່ປະຊາຊົນເຮົາ. ຖ້າເຮັດໄດ້ດັ່ງ ເວົ້ານີ້, ກໍມີແຕ່ ເຮັດໃຫ້ລາວເຮົາ ເປັນເພື່ອນມິດທີ່ດີ ກັບທຸກປະເທດໃນໂລກ, ບໍ່ໄດ້ເປັນສັດຕູ ໆ ພິດ ກັບຜູ້ໃດ, ແລະອັນນີ້ ນັ້ນກໍແມ່ນ ຍອດປາຖະໜາ ຂອງປວງປະຊາຊົນເຮົາທັງຊາດ. ມັນບໍ່ແມ່ນ ວ່າ ທາງປາກ ຮ້ອງໂຮວ່າ ຕົນເປັນກາງ, ແຕ່ໃນການກະທຳຕົວຈິງ ຊໍ້າພັດໄປຂຶ້ນ ກັບຈັກກະພັດອາເມລິ ກາ ແລະຝ່າຍອາເມລິກາ ແຕ່ຝ່າຍດຽວ ດັ່ງທີ່ອຳນາດການປົກຄອງວຽງຈັນ ໄດ້ເຮັດມາ ໃນປະຈຸບັນນີ້.

ຂໍ້ທີສາມ, ແມ່ນການສ້າງຄວາມຖືກຕ້ອງປອງດອງຊາດ, ຄື ຈັດຕັ້ງລັດຖະບານປະສົມ ຊື່ວ ຄາວຊຸດໃໝ່ ແລະຈັດຕັ້ງ ສະພາ ປະສົມການເມືອງຂຶ້ນ. ຖ້າປະຕິບັດໄດ້ຂໍ້ນີ້, ຈະເຮັດໃຫ້ບ້ານເມືອງ ຂອງພວກເຮົາເປັນ ເອກະພາບ, ເຮັດໃຫ້ ພີ່ນ້ອງຮ່ວມຊາດ ທີ່ແຕກແຍກກັນມາ ຍ້ອນສົງຄາມຮຸກຮານ ຂອງຈັກກະພັດອາເມລິກາ ເປັນສິບໆປີແລ້ວນັ້ນ, ໄດ້ຫ້ອມໂຮມເຂົ້າ ໃນວົງສາຄະນາຍາດແຫ່ງຊາດ, ໂຮມແຮງ ໂຮມສະຕິປັນຍາ ສ້າງສາບ້ານເມືອງ ໃຫ້ຈະເລີນຮຸ່ງເຮືອງ. ອັນນີ້ ກໍແມ່ນຄວາມມຸ່ງມາດ ປາຖະໜາ ອັນແຮງກ້າ ຂອງປະຊາຊົນເຮົາ ທັງມວນ. ມີແຕ່ ຈັກກະພັດອາເມລິກາ ແລະລູກມື ຂອງ ພວກມັນທີ່ມັນ ທີ່ບໍ່ມັກ, ເພາະພວກມັນ ມີຈຸດປະສົງ ຢາກແບ່ງແຍກ ເຊື້ອຊາດເຮົາ ແລະເອົາບ້ານ ເມືອງເຮົາ ເປັນຫົວເມືອງຂຶ້ນແບບໃໝ່ ແລະຖານທັບ ຂອງພວກມັນ.

ຂໍ້ທີສີ່, ເວົ້າເຖິງການປະຕິບັດ ສິດເສລີພາບ ປະຊາທິປະໄຕ ຢ່າງຄົບຖ້ວນ ໃຫ້ແກ່ພົນລະເມືອງລາວທຸກຄົນ, ນັ້ນຍັງເປັນຄວາມ ຮຽກຮ້ອງຕ້ອງການ ອັນຮີບດ່ວນທີ່ສຸດ ສຳລັບປະຊາຊົນເຮົາທຸກຄົນ ຢູ່ໃນເຂດກວດກາ ຂອງອຳນາດການປົກຄອງ ຂອງຝ່າຍຂວາວຽງຈັນ ທີ່ໄດ້ມີຊີວິດຢູ່ ຢ່າງທຸກຍາກທໍລະມານ, ບັນດາສິດເສລີພາບ ປະຊາທິປະໄຕ, ແລະຖືກກົດຂີ່ ຂົ່ມເຫັງ ຢ່າງໄຮ້ມະນຸດສະທຳທີ່ສຸດ. ຖ້າປະຕິບັດ ສິດເສລີພາບ ປະຊາທິປະໄຕ ໄດ້ຢ່າງຄົບຖ້ວນ, ປະຊາຊົນເຮົາທຸກຄົນ ຈະໄດ້ຢູ່ທ່າງສ້າງສາ, ທຳມາຫາກິນ, ໄປມາຫາສູ່ກັນ ຢ່າງສະດວກສະບາຍ, ເປັນເຈົ້າຂອງ ດິນດອນຕອນຫຍ້າ ຂອງຕົນຢ່າງສົມບູນ. ນັ້ນ ແມ່ນຄວາມມຸ່ງມາດປາຖະໜາ ອັນສູງສົ່ງ ຂອງປະຊາຊົນທັງຊາດ. ກົງກັນຂ້າມ, ມີແຕ່ ຈັກກະພັດອາເມລິກາ ແລະລູກມືມັນ ທີ່ບໍ່ເຫັນດີເຫັນພ້ອມ, ເພາະພວກເຂົາ ຈະບໍ່ມີສິດອຳນາດ ບາດໃຫຍ່ແຕ່ຜູ້ດຽວ, ບໍ່ໄດ້ຢູ່ທາງກອບໂກຍ ຂູດຮີດປະຊາຊົນ ຕາມໃຈຊອບ ຂອງພວກເຂົາ.

ຂໍ້ທີຫ້າ, ແມ່ນ ຕ້ອງໃຫ້ມີການຢຸດຍິງກັນທີ່ ຢ່າງສິ້ນເຊີງ ແລະພ້ອມກັນ ໃນທົ່ວແຜ່ນດິນລາວ. ເຮັດໄດ້ແນວນັ້ນ, ສົງຄາມຮຸກຮານອັນດຸເດືອດ ຂອງຈັກກະພັດອາເມລິກາ ທີ່ເຜົາຜານ ປະເທດເຮົາມາໄດ້ເກືອບ ໒໐ ປີແລ້ວນັ້ນ, ຈຶ່ງຢຸດເຊົາລົງໄດ້, ສັນຕິພາບ ກໍຈະກັບຄືນມາສູ່ ບ້ານເມືອງເຮົາ, ປະຊາຊົນເຮົາ ແຕ່ເໜືອຕະຫລອດໃຕ້ ຈະມີຄວາມສະຫງົບສຸກ, ແລະສ້າງຊີວິດໃໝ່ ອັນສົດໃສ. ອັນນັ້ນ, ຍັງແມ່ນ ຄວາມຄອງຄຽງ ແລະມຸ່ງຫວັງ ອັນແຮງກ້າ ຂອງປວງປະຊາຊົນເຮົາ.

ເວົ້າລວມແລ້ວ, ເນື້ອໃນ ຂອງວິທີການການເມືອງ ໕ ຂໍ້ ຂອງບັນດາກຳລັງຮັກຊາດ, ນັ້ນລ້ວນແຕ່ ນຳຜົນປະໂຫຍດ ອັນໃຫຍ່ຫລວງ ມາໃຫ້ແກ່ປະເທດຊາດ ຂອງພວກເຮົາ, ນັ້ນແມ່ນຜົນປະໂຫຍດ ອັນໃຫຍ່ຫລວງ ທີ່ປະຊາຊົນເຮົາທຸກຄົນ ຈະເປັນຜູ້ໄດ້ຮັບ, ເວັ້ນເສຍແຕ່ ຈັກກະພັດອາເມລິກາ ແລະພວກລູກມື ມັນ ທີ່ບໍ່ພໍໃຈ.

ເມື່ອເປັນດັ່ງນັ້ນ, ຜູ້ທີ່ຫາວິທີຕ້ານກັບ ວິທີການການເມືອງ ໕ ຂໍ້ ຂອງບັນດາກຳລັງຮັກຊາດ, ກໍມີແຕ່ຜູ້ທີ່ ຈິງໃຈ ເປັນປໍລະປັກ ຕໍ່ສິດປະໂຫຍດ ອັນສູງສົ່ງຂອງຊາດ, ເປັນຜູ້ທີ່ຝືນກັບຄວາມ ມຸ່ງມາດປາຖະໜາ ອັນແຮງກ້າ ຂອງປະຊາຊົນ, ແລະຈົງຮັກພັກດີ ຢ່າງຫລົ້ນຫົວຈົນທ້າງ ຈັກກະພັດອາເມລິກາ ຜູ້ຮຸກຮານ ນັ້ນ.

ບັນດາທ່ານ,

ເພື່ອຜົນປະໂຫຍດ ອັນສູງສົ່ງຂອງຊາດ, ເພື່ອຕອບສະໜອງ ຄວາມຄອງຄຽງ ຂອງປະຊາຊົນ ໃນທົ່ວປະເທດ, ທີ່ພວມຢາກເຫັນ ສັນຕິພາບ ແລະຄວາມຖືກຕ້ອງປອງດອງຊາດ ໄດ້ກັບຄືນມາສູ່ ບ້ານເມືອງເຮົາໄວນັ້ນ, ອີກເທື່ອໜຶ່ງ, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ຮຽກຮ້ອງ ຄະນະຜູ້ແທນ ຝ່າຍ ຂວາວຽງຈັນ ຈົ່ງມີຄວາມຈິງໃຈ [redacted], ເລີກລ້າງທຸກອຸປະສັກ ທີ່ພວກທ່ານກໍ່ຂຶ້ນ ເພື່ອຂັດຂວາງກອງປະຊຸມ, ແລ້ວພ້ອມກັບ ຄະນະຜູ້ແທນ ບັນດາກຳລັງຮັກຊາດ ກ້າວເຂົ້າປຶກສາຫາລື ເນື້ອໃນ, ໂດຍເອົາ ວິທີການການເມືອງ ໕ ຂໍ້ ເປັນພື້ນຖານ ປຶກສາຫາລືກັນ, ແນໃສ່ເຮັດໃຫ້ ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາຢູ່ລາວ ຢຸດເຊົາລົງໂດຍໄວ ເທົ່າທີ່ຈະໄວໄດ້, ແລ້ວພ້ອມກັບ ຈັດຕັ້ງລັດຖະບານປະສົມຊຸດໃໝ່ ແລະ ສະພາ ປະສົມການເມືອງຂຶ້ນ, ປະຕິບັດ ສິດ

ເສລີພາບ ປະຊາທິປະໄຕ ຢ່າງຄົບຖ້ວນ ແລະມີການປອງດອງ ດັ່ງທີ່ພວກຂ້າພະເຈົ້າ ໄດ້ສະເໜີອອກ ໃນວາລະປະຊຸມ ເມື່ອວັນທີ ໑໗/໑໐/໗໒ ແລ້ວນັ້ນ ຈຶ່ງຈະຟື້ນຟູ ສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ ຢ່າງໝັ້ນຄົງ ຖາວອນ ໃນບ້ານເມືອງຂອງເຮົາ.

ດ້ວຍເຈຕະນາດີ, ໃນວາລະປະຊຸມ ນ–໔ ເທື່ອທີ່ຜ່ານມາ, ພວກຂ້າພະເຈົ້າ ກໍໄດ້ສະເໜີ ຕໍ່ພວກທ່ານເພື່ອໃຫ້ຄວນມີຄວາມຈິງໃຈ, ບໍ່ຄວນສະແດງທ່າທີ, ແລະມີການປະພຶດ ທີ່ບໍ່ມີຄວາມສະເໝີພາບ ຕໍ່ຄູ່ເຈລະຈາ ມາຕັ້ງຫຼາຍເທື່ອແລ້ວ . ແຕ່ມາຮອດປະຈຸບັນນີ້, ພວກທ່ານ ກໍຍັງບໍ່ທັນງົດເວັ້ນ ການກະທຳ ທີ່ເປັນການຂັດຂວາງ ກອງປະຊຸມ. ພ້ອມກັນນັ້ນ, ໂດຍປະຕິບັດ ຕາມແຜນການ ຂອງຈັກກະພັດອາເມລິກາ, ອາໃສການປົກຄອງວຽງຈັນ ຍັງໄດ້ລະດົມ ທະຫານໄປບຸກໂຈມຕີ ບຸກຍຶດເຂດປົດປ່ອຍພາກໃຕ້, ພາກກາງ ແລະພາກເໜືອ ຢ່າງຂະຫນານໃຫຍ່. ຖ້າປ່ອຍໃຫ້ສະພາບນີ້ ຍືດເຍື້ອໄປທໍ່ໃດ, ກໍຍິ່ງຈະ ກໍ່ບັນຍາກາດອັນບໍ່ດີ ປົກຫຸ້ມກອງປະຊຸມ ຫນັກໄປທໍ່ນັ້ນ, ແລະຖ້າກອງປະຊຸມ ຫາກ ຂະຫຍາຍຕົວ ໄປສູ່ແງ່ທີ່ບໍ່ເພິ່ງປາຖະຫນານັ້ນ, ພວກທ່ານ ຕ້ອງເປັນຜູ້ຮັບຜິດຊອບ ແຕ່ຝ່າຍດຽວ ຕໍ່ຄົນ ທັງທຸກປະການ.

ເຖິງວ່າ ຈັກກະພັດອາເມລິກາ ແລະ ລູກມື ຈະຂັດຂວາງ ແນວໃດກໍຕາມ, ບັນດາກຳລັງຮັກຊາດ ຍາມໃດກໍຍຶດໝັ້ນ ໃນລິດປະໂຫຍດ ອັນສູງສົ່ງ ຂອງປະເທດຊາດ, ຈະສືບຕໍ່ ໃຊ້ຄວາມອົດທົນ ພະຍາຍາມ ຈົນສຸດຄວາມສາມາດຂອງຕົນ ຜ່ານຜ່າທຸກອຸປະສັກ ຄວາມຫຍຸ້ງຍາກ ເພື່ອເຮັດໃຫ້ການ ເຈລະຈາ ບັນລຸຜົນສຳເລັດ, ສ້າງເງື່ອນໄຂ ໃຫ້ແກ່ການ ຟື້ນຟູ ສັນຕິພາບ ແລະ ຄວາມຖືກຕ້ອງ ປອງດອງຊາດ, ເຮັດໃຫ້ປະເທດຊາດ ອັນແສນຮັກ ຂອງພວກເຮົາມີ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເປັນກາງ, ເອກະພາບ ແລະ ວັດທະນາຖາວອນຢ່າງແທ້ຈິງ./.

---

6ème séance

21-11-72

21 NOV. 1972

# ຄຳປາໄສ

ຂອງ ທ່ານ ພູມີ ສີປະເສີດ, ຫົວໜ້າຄະນະຜູ້ແທນ ບັນດາກຳລັງຮັກຊາດ,
ກ່າວໃນວາລະປະຊຸມຄັ້ງທີ ໖ (ວັນທີ ໒໑/໑໑/໗໒).

---

ບັນດາທ່ານ,

ໂດຍມີເຈຕະນາດີ ອັນແທ້ຈິງ ທີ່ຢາກແກ້ໄຂບັນຫາລາວ ໂດຍສັນຕິວິທີ, ຄະນະຜູ້ແທນ ບັນດາ ກຳລັງຮັກຊາດລາວ ຈຶ່ງໄດ້ເຂົ້າມາວຽງຈັນ ແລະພົບກັບ ຄະນະຜູ້ແທນ ຝ່າຍຂວາວຽງຈັນ ດຳເນີນການ ເຈລະຈາ ໄດ້ເດືອນກວ່າແລ້ວ ເພື່ອພ້ອມກັນ ຊອກຫາວິທີ ເຮັດໃຫ້ສົງຄາມຮຸກຮານ ຂອງອາເມລິກາຢູ່ ລາວ ຢຸດເຊົາລົງ, ເຮັດໃຫ້ປະເທດເຮົາມີ ສັນຕິພາບ, ຄວາມເປັນກາງ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະວັດທະນາຖາວອນ, ແນໃສ່ຕອບສະໜອງ ຄວາມມຸ່ງມາດ ປາຖະໜາ ອັນແຮງກ້າ ຂອງປະຊາຊົນລາວ ທົ່ວຊາດ.

ຄະນະຜູ້ແທນ ບັນດາກຳລັງຮັກຊາດ ໄດ້ເອົາໃຈໃສ່ ຄົ້ນຄວ້າ ຄຳຖະແຫລງ ທັງ ໕ ເທື່ອ ຂອງຄະນະຜູ້ແທນ ຝ່າຍຂວາວຽງຈັນ, ຊອກຫາບ່ອນທີ່ຄືກັນ ແລ້ວເອົາເຂົ້າກັບ ວິທີການການເມືອງ ໕ ຂໍ້ ຂອງບັນດາກຳລັງຮັກຊາດ ເພື່ອເຮັດໃຫ້ກອງປະຊຸມ ເຈລະຈາ ຂອງພວກເຮົາ ຄືບໜ້າໄປໄດ້. ແຕ່ ມາຮອດປະຈຸບັນນີ້, ຜົນ ຂອງການຄົ້ນຄວ້າດັ່ງກ່າວນັ້ນ ໄດ້ຊີ້ໃຫ້ເຫັນ ກະແສແນວຄິດອັນໜຶ່ງ ອັນດຽວ ຂອງຝ່າຍຂວາວຽງຈັນ ທີ່ແມ່ນຍັງບໍ່ທັນຈິງໃຈເຈລະຈາ. ຝ່າຍຂວາວຽງຈັນ ຍັງຖືເປັນ ຜູ້ຕາງໜ້າ ໃຫ້ອັນທີ່ເອີ້ນວ່າ "ລັດຖະບານປະສົມແຫ່ງຊາດ ໓ ຝ່າຍ" ແລະບັງຄັບໃຫ້ ບັນດາກຳລັງຮັກຊາດ ຕ້ອງຮັບ ຮູ້ "ສະພາ" ຂອງຕົນ ໂດຍວິທີ ຢາກໃຫ້ພວກຂ້າພະເຈົ້າ ຍິນຍອມຮັບ ໃຫ້ຜູ້ສັງເກດການຂອງ "ສະພາ" ເຂົ້າຮ່ວມກອງປະຊຸມ ທັ້ງໆ ທີ່ຜູ້ຕາງໜ້າ ແລະຫົວໜ້າ ຂອງທັງສອງຝ່າຍ ກໍໄດ້ຕົກລົງ ບໍ່ໃຫ້ມີ ຜູ້ສັງ ເກດການຂອງ "ສະພາ" ຢູ່ໃນກອງປະຊຸມນັ້ນແລ້ວ, ແຕ່ຝ່າຍຂວາວຽງຈັນ ກໍຍັງຫາວິທີ ເອົາບັນຫາຜູ້ສັງ ເກດການນັ້ນ ໄປເກາະທັງ ໃສ່ບັນຫາອື່ນ. ຍິ່ງກວ່ານັ້ນ, ຝ່າຍຂວາວຽງຈັນ ຍັງເອົາທຸງມາປັກໄວ້ ໃນ ຫ້ອງປະຊຸມ ຕາມລຳພັງໃຈ ໂດຍບໍ່ທັນມີ ການຕົກລົງກັນກ່ອນ, ແລະຖືເປັນປະທານ ຂອງກອງປະຊຸມ ຢູ່ສະເໝີມາ. ໃນເວລາຖືກ ພວກຂ້າພະເຈົ້າ ທັກທ້ວງ ກ່ຽວກັບທ່າທີ ອັນບໍ່ສະເໝີພາບນັ້ນ, ຝ່າຍຂວາ ວຽງຈັນ ກໍໄດ້ເວົ້າວ່າ, ບໍ່ອາດຈະຖື ການເຈລະຈາເທື່ອນີ້ ເປັນການເຈລະຈາ ທີ່ສະເໝີພາບໄດ້, ເພາະມັນແມ່ນ ການເຈລະຈາ ລະຫວ່າງ ລັດຖະບານ ກັບ ແນວລາວຮັກຊາດ. ດ້ານໜຶ່ງ ພວກທ່ານ ໄດ້ຕີລາຄາ ແນວລາວຮັກຊາດຕ່ຳ, ແລະດ້ານໜຶ່ງອີກ ກໍບໍ່ຍອມຮັບຮູ້ ບັນດາກຳລັງເປັນກາງຮັກຊາດ. ຝ່າຍຂວາວຽງຈັນ ຍັງຄົງອ້າງວ່າ ອຳນາດການປົກຄອງວຽງຈັນ ປະຈຸບັນ ເປັນລັດຖະບານປະສົມແຫ່ງ ຊາດ ໓ ຝ່າຍ ໂດຍບໍ່ໄດ້ຖືກໂຄ່ນລົ້ມຈາກ ການລັດຖະປະຫານ. ດັ່ງນັ້ນ, ຈຶ່ງມີແຕ່ໃຫ້ ແນວລາວຮັກ ຊາດ ກັບຄືນມາ ຮັບເອົາຕັ່ງອີ້ ໃນອັນທີ່ເອີ້ນວ່າ "ລັດຖະບານ", ພ້ອມທັງມອບອຳນາດ ການປົກຄອງ ແລະກອງທະຫານ ໃຫ້ແກ່ "ລັດຖະບານ".

ເລ່ຫຼ່ຽມ ຂອງຝ່າຍຂວາວຽງຈັນ ໃນການເຈລະຈານັ້ນ ກໍຍັງຄົງແມ່ນ ຊອກຫາວິທີ ໜ່ວງໜ່ຽວ ເຮັດໃຫ້ກອງປະຊຸມ ຍືດເຍື້ອຕໍ່ໄປ, ຍັງບໍ່ທັນຢາກເຂົ້າໄປ ສູ່ບັນຫາຕົ້ນແທ້ຈິງ ຂອງກອງປະຊຸມ ເພື່ອຈະ ພ້ອມກັນແກ້ໄຂ. ສິ່ງຈະແຈ້ງທີ່ສຸດ ກໍຄື ໃນວາລະປະຊຸມເທື່ອທີສອງ, ພວກທ່ານກໍໄດ້ນຳເອົາ ຂໍ້ສະເໜີ

ຖ ຂໍ້ ອອກມາເຊິ່ງລ້ວນແຕ່ກ່ຽວກັບຂ້ານກັບ ວິທີການການເມືອງ ໕ ຂໍ້ຂອງພວກຂ້າພະເຈົ້າຢ່າງສັ້ນເຊິ່ງ, ທັງໆ ທີ່ພວກທ່ານກໍ່ໄດ້ປະກາດ ຮັບເອົາມາເປັນພື້ນຖານ ຂອງການເຈລະຈາມາກ່ອນແລ້ວ.

ບັນຫາໜຶ່ງອີກ ທີ່ພວກຂ້າພະເຈົ້າເຫັນວ່າ ມີຄວາມຈຳເປັນຈະຕ້ອງເຮັດໃຫ້ກະຈ່າງແຈ້ງ ກ່ອນເວລາທີ່ພວກເຮົາ ຈະສືບຕໍ່ການເຈລະຈານັ້ນ, ແມ່ນບັນຫາທີ່ ພວກທ່ານຍັງຄົງຢືນຢັນວ່າ ລັດຖະບານປະສົມແຫ່ງຊາດສາມຝ່າຍຍັງຄົງຄືຢູ່. ເພື່ອຊ່ວຍໃຫ້ພວກທ່ານ ຮັບຮູ້ເລື່ອງນີ້ຢ່າງຖືກຕ້ອງ, ພວກຂ້າພະເຈົ້າຂໍຍົກເອົາໃຈຄວາມ ບາງຕອນໃນຖະແຫຼງການຂອງກຸ່ມ ນາຍທະຫານທີ່ເຮັດການ ລັດຖະປະຫານໂຄ່ນລົ້ມ ລັດຖະບານປະສົມແຫ່ງຊາດສາມຝ່າຍ ເມື່ອວັນທີ ໑໗/໔/໑໙໖໔ ທີ່ວ່າ: "ແຕ່ນີ້ເປັນຕົ້ນໄປ, ລັດຖະບານປະສົມແຫ່ງຊາດສາມຝ່າຍ ທີ່ປະຕິບັດໜ້າທີ່ບໍ່ໄດ້ຮັບຜົນນັ້ນ ແມ່ນບໍ່ມີອີກແລ້ວ". ພວກທ່ານໄດ້ເວົ້າວ່າ, ການລັດຖະປະຫານນັ້ນ ໄດ້ປະລາໄຊ, ແຕ່ຄຳເວົ້ານັ້ນ ເປັນໜ້າແປກປະຫຼາດທີ່ສຸດ, ເພາະວ່າທຳມະດາແລ້ວ, ເມື່ອການລັດຖະປະຫານຫາກປະລາໄຊ, ຜູ້ທີ່ກໍ່ການລັດຖະປະຫານນັ້ນ ກໍ່ຈະຕ້ອງຖືກຝ່າຍບໍລະປັກລົງໂທດ. ແຕ່ກົງກັນຂ້າມ, ພວກຫົວໜ້າການລັດຖະປະຫານວັນທີ ໑໙/໔/໑໙໖໔ ທີ່ພວກທ່ານເອີ້ນວ່າ "ປະລາໄຊ" ນັ້ນ, ພວກນາຍທະຫານທີ່ ເຮັດການລັດຖະປະຫານ ຊົ່ວພັດມີອຳນາດເຕັມຕົວ ໃນການຈັດວາງສັບຊ້ອນລັດຖະບານ. ໃນທຸກວາລະປະຊຸມທີ່ຜ່ານມາ, ພວກຂ້າພະເຈົ້າກໍ່ໄດ້ຍົກເອົາຫຼັກຖານພິຍານຫຼາຍປະການ ມາຢັ້ງຢືນໃຫ້ເຫັນວ່າ, ລັດຖະບານປະສົມແຫ່ງຊາດສາມຝ່າຍ ໄດ້ຖືກໂຄ່ນລົ້ມແຕ່ດົນແລ້ວ.

ພວກຂ້າພະເຈົ້າຖືວ່າ, ຖ້າຄະນະຜູ້ແທນຝ່າຍຂວາວຽງຈັນ ຫາກຍັງຄົງຮັກສາທ່າທີ ອັນຂາດເຈຕະນາດີດັ່ງກ່າວນັ້ນຕໍ່ໄປແລ້ວ, ກໍ່ຈະເຮັດໃຫ້ການເຈລະຈາບໍ່ໄດ້ຮັບຜົນ.

ບັນດາທ່ານ,

ໃນວາລະປະຊຸມນີ້, ພວກຂ້າພະເຈົ້າຂໍມີຄວາມເຫັນ ບາງປະການດັ່ງນີ້: ໃນວາລະປະຊຸມ ໕ ເທື່ອທີ່ຜ່ານມາ, ພວກຂ້າພະເຈົ້າ ລ້ວນແຕ່ໄດ້ເວົ້າເຖິງມູນເຫດພື້ນຖານຂອງສະພາບການ ອັນໜັກໜ່ວງຢູ່ລາວໃນປະຈຸບັນ ແລະ ບົນພື້ນຖານນັ້ນ, ພວກຂ້າພະເຈົ້າກໍ່ໄດ້ອະທິບາຍ ວິທີການການເມືອງ ໕ ຂໍ້ຂອງພວກຂ້າພະເຈົ້າ ຢ່າງຈະແຈ້ງແລ້ວ. ພາຍຫຼັງທີ່ໄດ້ຄົ້ນຄ້ວາຄຳ ຖະແຫຼງຂອງພວກທ່ານແລ້ວ, ໃນວາລະປະຊຸມນີ້, ພວກຂ້າພະເຈົ້າຂໍລົມຄືນ ເຖິງບັນຫາມູນເຫດພື້ນຖານ ຂອງສະພາບການລາວດັ່ງກ່າວນັ້ນ ຕື່ມອີກເທື່ອໜຶ່ງ ເພື່ອເປັນພື້ນຖານໃຫ້ແກ່ ພວກຂ້າພະເຈົ້າ ເພື່ອມີຄວາມຄິດຄວາມເຫັນກ່ຽວກັບ ຂໍ້ສະເໜີຕ່າງໆ ຂອງພວກທ່ານ ທີ່ໄດ້ສະເໜີອອກ ໃນວາລະປະຊຸມອາທິດແລ້ວນີ້. ດັ່ງທຸກຄົນໄດ້ຮູ້ດີແລ້ວ, ພາຍຫຼັງສົງຄາມໂລກເທື່ອທີ່ ໒, ຈັກກະພັດອາເມລິກາ ໄດ້ແຊກແຊງເຂົ້າ ອາຊີອາຄະເນໂດຍກົງ, ໂດຍຫວັງຈະກອບໂກຍເອົາຊັບພະຍາກອນໃນຂົງເຂດນີ້ ເຊິ່ງອຸດົມສົມບູນໄປດ້ວຍ ຊັບໃນດິນສິນໃນນ້ຳ ແລະ ມີພົນລະເມືອງໜາແໜ້ນ. ໃນນະໂຍບາຍຮຸກຮານດັ່ງກ່າວນັ້ນ, ເນື່ອງຈາກວ່າ ແຫຼມອິນດູຈີນມີຄວາມສຳຄັນ ທາງດ້ານຍຸດທະສາດ ແລະ ອຸດົມສົມບູນໄປດ້ວຍຊັບພະຍາກອນ, ຈັກກະພັດອາເມລິກາຈຶ່ງເອົາໃຈໃສ່ ຂົງເຂດນີ້ ເປັນພິເສດ, ແລະ ໃນແຫຼມອິນດູຈີນ, ຈັກກະພັດອາເມລິກາຊົ່ວພັດ ຍັງເອົາໃຈໃສ່ ລາວເປັນພິເສດ ເຊິ່ງເປັນທີ່ຕັ້ງສຳຄັນ ທາງດ້ານການທະຫານ, ການເມືອງ ແລະ ເສດຖະກິດໃນອາຊີ ອາຄະເນ. ກ່ຽວກັບຂໍ້ສັງເກດດັ່ງກ່າວນີ້, ພວກຂ້າພະເຈົ້າກໍ່ເຄີຍອະທິບາຍຢູ່ໃນຄຳປາໄສ ໃນວາລະປະຊຸມເທື່ອທີ່ ໓ ມາແລ້ວ.

ຍ້ອນອິນດູຈີນມີຄວາມສຳຄັນ ທາງດ້ານຍຸດທະສາດ ດັ່ງກ່າວນັ້ນ, ແລະ ຍ້ອນຈັກກະພັດຝລັ່ງ ໃນຄາວນັ້ນ ອ່ອນໂຊໜັກ, ສະນັ້ນ ແຕ່ຄາວສົງຄາມໂລກເທື່ອທີສອງ ຍັງບໍ່ທັນສິ້ນສຸດລົງ, ຈັກກະພັດອາເມ

ລິກາກໍໄດ້ເລີ່ມຕົ້ນຈ້ອງມອງ ແລະ ຄ່ອຍໆ ແຊກແຊງເຂົ້າລາວ, ຫວຽດນາມ ແລະ ກຳພູຊາເປັນກ້າວໆ. ມາຮອດປີ ໑໙໕໔, ໂດຍສວຍໂອກາດ ເວລາພວກລ່າເມືອງຂຶ້ນຝລັ່ງ ຍອມຖອນອອກຈາກອິນດູຈີນ, ຈັກກະພັດອາເມລິກາກໍໄດ້ກະໂດດເຂົ້າແຊກແຊງ ບັນດາປະເທດອິນດູຈີນ ໂດຍກົງດັ່ງທີ່ໄດ້ຮູ້ກັນໝົດທົ່ວໂລກແລ້ວ. ລາຍງານລັບຂອງ ກະຊວງປ້ອງກັນປະເທດ ອາເມລິກາເອງກໍໄດ້ຢືນຢັນເລື່ອງຈິງດັ່ງກ່າວນັ້ນມາແລ້ວ.

ມາເຖິງມື້ນີ້, ການແຊກແຊງຮຸກຮານຂອງ ຈັກກະພັດອາເມລິກາເຂົ້າລາວ ໄດ້ຜ່ານສະໄໝ ປະທານາທິບໍດີອາເມລິກາ ເຖິງ ໔ ຄົນແລ້ວ ແລະ ເກືອບ ໒໐ ປີມານີ້, ສົງຄາມພິເສດ ຂອງອາເມລິກາ ຢູ່ລາວໄດ້ນັບມື້ນັບເພີ່ມທະວີ, ພິເສດແມ່ນໃນສະໄໝ ນິກສັນ, ສົງຄາມລ່າເມືອງຂຶ້ນແບບໃໝ່ ທີ່ປະຕິບັດຕາມທິດສະດີ ນິກສັນ ຄື ໃຊ້ຄົນລາວຂ້າຄົນລາວ ແລະ ໃຊ້ຄົນອິນດູຈີນຂ້າຄົນອິນດູຈີນນັ້ນ ໄດ້ກ້າວຂຶ້ນສູ່ຍອດສູງສຸດ.

ໂດຍອີງໃສ່ກຳລັງທະຫານລາວ ເລວຊັບຈ້າງເຊິ່ງມີທີ່ປຶກສາ, ພະນັກງານທະຫານ ອາເມລິກາ ແລະ ບໍລິວານເປັນຜູ້ບັງຄັບບັນຊາ, ທັງໄດ້ຮັບການປະກອບອາວຸດ ແລະ ການລ້ຽງດູຈາກອາເມລິກາ, ອີງໃສ່ກອງທະຫານໄທ ແລະ ທະຫານຫຸ່ນໄຊ່ງ່ອນ, ໂດຍສະເພາະໃນຫຼາຍປີມານີ້ ແມ່ນອີງໃສ່ກອງທັບອາກາດອາເມລິກາ ທີ່ຕັ້ງຢູ່ປະເທດໄທ ແລະ ກອງທັບເຮືອທີ ໗ ຂອງອາເມລິກາ ນັບທັງຍົນຍຸດທະສາດ ບີ-໕໒, ຈັກກະພັດອາເມລິກາ ໄດ້ດຳເນີນສົງຄາມຮຸກຮານປະເທດເຮົາ ເຊິ່ງປະຊາຊົນ ຜູ້ກ້າວໜ້າໃນໂລກ ນັບທັງປະຊາຊົນ ອາເມລິການຳ ກໍໄດ້ກ່າວປະນາມ ຢ່າງແຂງແຮງມາແລ້ວ. ໃນຫຼາຍປີມານີ້, ປະເທດເຮົາໄດ້ຖືກທຳລາຍເພົາຜານ, ປະຊາຊົນເຮົາ ໄດ້ຖືກບາດເຈັບ ລົ້ມຕາຍ ຢ່າງຫຼວງຫຼາຍ ຍ້ອນທາດລະເບີດ ລູກປືນຂອງອາເມລິກາ, ໝູ່ບ້ານໄດ້ຖືກ ຈູດເຜົາເພົາຜານ ຈົນກາຍເປັນເຖົ່າຖ່ານ, ຊາວໜຸ່ມ ຊາຍຊະກັນ ໄດ້ຖືກບັງຄັບ ຈັບກຸມ ໄປຮົບເລວ ບາດເຈັບ ລົ້ມຕາຍ, ຊີວິດຄວາມເປັນຢູ່ ຂອງປະຊາຊົນສ່ວນຫຼວງຫຼາຍ ທີ່ຕົກທຸກໄດ້ຍາກ ມາແລ້ວນັ້ນ ກໍຍິ່ງລຳບາກ ກາກກຳກວ່າເກົ່າ.

ຕໍ່ໜ້າ ພາບ ແຫ່ງການສູນເສຍ ປະເທດຊາດ, ບ້ານແຕກ ແຊກຂາດ ແລະ ຖືກກົດຂີ່ຂູດຮີດຢ່າງແສນທຸກ ທໍລະມານ ຄືແນວນັ້ນ, ພາຍໃຕ້ການນຳ ແລະ ຕອບສະໜອງຄຳຮຽກຮ້ອງ ຂອງແນວລາວຮັກຊາດ, ປະຊາຊົນເຮົາ ທຸກຊົນຊັ້ນ ຊົນຊາດ ໄດ້ພາກັນລຸກຂຶ້ນຕໍ່ສູ້ ດ້ວຍຫຼາຍຮູບການ ແລະ ນັບມື້ນັບເຂັ້ມແຂງ. ດ້ວຍຄວາມ ປາຖະໜາ ອັນແຮງກ້າ ທີ່ຢາກດຳລົງຊີວິດ ໃນຄວາມເປັນເອກະລາດ ແລະ ອິດສະຫຼະພາບ, ປະຊາຊົນເຮົາທຸກຊົນຊາດ ຈຶ່ງໄດ້ເສີມຂະຫຍາຍ ມູນເຊື້ອຮັກຊາດຂອງຕົນແລ້ວ ໄດ້ສາມັກຄີກັນຢ່າງແໜ້ນແຟ້ນ ອ້ອມຂ້າງ ແນວລາວຮັກຊາດ ແລະ ສາມັກຄີກັບ ປະຊາຊົນຫວຽດນາມ ແລະ ກຳພູຊາ ທີ່ມີສັດຕູໂຕດຽວກັນ ແລະ ຢູ່ໃນໂຊກຊາຕາ ອັນດຽວກັນ, ຕັດສິນໃຈຕໍ່ສູ້ ຢ່າງສຸດຂີດ, ເຖິງວ່າ ການຕໍ່ສູ້ດັ່ງກ່າວນັ້ນ ຈະພົບຄວາມຫຍຸ້ງຍາກ ແລະ ເສຍສະຫຼະຫຼາຍປານໃດກໍຕາມ. ດັ່ງນັ້ນ, ເຖິງວ່າ ການຕໍ່ສູ້ ປົດປ່ອຍຕົນເອງ ຂອງຊາດເຮົາ ຈະຍືດເຍື້ອຍາວນານ ປານໃດກໍຕາມ, ມັນກໍໄດ້ຮັບໄຊຊະນະ ອັນໃຫຍ່ຫຼວງເປັນຂັ້ນໆມາແລ້ວ. ສັນຍາເຈນີແນວປີ ໑໙໕໔ ແລະ ປີ ໑໙໖໒ ກ່ຽວກັບລາວ ກໍໄດ້ຮັບຮູ້ ເອກະລາດ, ອະທິປະໄຕ, ຄວາມເປັນກາງ ແລະ ດິນແຜ່ນດິນ ອັນຄົບຖ້ວນ ຂອງປະເທດເຮົາ.

ດ້ວຍເຈດຕະນາດີຂອງຕົນ, ຜ່ານໄລຍະການຕໍ່ສູ້ກູ້ຊາດ ຕ້ານອາເມລິກາ ແລະ ລູກມື, ແນວລາວຮັກຊາດ ແລະ ບັນດາກຳລັງຮັກຊາດ ກໍໄດ້ສ້າງຄວາມຖືກຕ້ອງ ປອງດອງຊາດ ເຖິງສອງເທື່ອ. ໃນການສ້າງ ຄວາມຖືກຕ້ອງປອງດອງກັນ ແຕ່ລະເທື່ອນັ້ນ, ປະຊາຊົນເຮົາ ທຸກຊັ້ນຄົນ ກໍມີຄວາມຫວັງວ່າ, ພີ່ນ້ອງຮ່ວມຊາດດຽວກັນ ຄົງຈະມີຄວາມສາມັກຄີ ຮັກແພງກັນ, ກຳຈັດປັດເປົ່າ ຄວາມອາຄາດບາດໝາງຕໍ່ກັນ,

ແລ້ວພ້ອມພຽງຮຽງຫນ້າກັນ ສ້າງບ້ານແປງເມືອງ ໃຫ້ຈະເລີນຮຸ່ງເຮືອງ. ແຕ່ບໍ່ ຈັກກະພັດອາເມລິກາຜູ້ເສຍໄຊ ບໍ່ມັ້ນບໍ່ຫນັກບົນ, ຊ້ຳພັດຍັງບໍ່ຍອມປະລະໃຈດຳອຳມະຫິດ ຂອງພວກເຂົາທີ່ຫວັງ ຈະຍຶດຄອງປະເທດເຮົາ ແລະ ເຮັດໃຫ້ປະເທດເຮົາ ເປັນຫົວເມືອງຂຶ້ນແບບໃຫມ່ ແລະ ຖານທັບຂອງພວກເຂົາ, ສະນັ້ນ, ໃນເມື່ອມີຄວາມຖືກຕ້ອງປອງດອງຊາດເທື່ອໃດ, ຈັກກະພັດອາເມລິກາກໍ່ໄດ້ ສວຍໂອກາດປັບປຸງກຳລັງລູກນ້ອງຂອງພວກເຂົາ, ແລ້ວສືບຕໍ່ກໍ່ສົງຄາມຢູ່ລາວຄືນໃຫມ່. ຍ້ອນແນວນັ້ນ, ລັດຖະບານປະສົມແຫ່ງຊາດເທື່ອທີ່ຫນຶ່ງ ອັນມີແນວລາວຮັກຊາດເຂົ້າຮ່ວມນຳ ທີ່ໄດ້ຮັບການຈັດຕັ້ງຂຶ້ນ ບໍ່ພໍໃດເດືອນນັ້ນ ຈຶ່ງໄດ້ຖືກຈັກກະພັດອາເມລິກາ ແລະ ລູກນ້ອງທຳລາຍມ້າງ, ແລະ ເທື່ອທີ່ສອງ, ສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວໄດ້ເຊັນກັນ, ລັດຖະບານປະສົມຊົ່ວຄາວແຫ່ງຊາດ ເຊິ່ງປະກອບດ້ວຍຕົວແທນ ຂອງສາມຝ່າຍ ໄດ້ຈັດຕັ້ງຂຶ້ນນັ້ນ, ແຕ່ກໍ່ໄດ້ຖືກພວກເຂົາທຳລາຍອີກ. ສະນັ້ນ, ເຖິງວ່າ ຊາດເຮົາໄດ້ມີຄວາມຖືກຕ້ອງປອງດອງກັນມາສອງເທື່ອແລ້ວ, ແຕ່ໄລຍະສັນຕິພາບນັ້ນແມ່ນ ສັ້ນທີ່ສຸດ.

ເນື່ອງຈາກກົນອຸບາຍພື້ນຖານ ຂອງຈັກກະພັດອາເມລິກາຕໍ່ລາວ ດັ່ງກ່າວນັ້ນ, ໂດຍສະເພາະແມ່ນເພື່ອກອບກູ້ເອົາພວກເຂົາ ໃຫ້ພົ້ນຈາກທ່າປະລາໄຊ, ຈົນຕາແຈຢູ່ລາວ ແລະ ຢູ່ພາກໃຕ້ຫວຽດນາມນັ້ນ, ນັບແຕ່ປີ ໑໙໖໔ ມາເຖິງປະຈຸບັນ, ພວກເຂົາຍິ່ງເພີ່ມທະວີສົງຄາມຮຸກຮານລາວ ແລະ ຫວຽດນາມຂຶ້ນສູ່ຂັ້ນດຸເດືອດທີ່ສຸດ. ໃນໄລຍະດັ່ງກ່າວນັ້ນ, ຈັກກະພັດອາເມລິກາ ບໍ່ພຽງແຕ່ໄດ້ໂຄ່ນລົ້ມ ລັດຖະບານປະສົມແຫ່ງຊາດຂອງລາວ ແລະ ກໍ່ສົງຄາມຢູ່ລາວຄືນໃຫມ່ເທົ່ານັ້ນ, ພວກເຂົາຍັງໄດ້ໃຊ້ລາວເປັນສະຫນາມຮົບ ສົມທົບເພື່ອເພີ່ມທະວີສົງຄາມຢູ່ຫວຽດນາມອີກດ້ວຍ, ເຮັດໃຫ້ລັກສະນະ ສົງຄາມຢູ່ລາວ ເຖິງວ່າຍັງຢູ່ໃນຂອບເຂດຂອງສົງຄາມພິເສດ, ແຕ່ລະດັບການໃຊ້ອາວຸດ, ເຕັກນິກການທະຫານ ແລະ ຂະຫນາດຂອງການໃຊ້ກຳລັງທະຫານ ຊ້ຳພັດໄດ້ດຳເນີນໄປໃນລະດັບສູງທີ່ສຸດ. ຈັກກະພັດອາເມລິກາໄດ້ໃຊ້ກອງທັບອາກາດ, ຍຸດທະວິທີ ແລະ ຍຸດທະສາດ ຖອກເທລູກລະເບີດ ແລະ ຢາພິດເຄມີເປັນລ້ານໆໂຕນລົງໃສ່ ປະເທດເຮົາ. ພວກເຂົາຍັງໄດ້ນຳເອົາກອງທະຫານຫຸ່ນໄຊງ່ອນ ແລະ ກອງທະຫານໄທ ເຂົ້າມາລາວຢ່າງອຶກກະທຶກຄຶກໂຄມ ແລະ ເປີດແປນທີ່ສຸດ. ຍິ່ງເພີ່ມທະວີສົງຄາມຮຸກຮານທີ່ໃດ, ຈັກກະພັດອາເມລິກາກໍ່ຍິ່ງ ຮ້ອງໂຮໃສ່ຮ້າຍປ້າຍສີ, ໃຊ້ທຸກຮູບການອັນຕ່ຳຊ້າ ເພື່ອເສກສັນປັ້ນແຕ່ງອັນທີ່ເອີ້ນວ່າ "ຫວຽດນາມເຫນືອ ຮຸກຮານລາວ", ໂດຍຫວັງຫລອກລວງ ສຽງວິພາກວິຈານ ຊຸກຍູ້ຄົນລາວທີ່ອາໄສເງິນໂດລາ ແລະ ເປັນລູກນ້ອງອາເມລິກາ ຮ້ອງໂຮເພື່ອໃຫ້ຈັກກະພັດອາເມລິກາ ຊ່ວຍເຫລືອຕື່ມ, ແລະ ເພື່ອປົກປິດໂທດກຳຂອງ ອາເມລິກາຜູ້ເປັນນາຍ ແລະ ໂທດກຳຂອງພວກເຂົາເອງ ທີ່ໄດ້ຮ່ວມມື ແລະ ແລ່ນຕາມກົ້ນອາເມລິກາ. ນັ້ນແມ່ນດ້ານຫນຶ່ງຂອງ ສະພາບການຕົວຈິງທີ່ພວກຂ້າພະເຈົ້າ ໄດ້ເວົ້າມາຫລາຍແລ້ວ.

ແຕ່ໃດໆມາ ກໍ່ເຊັ່ນດຽວກັບໃນວາລະປະຊຸມ ໕ ເທື່ອທີ່ຜ່ານມາ, ພວກຂ້າພະເຈົ້າ ເຄີຍໄດ້ກ່າວປະນາມ ການຮຸກຮານຂອງ ຈັກກະພັດອາເມລິກາຢູ່ລາວ ແລະ ກົນອຸບາຍຂາຍຊາດ ຂອງອຳນາດການປົກຄອງວຽງຈັນ ຕໍ່ຫາງສຽງພາຍໃນ ແລະ ຕ່າງປະເທດມາແລ້ວ, ແຕ່ປານນັ້ນ, ຄະນະຜູ້ແທນຝ່າຍຂວາວຽງຈັນກໍ່ຍັງ ຕັ້ງແກ້ງປະຕິເສດ, ຕີປອງຊອກຫາທຸກວິທີ ເພື່ອປົກປິດການຮຸກຮານ ຂອງຈັກກະພັດອາເມລິກາ ແລະ ບໍລິວານ. ຍິ່ງກວ່ານັ້ນ, ພວກເຂົາຍັງບິດເບືອນ ການຕໍ່ສູ້ອັນເປັນທຳ ຂອງບັນດາກຳລັງຮັກຊາດ ແລະ ປະຊາຊົນເຮົາຢ່າງບ້າອາດ. ເມື່ອຈັກກະພັດອາເມລິກາ ໄດ້ເຮັດໃຫ້ອິນດູຈີນ ກາຍເປັນສະຫນາມຮົບອັນດຽວແລ້ວ, ປະຊາຊົນອິນດູຈີນຈຶ່ງຈຳເປັນ ຕ້ອງສາມັກຄີຊ່ວຍເຫລືອ ແລະ ປະສົມປະສານກັນ ເພື່ອຕ້ານ

ກັບສັດຕູຮ່ວມຂອງຕົນ, ແຕ່ພວກເຂົາ ຊໍ້າພັດເອີ້ນວ່າ ເປັນການແຊກແຊງ ເຂົ້າວຽກງານ ພາຍໃນຂອງກັນ. ແຕ່ຄວາມຈິງ ຍ່ອມບໍ່ໜີ ຈາກຄວາມຈິງ, ຈັກກະພັດອາເມລິກາ ຮຸກຮານລາວ, ຮຸກຮານອິນດູຈີນນັ້ນ ແມ່ນຄວາມເປັນຈິງ ທີ່ທົ່ວໂລກ ໄດ້ອອກ ສຽງຄັດຄ້ານ ມາພໍແຮງແລ້ວ. ຈົນຮອດອຳນາດການປົກຄອງອາເມລິກາເອງ ກໍ່ບໍ່ອາດຈະ ປົກປິດ ແລະຈຳຕ້ອງຮັບ ສາລະພາບ ການຮຸກຮານ ຂອງເຂົາດັ່ງກ່າວນັ້ນ.

ສະພາບການຕົວຈິງຢູ່ລາວ ແມ່ນປະເທດຊາດ ອັນແສນຮັກ ຂອງພວກເຮົາ ໄດ້ຖືກຈັກກະພັດອາເມລິກາຮຸກຮານ. ໃນເມື່ອເລື່ອງນີ້ ໄດ້ເປັນທີ່ຈະແຈ້ງທີ່ສຸດແລ້ວ, ຖ້າຜູ້ໃດຫາກ ປົກປິດ ໃຫ້ແກ່ຜູ້ຮຸກຮານທີ່ຖືກປະຈານໜ້າແລ້ວນັ້ນ, ກໍ່ໝາຍຄວາມວ່າ ຜູ້ນັ້ນ ໄດ້ເຊີຍໂສມໜ້າ ອັນເປື້ອນເປິຂອງຕົນ ທີ່ເປັນລູກມືຂອງຈັກກະພັດອາເມລິກາແລະເຮັດໃຫ້ຕົນຖືກໂດດດ່ຽວ. ອາດຈະແມ່ນ ຍ້ອນແນວນັ້ນ, ພາຍຫລັງທີ່ໄດ້ ປະຕິເສດ ໄປທົ່ວທິບ ມາຫລາຍເທື່ອແລ້ວ, ໃນວາລະປະຊຸມເທື່ອແລ້ວນີ້, ຄະນະຜູ້ແທນ ຝ່າຍຂວາວຽງຈັນຈຳຕ້ອງຮັບຮູ້ຄວາມຈິງ ແລະຈຳເປັນ ຕ້ອງໄດ້ເວົ້າເຖິງ ບັນຫາເຄົາລົບ ອະທິປະໄຕ ແລະຄວາມເປັນກາງ ຂອງປະເທດຊາດ. ແຕ່ ໃນເວລາ ທີ່ຈຳຕ້ອງຮັບຮູ້ຄວາມຈິງ ທີ່ປະເທດເຮົາ ຖືກຈັກກະພັດອາເມລິກາ ຮຸກຮານນັ້ນ, ພວກທ່ານ ຊໍ້າພັດຊອກຫາວິທີ ເພື່ອປົກປິດ ໃຫ້ແກ່ຈັກກະພັດອາເມລິກາ. ໃນເທື່ອນີ້ກໍ່ຄື ຕັ້ງແຕ່ໃດໆມາ, ພວກທ່ານ ໄດ້ຮ້ອງໂຮວ່າ ປະເທດສາທາລະນະລັດ ປະຊາທິປະໄຕຫວຽດນາມຮຸກຮານລາວ. ນັ້ນ ຕັ້ງແມ່ນມີເຈດຕະນາຕັ້ງ ປີ້ນຂາວເປັນດຳ, ກົ້ມໂທດຮຸກຮານ ໄປໃສ່ຊາດໜຶ່ງ ທີ່ພວມຖືກຈັກກະພັດອາເມລິກາ ຮຸກຮານ ແລະຈຳຕ້ອງດຳເນີນ ການສູ້ຮົບ ຕ້ານການຮຸກຮານ ດັ່ງກ່າວນັ້ນ, ຊໍ້າພັດວ່າ ໄປຮຸກຮານປະເທດອື່ນ. ພວກທ່ານ ຍັງຄົງປະຕິບັດກົນອຸບາຍ ຫລອກລວງ, ໂດຍຫວັງເຮັດໃຫ້ມວນຊົນເຂົ້າໃຈຜິດວ່າ, ປະເທດຊາດ ຂອງພວກເຮົາ ບໍ່ໄດ້ຖືກຈັກກະພັດ ອາເມລິກາຮຸກຮານ ຢ່າງໂຫດຮ້າຍປ່າເຖື່ອນ, ແຕ່ຫາກຖືກ ປະເທດອື່ນມາ ຮຸກຮານ. ໝົດທັງຂໍ້ທີ່ໜຶ່ງ ຂອງຄຳຖະແຫລງ ຂອງພວກທ່ານ, ພວກທ່ານ ໄດ້ໃຊ້ສັບ ທີ່ວ່າ "ຕ່າງປະເທດ", ເຊັ່ນ: ທວງໃຫ້ຕ່າງປະເທດຖອນທະຫານ, ລົບລ້າງຖານທັບ, ຕ່າງປະເທດຕ້ອງໃຊ້ຄ່າເສຍຫາຍໃນສົງຄາມ ແລະ ອື່ນໆ. ຄຳວ່າ "ຕ່າງປະເທດ" ນັ້ນມັນແມ່ນໃຜແທ້ ? ພວກຂ້າພະເຈົ້າເຫັນມີຄວາມຈຳເປັນ ຕ້ອງເວົ້າໃຫ້ແຈ້ງວ່າ, ແມ່ນຈັກກະພັດອາເມລິກາ ພ້ອມດ້ວຍບໍລິວານໄທນັ້ນເອງ. ພວກທ່ານຄວນເຊົາສາ, ບໍ່ຄວນໃຊ້ຍູທຳນອງແບບມະລຸ່ມມະລ່ອງແນວນັ້ນອີກ. ພວກທ່ານເວົ້າແນວນັ້ນ ກໍ່ບໍ່ອາດຈະພິກປີ້ນຄວາມຈິງໄດ້, ບໍ່ອາດຈະປົກປິດການຮຸກຮານຂອງຈັກກະພັດອາເມລິກາ ແລະ ກໍ່ບໍ່ແກ້ໄຂບັນຫາຫຍັງໄດ້, ມີແຕ່ຈະເຮັດໃຫ້ການເຈລະຈາຂອງ ພວກເຮົາຍືດເຍື້ອໄປຢ່າງໄຮ້ປະໂຫຍດເທົ່ານັ້ນ.

ພວກທ່ານຫວງ ເຖິງອະທິປະໄຕແຫ່ງຊາດຂອງລາວ, ແຕ່ຊໍ້າພັດບໍ່ເວົ້າເຖິງ ຈັກກະພັດອາເມລິກາວ່າ ເປັນຜູ້ຢຽບຢ່ຳ ອະທິປະໄຕຂອງລາວ, ດຳເນີນສົງຄາມຮຸກຮານລາວ, ບໍ່ຫວງໃຫ້ລົບລ້າງ ອຳນາດອິທິພົນ ຂອງອາເມລິກາຢູ່ລາວ ຢ່າງເດັດຂາດ ແລະ ທັງບໍ່ວາງມາດຕາຕ່າງໆ ເພື່ອຕັດຂາດບໍ່ໃຫ້ຈັກກະພັດອາເມລິກາ ມີເງື່ອນໄຂຕິດພັນກັບລາວ ຕໍ່ໄປເພື່ອຕາວກັບຄືນມາຮຸກຮານລາວໃໝ່.

ຄະນະຜູ້ແທນບັນດາກຳລັງຮັກຊາດ ພວກຂ້າພະເຈົ້າກໍ່ໄດ້ເວົ້າຫລາຍ ເທື່ອແລ້ວ ກ່ຽວກັບສິດພື້ນຖານຂອງຊາດ. ເພື່ອສະແດງທັດສະນະຂອງພວກຂ້າພະເຈົ້າ ຕໍ່ຂໍ້ສະເໜີຕ່າງໆ ໃນຄຳຖະແຫລງຂອງພວກທ່ານ, ໃນວາລະປະຊຸມເທື່ອນີ້, ພວກຂ້າພະເຈົ້າຂໍຍ້ຳຄືນວ່າ:

- ອະທິປະໄຕແຫ່ງຊາດ ແມ່ນສິດອັນສັກກາລະບູຊາ ທີ່ບໍ່ມີໃຜຈະລະເມີດໄດ້. ຈັກກະພັດອາເມລິກາ

ແລະ ບໍລິວານໄດ້ລະເມີດ ອະທິປະໄຕຂອງລາວ, ດັ່ງນັ້ນ ຈັກກະພັດອາເມລິກາ ແລະ ບໍລິວານ ຕ້ອງຢຸດເຊົາການລະເມີດດັ່ງກ່າວນີ້ຢ່າງສິ້ນເຊີງ, ຕ້ອງເຄົາລົບສັນຍາເຊີແນວປີ ໑໙໕໔ ກ່ຽວກັບລາວ, ຕ້ອງເຄົາລົບອະທິປະໄຕ, ເອກະລາດ, ເອກະພາບ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງລາວ ຢ່າງເຂັ້ມງວດ.

- ເພື່ອເຮັດໃຫ້ອະທິປະໄຕແຫ່ງຊາດ ໄດ້ຮັບຄວາມເຄົາລົບນັບຖືຢ່າງເຂັ້ມງວດ, ຈັກກະພັດອາເມລິກາ ແລະ ບໍລິວານຕ້ອງຢຸດເຊົາສົງຄາມຮຸກຮານລາວ ຢ່າງຕະຫຼອດ ການ, ຕ້ອງຢຸດເຊົາທຸກການວິດພັນທາງການທະຫານຢູ່ລາວ ແລະ ທຸກການແຊກແຊງເຂົ້າລາວ.

- ທາງດ້ານພາຍໃນ, ເນື່ອງຈາກຂໍ້ສະເໜີໃຫມ່ຂອງພວກທ່ານແລ້ວ, ພວກຂ້າພະເຈົ້າເຫັນວ່າ ພວກທ່ານຍັງຄົງປະຕິເສດບໍ່ຮັບຮູ້ການຕໍ່ສູ້ ຮັກຊາດຂອງ ປະຊາຊົນບັນດາຊົນຊາດລາວເຮົາ, ຍັງຕັ້ງແກ້ງອີງໃສ່ເງິນໂດລາ ແລະ ອາວຸດຂອງອາເມລິກາ ເພື່ອທັບຕ້ານ ບັນດາກຳລັງຮັກຊາດ ເຊິ່ງພວມມີໄຊຊະນະຢູ່ນັ້ນ, ແຕ່ພວກທ່ານກໍບໍ່ສາມາດເຮັດຫຍັງໄດ້. ພວກຂ້າພະເຈົ້າຂໍຍົ້ນຄືນ ຄວາມຈິງຢູ່ລາວ ອັນໜຶ່ງອີກຄື: ຍ້ອນມີການຮຸກຮານຂອງຈັກກະພັດອາເມລິກາ, ດັ່ງນັ້ນ ໃນເກືອບ ໒໐ ປີມານີ້ ຈຶ່ງມີການຕໍ່ສູ້ປົດປ່ອຍ ຂອງປະຊາຊົນເຮົາ, ແລະການຕໍ່ສູ້ດັ່ງກ່າວນັ້ນ ກໍໄດ້ບັນລຸນັບຂະຫຍາຍຕົວ ແລະມີໄຊ. ມາຮອດຖຶງນັ້ນ, ສະພາບການ ການເມືອງພາຍໃນ ຂອງລາວເຮົາ ຈຶ່ງເປັນຮູບເປັນຮ່າງຂຶ້ນແລະມີຈຸດພິເສດໃໝ່ຄື: ໄດ້ມີສອງເຂດ, ສອງອຳນາດການປົກຄອງ, ສາມກຳລັງການເມືອງ ແລະກຳລັງປະກອບອາວຸດ. ບັນດາກຳລັງຮັກຊາດ ໄດ້ມີຖານະຖືກກົດໝາຍ, ໄດ້ມີສັນຍາເຊີແນວປີ ໑໙໕໔ ກ່ຽວກັບລາວຮັບຮູ້, ແລະປະຈຸບັນນີ້ ພວມໄດ້ຮັບ ໄຊຊະນະ ແລະມີບົດບາດອັນສຳຄັນ ໃນຊີວິດການເມືອງ ຂອງປະເທດຊາດ. ຍ້ອນແນວນັ້ນ, ພວກຂ້າພະເຈົ້າ ຈຶ່ງຖືວ່າ, ຖ້າຢາກແກ້ໄຂ ບັນຫາການເມືອງພາຍໃນຂອງປະເທດເຮົາ ຢ່າງຖືກຕ້ອງເໝາະສົມ, ແມ່ນ ຕ້ອງອີງໃສ່ຈຸດພິເສດ ດັ່ງທີ່ໄດ້ກ່າວມານັ້ນ, ແລະວິທີການອັນດຽວ ທີ່ຖືກຕ້ອງ ແມ່ນ ຕ້ອງເຈລະຈາ ປຶກສາຫາລືກັນ ບົນຈິດໃຈສະເໝີພາບ ລະຫວ່າງຝ່າຍ ທີ່ກ່ຽວຂ້ອງ.

**ບັນດາທ່ານ,**

ໂດຍຍຶດໝັ້ນ ໃນເຈດຕະນາດີ ທີ່ຢາກແກ້ໄຂບັນຫາ ຂອງປະເທດຊາດ ບ້ານເມືອງ ໂດຍສັນຕິວິທີ, ດັ່ງນັ້ນ, ໃນເມື່ອກ່ອນ, ແນວລາວຮັກຊາດ ກໍເຄີຍເປັນເຈົ້າການ ພ້ອມກັບຝ່າຍຂວາ ປະຕິບັດຄວາມຖືກຕ້ອງປອງດອງຊາດ ເທື່ອໜຶ່ງ, ແລະຕໍ່ມາ ແນວລາວຮັກຊາດ ພ້ອມທັງກຳລັງ ເປັນກາງຮັກຊາດ ກໍເປັນເຈົ້າການ ພ້ອມກັບຝ່າຍຂວາ ປະຕິບັດ ຄວາມປອງດອງຊາດ ເທື່ອທີສອງ ແລະເປັນເອກະພາບກັນ ໃນການກະທຳ ບົນໂຄງການການເມືອງ ຮ່ວມ, ແນໃສ່ ຮັບໃຊ້ການປົກປັກຮັກສາ ເອກະລາດ ແລະຄວາມເປັນກາງ ຂອງລາວ ຢ່າງມີຕົນສັກສິດ, ປົກປັກຮັກສາ ສັນຕິພາບ, ສ້າງຄວາມຖືກຕ້ອງປອງດອງ ເພື່ອຮ່ວມຈິດຮ່ວມໃຈກັນ ສ້າງສາ ພັດທະນາ ປະເທດຊາດ ໃຫ້ຈະເລີນ ຮຸ່ງເຮືອງ. ແຕ່ ເປັນໜ້າເສຍດາຍ ທີ່ຄວາມປາຖະໜາ ອັນເຕັມໄປດ້ວຍ ເຈດຕະນາດີ ທັງສອງເທື່ອ ຂອງແນວລາວຮັກຊາດ ແລະກຳລັງເປັນກາງຮັກຊາດ ດັ່ງກ່າວນັ້ນ ໄດ້ຖືກຈັກກະພັດອາເມລິກາ ແລະລູກມື ທຳລາຍກ້ຽງ.

ມາໃນເທື່ອນີ້, ໃນເວລາ ວາງວິທີການການເມືອງ ໕ ຂໍ້ອອກ ແລະໃນການເຈລະຈາ ກັບຝ່າຍຂວາວຽງຈັນ ປະຈຸບັນນີ້, ບັນດາກຳລັງຮັກຊາດ ກໍຍັງມີແຜນນະໂຍບາຍ, ເຮັດແນວໃດ ໃຫ້ບັນດາຝ່າຍ ພ້ອມກັບຕົກລົງ ຟື້ນຟູ ຄວາມຖືກຕ້ອງປອງດອງຊາດຄືນ ໂດຍໄວ ແລະໃຫ້ສອດຄ່ອງ ກັບຈຸດພິເສດ

ຂອງສະພາບການຢູ່ລາວ ໃນປະຈຸບັນ. ພວກຂ້າພະເຈົ້າ ໄດ້ສະເໜີໃຫ້ ບັນດາຝ່າຍ ພ້ອມກັນ ຈັດຕັ້ງ ສະພາການເມືອງປະສົມ ແລະລັດຖະບານປະສົມແຫ່ງຊາດ ຊົ່ວຄາວຊຸດໃໝ່, ແລະຖືອັນນັ້ນ ເປັນວິທີການ ປະຕິບັດຕົວຈິງ ທີ່ຖືກຕ້ອງ ເພື່ອຜ່ານຜ່າ ຂໍ້ຂາດຕົກບົກພ່ອງເກົ່າກ່ອນ, ກ້າວຂຶ້ນ ບັນລຸຈຸດໝາຍຄື: ພ້ອມ ກັນຮັກຫອມຖະໜອມ ສ້າງຄວາມຖືກຕ້ອງ ປອງດອງຊາດ ໃນຂະນະ ທີ່ຍັງລໍຖ້າ ການຈັດຕັ້ງ ການເລືອກ ຕັ້ງ ສະພາ ຊຸດໃໝ່ ແລະລັດຖະບານປະສົມ ເປັນທາງການ ທີ່ເປັນຕົວແທນໃຫ້ ປະຊາຊົນ ບັນດາຊົນ ຊາດ ທຸກຊັ້ນຄົນ ໃນທົ່ວປະເທດ.

ສະພາ ປະສົມການເມືອງ ແມ່ນ ອົງການປອງດອງຊາດສູງສຸດ ເຊິ່ງມີໜ້າທີ່ ສືບຕໍ່ເປີກສາ ຫາລື ແລະວາງນະໂຍບາຍ ແລະວິທີການແກ້ໄຂ ບັນດາບັນຫາ ທີ່ພົວພັນ ລະຫວ່າງ ບັນດາຝ່າຍ ເພື່ອ ກ້າວໄປເຖິງ ຄວາມເຂົ້າໃຈ ເຊິ່ງກັນແລະກັນ, ຖືກຕ້ອງປອງດອງກັນ ມີນ້ຳໃຈ ບໍ່ໃຫ້ທຳລາຍກັນ. ອົງການດັ່ງກ່າວ ຍັງຕ້ອງມີໜ້າທີ່ ສືບຕິດຊອບ ຊຸກຍູ້, ຊ່ວຍເຫຼືອ ລັດຖະບານປະສົມ ໃນການປະຕິບັດ ຂໍ້ຕົກລົງຕ່າງໆ ທີ່ໄດ້ເຊັນກັນ ແລະປະຕິບັດ ໂຄງການການເມືອງ ຂອງລັດຖະບານປະສົມ ຢ່າງເຂັ້ມງວດ ເຊິ່ງບັນດາຝ່າຍ ໄດ້ຕົກລົງກັນ.

ລັດຖະບານປະສົມ ອັນມີໂຄງການການເມືອງໃໝ່ ທີ່ສອດຄ່ອງກັບ ສະພາບການບ້ານເມືອງ ໃນປະຈຸບັນ ແລະມີກົງຈັກໃໝ່, ເໝາະສົມກັບ ພາລະໜ້າທີ່ ແລະເນື້ອໃນ ໂຄງການການເມືອງນັ້ນ, ແມ່ນ ອົງການປະຕິບັດ ຂໍ້ຄວາມຕ່າງໆ ທີ່ໄດ້ຕົກລົງກັນນັ້ນ ຢ່າງເດັດຂາດ, ສ້າງເງື່ອນໄຂຕົວຈິງ ໃຫ້ ຄົນລາວ ແລະປະເທດຊາດບ້ານເມືອງຂອງເຮົາ ຖືກຕ້ອງປອງດອງ ແລະເປັນເອກະພາບກັນ ຢ່າງແທ້ຈິງ, ບໍ່ໃຫ້ຈັກກະພັດອາເມລິກາ ແລະບໍລິວານ ເລັດລອດເຂົ້າມາ ທຳລາຍໄດ້ອີກ.

ສະພາ ປະສົມການເມືອງ ແລະລັດຖະບານປະສົມແຫ່ງຊາດ ຊົ່ວຄາວຊຸດໃໝ່, ແມ່ນອົງການ ຈັດຕັ້ງ ເພື່ອຮັບປະກັນການຮັກສາ ສັນຕິພາບ ແລະປະຕິບັດຄວາມ ຖືກຕ້ອງປອງດອງ ແລະເອກະພາບ ແຫ່ງຊາດ ເຊິ່ງໄດ້ວາງອອກ ບົນພື້ນຖານ ບົດຮຽນ ໃນການຮ່ວມລາວສອງເທື່ອກ່ອນ ທີ່ໄດ້ຖືກ ຈັກກະພັດອາເມລິກາ ແລະລູກມືທຳລາຍ, ແຕ່ປານນັ້ນ ຄະນະຜູ້ແທນຝ່າຍຂວາວຽງຈັນ ກໍຍັງຄົງຊຸຊີ ປະຕິເສດ. ຍິ່ງກວ່ານັ້ນ, ຍັງນຳເອົາຂໍ້ສະເໜີ ພິກປິ້ນຫລາຍຢ່າງ ອັນບໍ່ມີເຫດ ມີຜົນອອກມາອີກ. ພວກທ່ານ ຍັງ ຄົງມີແຜນນະໂຍບາຍ ທີ່ຢາກບັງຄັບ ໃຫ້ບັນດາກຳລັງຮັກຊາດ ກັບຄືນມາເຂົ້າ ຢູ່ໃນວົງໜີບເຕັງ ຂອງ ຝ່າຍຂວາວຽງຈັນ, ແລ້ວມີ ເລລ່ຽມ ເພື່ອກືນກິນກຳລັງຮັກຊາດ ພວກຂ້າພະເຈົ້າ ໄປແຕ່ລະກ້າວ.

ສິ່ງທີ່ບັງອາດທີ່ສຸດນັ້ນ, ແມ່ນ ພວກທ່ານ ຍັງຄົງຮັກສາທ່າ ເຈລະຈາ ລະຫວ່າງ ອັນທີ່ເອີ້ນວ່າ "ຄະນະຜູ້ແທນ ລັດຖະບານປະສົມແຫ່ງຊາດ" (ເຊິ່ງໃນຕົວຈິງ ໄດ້ຖືກພວກຂວາຈັດ ລູກມືອາເມລິກາ ໂຄ່ນລົ້ມ ແຕ່ວັນທີ່ ໑໙/໔/໑໙໗໔ ພຸ້ນ ແລະໃນປະຈຸບັນ ໄດ້ມີການປ່ຽນແປງ ທາງດ້ານຮູບ ຢ່າງຄົບ ເຖິງ ແລະໄດ້ປ່ຽນທາດ ທາງດ້ານເນື້ອໃນ ຢ່າງໝົດສິ້ງແລ້ວນັ້ນ) ກັບກຳລັງການເມືອງ ທຳມະດາ ກຳລັງໜຶ່ງ, ໂດຍບໍ່ໄດ້ຄຳນຶງເຖິງ ສະພາບການຕົວຈິງ ຂອງລາວ ດັ່ງທີ່ກ່າວມາແລ້ວນັ້ນ. ຈາກນັ້ນ ຈຶ່ງເຮັດໃຫ້ບັນຫາ ຖານະ ຂອງຄະນະຜູ້ແທນ, ບັນຫາ ປັກທຸງ ໄສ່ຫ້ອງປະຊຸມ, ບັນຫາ ນຳເອົາຜູ້ສັງເກດການ ຂອງອັນທີ່ເອີ້ນວ່າ "ສະພາ" ເຂົ້າມາໃນຫ້ອງປະຊຸມ... ມາຮອດດຽວນີ້ ກໍຍັງຖູໄປ ໄຖ ມາ ບໍ່ແກ້ໄຂໄດ້, ອັນເປັນການຂັດຂວາງ ບໍ່ໃຫ້ການເຈລະຈາ ດຳເນີນໄປ ດ້ວຍຄວາມຈິງໃຈ ແລະ ເຂັ້ມງວດ.

ຄຽງຄູ່ກັບ ການຫນ່ວງຫນ່ຽວ ການເຈລະຈາ ດ້ວຍກົນອຸບາຍ ລວງລ່ຽມ ແລະຍູ້ຄວາມບິດເບືອນຕ່າງໆ ດັ່ງທີ່ກ່າວມານັ້ນ, ຈັກກະພັດອາເມລິກາ ແລະລູກມືຂວາຈັດ ຍັງໄດ້ນຳເອົາ ກອງທະຫານໄທ ເຂົ້າມາລາວຕື່ມອີກ, ສົມທົບກັບ ກຳລັງພິເສດ ແລະທະຫານຝ່າຍຂວາ ໂດຍມີການຫນູນຊ່ວຍ ຢ່າງແຂງແຮງ ຂອງກອງທັບອາກາດ ອາເມລິກາ, ເຊິ່ງມີທັງ ຍົນບຸດທະສາດ ເບ-໕໒, ເປີດບັ້ນບຸກໂຈມຕີ ບຽດຢືດ ຢ່າງຂະຫນານໃຫຍ່ ເຂົ້າເຂດກວດກາ ຂອງບັນດາກຳລັງຮັກຊາດ ຢ່າງຕໍ່ເນື່ອງກັນ, ເປັນຕົ້ນ ແມ່ນຢູ່ຕາມ ບໍລິເວນ ຍຸດທະສາດ ທີ່ສຳຄັນ, ເຊັ່ນ ທົ່ງໄຫຫີນ, ທາງເລກ ໗ ແລະພູພຽງນະເວນ.

ຢູ່ພາກເຫນືອ, ພວກເຂົາໄດ້ ໃຊ້ທະຫານຕັ້ງ ໕໐ ກວ່າກອງພັນ (ໃນນັ້ນ ມີທະຫານໄທ ໑໐ ກວ່າກອງພັນ ໂດຍມີກອງທັບອາກາດ ອາເມລິກາ ຄຸ້ມກັນໃຫ້ ມື້ລະຮ້ອຍກວ່າຖ້ຽວລຳ ເຊິ່ງມີທັງຍົນບຸດທະສາດ ເບ-໕໒ ເປີດການບຸກໂຈມຕີ ຢ່າງຕໍ່ເນື່ອງກັນ ເຂົ້າບໍລິເວນ ທົ່ງໄຫຫີນ, ເມືອງສຸຍ, ເມືອງຄຳ, ແລະ ເພື່ອສົມທົບກັບ ການບຸກໂຈມຕີດັ່ງກ່າວນີ້, ພວກເຂົາຍັງ ໃຊ້ກົມກອງຕ່າງໆ) ຢູ່ພາກ ໑ ເປີດການກວາດລ້າງ ບໍລິເວນ ປາກອູ, ປາກເຊືອງ ໃນແຂວງຫລວງພະບາງ.

ຢູ່ພາກໃຕ້, ພວກເຂົາໄດ້ໃຊ້ທະຫານ ໒໐ ກວ່າກອງພັນ ບຸກໂຈມຕີ ບຽດຢືດ ເຂົ້າເຂດປົດປ່ອຍ ຂອງບັນດາກຳລັງຮັກຊາດ ຢູ່ບໍລິເວນ ດົງຫັນ (ແຂວງສະຫວັນນະເຂດ), ສາລະວັນ ແລະເລົ່າງາມ.

ການເຄື່ອນທັບ ດັ່ງກ່າວນັ້ນ, ແມ່ນ ທັງບຽດຢືດດິນແດນ, ທັງທຳລາຍ ເຜົາຕາມ ເຄື່ອງປູກຂອງຝັງ ແລະເຮືອນຊານບ້ານຊ່ອງ ຂອງປະຊາຊົນ, ຍິງຂ້າປະຊາຊົນ ແລະບັງຄັບ ກວາດຕ້ອນເອົາເຂົາເຈົ້າ ໄປເປັນຮົ້ວ ອ້ອມທີ່ຕັ້ງຕ່າງໆ ຂອງພວກເຂົາ, ແລະດຳເນີນກົນອຸບາຍ ກວາດໂຮມເອົາປະຊາຊົນ ເຂົ້າມາຢູ່ໃນເຂດ ຄວບຄຸມ ຂອງອຳນາດການປົກຄອງ ຝ່າຍຂວາວຽງຈັນ.

ໃນຂະນະດຽວກັນນັ້ນ, ການເຄື່ອນໄຫວ ຂອງກອງທັບອາກາດ ອາເມລິກາ ກໍໄດ້ເພີ່ມຂຶ້ນຢ່າງຫລວງຫລາຍ. ພຽງແຕ່ກວ່າເຄິ່ງເດືອນ ໑໑/໗໒ ນັ້ນ, ຈຳນວນຖ້ຽວບິນ ຂອງຍົນອາເມລິກາ ທີ່ມາຖິ້ມລະເບີດໃສ່ລາວ, ຖ້າປຽບໃສ່ເດືອນ ໑໐/໗໒, ແມ່ນໄດ້ເພີ່ມຂຶ້ນສອງເທົ່າ, ພິເສດແມ່ນ ຈັກກະພັດອາເມລິກາ ໄດ້ໃຊ້ຍົນບຸດທະສາດ ເບ-໕໒ ແລະ ເບ-໕໗ ມາຖອກເທລະເບີດ ຢ່າງປ່າເຖື່ອນແບບຫນ້າກະດານ ລົງໃສ່ຫມູ່ບ້ານ ທີ່ມີປະຊາຊົນ ຫນາແຫນ້ນ ໃນຫລາຍແຫ່ງ, ເຊັ່ນ: ບໍລິເວນ ຄັງໄຂ, ກາງແສນ, ລາດແສນ ໃນແຂວງ ຊຽງຂວາງ.

ດ້ານຫນຶ່ງອີກ, ເພື່ອ ເພີ່ມທະວີ ກຳລັງບຸກໂຈມຕີ ບຽດຢືດ ຢ່າງຂະຫນານໃຫຍ່ ດັ່ງກ່າວ, ແລະໂດຍໄດ້ຮັບ ຄວາມເຫັນດີ ເຫັນພ້ອມ ຈາກອຳນາດ ການປົກຄອງວຽງຈັນ, ຈັກກະພັດອາເມລິກາ ພວມນຳເອົາ ທະຫານໄທ ຢ່າງຫລວງຫລາຍ ເຊິ່ງໃນນັ້ນ ມີທັງທະຫານຮາບ, ທະຫານປືນໃຫຍ່ ເຂົ້າມາລາວ ຕື່ມອີກ ດ້ວຍຫລາຍຮູບການ, ເຊັ່ນ: ໃຊ້ເປັນ ກົມກອງ ສົບເຂົ້າຢູ່ໃນ ສະຫນາມຮົບ ຕ່າງໆ ຫລື ໃຊ້ເປັນຫມູ່ ເປັນຫມວດ ຫລື ລາຍບຸກຄົນ ສັບປົນ ເຂົ້າຢູ່ໃນ ກົມກອງຕ່າງໆ ຂອງກຳລັງພິເສດ ວັງປາວ ແລະກອງທະຫານຝ່າຍຂວາ, ເພື່ອ ເພີ່ມຈຳນວນພົນ ໃຫ້ແກ່ກົມກອງ ເຫລົ່ານັ້ນ. ສະພາບການດັ່ງກ່າວນັ້ນ ຍັງເປັນໄພອັນຕະລາຍ ເພາະມັນຊ່ວຍໃຫ້ ພວກກຳອຳນາດ ປະຕິການໄທ ແຜ່ອິທິພົນ ເຂົ້າລາວ ເພື່ອປະຕິບັດ ລັດທິໄທໃຫຍ່ ອັນເກົ່າແກ່ ຂອງພວກເຂົາ ຕໍ່ລາວ.

ເພາະສະນັ້ນ, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ຈຶ່ງສະເໜີ ໃຫ້ພວກທ່ານ ຈົ່ງປຶກສາຫາລື ວິທີການການເມືອງ ៥ ຂໍ້ ທີ່ພວກຂ້າພະເຈົ້າ ໄດ້ສະເໜີອອກ ເມື່ອວັນທີ່ ໑໗/໑໐/໗໒ ແລ້ວນັ້ນ ຢ່າງເຂັ້ມງວດ, ບົນຈິດໃຈ ຮັບຮູ້ ສະພາບການຕົວຈິງ ຢູ່ໃນລາວ ປະຈຸບັນ; ເພື່ອພ້ອມກັນ ເຮັດໃຫ້ກອງປະຊຸມ ເຈລະຈາ ຂອງພວກເຮົາ ໄດ້ຮັບຜົນດີ, ຕອບສະໜອງກັບ ຄວາມຄອງຄອຍ ຂອງປະຊາຊົນ ທີ່ຢາກໃຫ້ ສົງຄາມອັນນອງເລືອດ ເຊິ່ງປະຊາຊົນເຮົາ ໄດ້ສູ້ທົນມາຕັ້ງ ຫລາຍຜ້າຫລາຍປີແລ້ວນັ້ນ ສິ້ນສຸດລົງໄວ, ສ້າງເງື່ອນໄຂ ເພື່ອບັນລຸ ຄວາມຖືກຕ້ອງປອງດອງ ແລະເອກະພາບຂອງຊາດ, ພ້ອມກັບ ປະກອບ ເຫື່ອແຮງ ແລະສະຕິປັນຍາ ເຂົ້າໃນການ ສ້າງສາ ປະເທດຊາດ ບ້ານເມືອງ.

ພວກຂ້າພະເຈົ້າ ສະເໜີວ່າ, ເພື່ອສະແດງ ຄວາມຈິງໃຈ ຂອງພວກທ່ານ, ພວກທ່ານຈົ່ງ ແກ້ໄຂບັນຫາ ລະບຽບການຕ່າງໆ ທີ່ຍັງຄົງຄ້າງຄາຢູ່ນັ້ນ ໃຫ້ສຸດສ້ຽງໄປ ແລະຢຸດເຊົາ ການເຄື່ອນທັບຕ່າງໆ ທີ່ບຸກໂຈມຕີ ບຽດປີດ ເຂົ້າເຂດກອດກາ ຂອງບັນດາກຳລັງຮັກຊາດ, ກວມທັງຢຸດເຊົາ ການຖິ້ມລະເບີດ ເຂັ່ນຂ້າປະຊາຊົນເຮົາ ໃນທົ່ວທຸກແຫ່ງ ເພື່ອສ້າງ ບັນຍາກາດ ອັນດີ ໃຫ້ແກ່ການ ເຈລະຈາ ./.

9ème séance

28-11-72

28 NOV 1972

ບົດຄຳຄິດຄຳເຫັນ

ຂອງ ທ່ານ ພູນ ສີປະເສີດ, ຫົວໜ້າຄະນະຜູ້ແທນ ບັນດາກຳລັງຮັກຊາດ,
ກ່າວໃນວາລະປະຊຸມ ເທື່ອທີ ໗ (ວັນທີ ໒໘-໑໑-໗໒).

---

ບັນດາທ່ານ,

ໃນວາລະປະຊຸມ ເທື່ອແລ້ວນີ້, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ພວກຂ້າພະເຈົ້າ ໄດ້ມີ ຄຳຄິດຄຳເຫັນ ທົ່ວໄປ ກ່ຽວກັບ ຂໍ້ສະເໜີ ໕ ຂໍ້ ເຊິ່ງ ຄະນະຜູ້ແທນ ຝ່າຍຂວາວຽງຈັນ ວາງອອກ ໃນ ວາລະປະຊຸມ ເທື່ອທີ ໕. ໃນວາລະປະຊຸມ ເທື່ອນີ້, ພວກຂ້າພະເຈົ້າ ເຫັນມີ ຄວາມຈຳເປັນ ຕ້ອງ ເຮັດໃຫ້ ຄຳເຫັນ ຂອງພວກຂ້າພະເຈົ້າ ກ່ຽວກັບ ຂໍ້ສະເໜີ ໕ ຂໍ້ ຂອງພວກທ່ານນັ້ນ ກະຈ່າງແຈ້ງຕື່ມ.

ຖ້າ ເບິ່ງເຜີນໆ ແຕ່ຮູບນອກແລ້ວ, ຄົນທັງຫລາຍ ອາດຈະສັງເກດເຫັນວ່າ ຂໍ້ສະເໜີ ໕ ຂໍ້ ຂອງພວກທ່ານນັ້ນ ໄດ້ມີຮູບຮ່າງ, ສຳນວນ ຄຳເວົ້າ ແລະສັບ ຈຳນວນໜຶ່ງ ຄ້າຍຄືກັນກັບ ວິທີການ ການເມືອງ ໕ ຂໍ້ ເຊິ່ງ ຄະນະຜູ້ແທນ ບັນດາກຳລັງຮັກຊາດ ໄດ້ວາງອອກ ໃນວາລະປະຊຸມ ຄັ້ງປະຖົມ ມະເລີກ, ແຕ່ເນື້ອໃນແທ້ຈິງ ກ່ຽວກັບ ຂໍ້ພື້ນຖານ ຕົ້ນຕໍນັ້ນ ແມ່ນພົກປີ້ນ ຂໍ້ສະເໜີຕ່າງໆ ຂອງພວກຂ້າ ພະເຈົ້າ. ອາດເວົ້າໄດ້ວ່າ, ຂໍ້ສະເໜີ ໕ ຂໍ້ ຂອງພວກທ່ານນັ້ນ, ແມ່ນການປະສົມ ປົນເປ ລະຫວ່າງ ຂໍ້ສະເໜີ ອັນນະລຸ້ມນະລ້ວງ ແບບລວມໆ ໃນບັນດາ ບັນຫາ ສຳຄັນຕ່າງໆ ກັບຫລັກໝັ້ນ ອັນດື້ດ້ານ, ໂຫດຫ້ຽມ ໃນບັນຫາ ພື້ນຖານ ຕົ້ນຕໍ ຂອງບັນຫາລາວ ປະຈຸບັນ. ພວກຂ້າພະເຈົ້າ ຖືວ່າ, ວິທີການ ວາງບັນຫາ ຂອງພວກທ່ານ ແມ່ນລ້ວນແຕ່ ມີເຈດຕະນາ ອັນເລິກລັບ, ແນໃສ່ເຮັດໃຫ້ ທາງສຽງ ເຂົ້າ ໃຈຜິດວ່າ, ຝ່າຍພວກທ່ານ ມີເຈດຕະນາດີ, ມີທ່າທີ ອ່ອນໂຍນ, ມີການ ປ່ຽນແປງ ຫລັກໝັ້ນ ແລະ ເອົາໃຈໃສ່ ເປິກສາ ຫາລື ຂໍ້ສະເໜີ ໕ ຂໍ້ ຂອງບັນດາ ກຳລັງຮັກຊາດ ຢ່າງເຂັ້ມງວດ. ກົນອຸບາຍ ຂອງພວກທ່ານ ດັ່ງກ່າວນີ້ ແມ່ນບໍ່ອາດ ຫລອກລວງ ປະຊາຊົນ ແລະສຽງວິພາກ ວິຈານ ໃນໂລກໄດ້ ຢ່າງເດັດຂາດ. ເຈດຕະນາ ອັນເລິກລັບ ຂອງພວກທ່ານນັ້ນແມ່ນ ບໍ່ນອກເໜືອ ຈາກການ ສວຍໃຊ້ ຂໍ້ ສະເໜີ ໕ ຂໍ້ ຂອງບັນດາ ກຳລັງຮັກຊາດ, ໃຊ້ສຳນວນ ຄຳເວົ້າ ແລະຢືມເອົາສັບ ຂອງບັນດາ ກຳ ລັງຮັກຊາດ ເພື່ອ ຕົບແຕ່ງ ຫລັກໝັ້ນ ອັນບໍ່ປ່ຽນແປງ ຂອງພວກທ່ານ ໃນບັນຫາ ຕົ້ນຕໍ ແລະຮີບຮ້ອນ ຂອງປະເທດຊາດ ພວກເຮົາ ໃນປະຈຸບັນ. ບັດນີ້, ພວກຂ້າພະເຈົ້າ ຈະໄຈ້ແຍກ ຂໍ້ສະເໜີ ແຕ່ລະຂໍ້ ຂອງພວກທ່ານ ເປັນລຳດັບ ດັ່ງຕໍ່ໄປນີ້ :

ກ່ຽວກັບຂໍ້ທີໜຶ່ງ, ພວກທ່ານ ຈຳເປັນຕ້ອງ ໄດ້ຢືນຢັນ ເຖິງຫລັກການ ຕ່າງໆ ກ່ຽວກັບ ອະທິ ປະໄຕ, ເອກະລາດ, ຄວາມເປັນກາງ, ເອກະພາບ ແລະ ຜືນແຜ່ນດິນ ອັນຄົບຖ້ວນ ກໍ່ເຊັ່ນດຽວກັນ ກັບຫລັກການ ກ່ຽວກັບ ສິດຕັດສິນ ໂດຍຕົນເອງ ຂອງປະຊາຊົນລາວ ເຊິ່ງ ພວກຂ້າພະເຈົ້າ ໄດ້ສະ ເໜີ ມາແລ້ວ. ນັ້ນ ແມ່ນສິດພື້ນຖານ ແຫ່ງຊາດ ອັນສັກກາລະ ບູຊາ ຂອງປະຊາຊົນເຮົາ ທີ່ບໍ່ມີ ໃຜ ແຕະຕ້ອງໄດ້ ແລະ ຫລາຍປະເທດ ກໍລ້ວນແຕ່ ໄດ້ຮັບຮູ້ ແລະ ເຄົາລົບນັບຖື. ໃນເມື່ອຢືນຢັນ ບັນດາ ຫລັກການ ພື້ນຖານ ດັ່ງກ່າວນັ້ນ, ພວກທ່ານ ກໍ່ຈຳຕ້ອງ ຮັບຮູ້ ຄວາມຈິງ ຢ່າງເປີດເຜີຍວ່າ, ໃນຫລາຍ ປີມານີ້, ປະເທດເຮົາ ບໍ່ມີ ເອກະລາດ ແລະ ອະທິປະໄຕ, ເອກະລາດ ແລະ ອະທິປະໄຕ ເຫລົ່ານັ້ນ

ໄດ້ຖືກຕ່າງປະເທດ ລ່ວງລະເມີດ ແລະຢຽບຢ່ຳ ຢ່ຳຢີ. ຕ່າງປະເທດນັ້ນ ແມ່ນໃຜແດ່ ? ຄອນບໍ່ງຊີ້ ອອກໂລດວ່າ, ຕ່າງປະເທດນັ້ນ ແມ່ນ ຈັກກະພັດອາເມລິກາ ແລະ ບໍລິວານ ຂອງເຂົາ, ພິເສດແມ່ນ ໄທ ແລະ ພວກທຸ່ນໄຊງ່ອນ. ບໍ່ຄວນເວົ້າ ແບບລັບໆ ລີ້ໆ ແລະ ເອົາມິດ ກັບ ສັດຕູ ມາລັບປົນ ຄົນ ເລກັນ. ບໍ່ຄວນຖື ຜູ້ຮຸກຮານ ແລະ ຜູ້ຖືກຮຸກຮານ ຄືກັນ ແລະ ເທົ່າທຽມກັນ. ການທີ່ຝ່າຍ ພວກທ່ານ ຍັງດຶງດັນ ໃສ່ຮ້າຍປ້າຍສີ ປະເທດສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ວ່າ ເປັນຜູ້ຮຸກຮານນັ້ນ, ແມ່ນໃຊ້ ຄັນທີບອງ ອັນເກົ່າແກ່ ທີ່ພວກທ່ານ ເຄີຍໃຊ້ ເຊິ່ງ ບໍ່ອາດຊອນເຊື່ອຜູ້ໃດໄດ້, ມີແຕ່ແນໃສ່ ຈຸດປະສົງ ລັບຊ່ອນຄື: ປົກປິດ ແລະ ແກ້ໂທດກຳ ຮຸກຮານລາວ ຂອງອາເມລິກາ ນັ້ນ. ມີຄວາມຈຳເປັນ ຕ້ອງຢືນຢັນ ຢ່າງເດັດຂາດວ່າ, ຈັກກະພັດອາເມລິກາ ພ້ອມດ້ວຍ ບໍລິວານ ໄທ ແລະ ທຸ່ນໄຊງ່ອນ ເປັນຜູ້ຮຸກຮານ ປະເທດເຮົາ ໂດຍກົງ ໃນເກືອບ ໒໐ ປີມາແລ້ວ, ໄດ້ກໍ່ ໄພພິບັດ, ຄວາມແຄ້ນ ທາງຕ່າງໆ ໃຫ້ແກ່ປະຊາຊົນເຮົາ ແລະ ທຳລາຍ ເຮືອນຊານ ປະເທດຊາດ ບ້ານເມືອງ ຂອງພວກເຮົາ ກໍ່ເຊັ່ນ ດຽວກັນກັບ ບັນດາປະເທດ ໃນອິນດູຈີນ ຈົນນັ້ນບໍ່ຖອນ.

ການຮຸກຮານ ຂອງຈັກກະພັດອາເມລິກາ ຕໍ່ປະເທດເຮົາ ກໍຄື ຕໍ່ຫວຽດນາມ ແລະ ກຳພູຊາ ອ້າງບ້ອງ ນັ້ນກໍ່ໄດ້ ຖືກຊາວໂລກ ກ່າວປະນາມ ມາແລ້ວ. ອັນນີ້ ແມ່ນຄວາມຈິງ ທີ່ແຈ້ງ ປານກາງເວັນ ເຊິ່ງບໍ່ມີອັນໃດ ປົກປິດໄວ້ໄດ້. ຍ້ອນແນວນັ້ນ, ຄວາມຮຽກຮ້ອງ ຕ້ອງການ ພື້ນຖານ ຂອງຊາດເຮົາ ແລະ ຂອງການຕໍ່ສູ້ ກູ້ຊາດ ຂອງປະຊາຊົນເຮົາ ໃນປະຈຸບັນ ແມ່ນ ທວງໃຫ້ ຈັກກະພັດອາເມລິກາ ຕ້ອງ ຢຸດເຊົາສົງຄາມ ຮຸກຮານ ແລະ ການຕິດພັນທຸກຢ່າງ ທາງການທະຫານ ຂອງອາເມລິກາຢູ່ລາວ ຢ່າງຕະຫລອດການ. ສະເພາະໜ້ານີ້, ຈັກກະພັດອາເມລິກາ ຕ້ອງຢຸດເຊົາ ການຖິ້ມລະເບີດ ແລະ ຢຸດເຊົາ ທຸກການເຄື່ອນໄຫວ ທາງການທະຫານ ໃນທົ່ວແຜ່ນດິນລາວ; ຕ້ອງຖອນ ທີ່ປຶກສາ, ພະນັກງານ ທະຫານ ອາເມລິກາ, ກອງທະຫານທລອງ ແລະ ທະຫານນອກລະບຽບຂອງ ໄທ, ພ້ອມທັງ ອາວຸດ ແລະພາຫະນະ ສົງຄາມ ຂອງອາເມລິກາ ອອກຈາກລາວ ໃຫ້ໝົດ; ຕ້ອງຍຸບເລີກ ກອງທະຫານພິເສດ ເຊິ່ງ ແມ່ນຈັກກະພັດອາເມລິກາ ເປັນຜູ້ຈັດຕັ້ງ, ລ້ຽງເກືອ ແລະ ບັງຄັບ ບັນຊາ; ຈັກກະພັດອາເມລິກາ ຕ້ອງຮັບພາລະ ໃນການໃຊ້ຈ່າງ ປົວແປງ ບາດແຜ ແຫ່ງສົງຄາມ ເຊິ່ງແມ່ນ ພວກເຂົາ ເປັນຜູ້ກໍ່ຂຶ້ນ ແລະອື່ນໆ. ນັ້ນ ແມ່ນຄວາມຮຽກຮ້ອງ ຕ້ອງການ ພື້ນຖານ, ອັນຖືກຕ້ອງ ເໝາະສົມ ແລະ ຮີບດ່ວນທີ່ສຸດ ຂອງບັນຫາລາວ ໃນປະຈຸບັນ. ຖ້າຫາກ ບໍ່ແກ້ໄຂ ບັນຫາພື້ນຖານ ດັ່ງກ່າວນີ້ແລ້ວ, ກໍ່ບໍ່ອາດ ຈະເຮັດໃຫ້ ສົງຄາມ ຢຸດເຊົາລົງ, ບໍ່ອາດ ຈະແກ້ໄຂ ບັນຫາລາວ ຢ່າງຖືກຕ້ອງ ແລະ ບໍ່ຮັກສາ ສັນຕິພາບ ໄວ້ຍາວນານໄດ້.

ກ່ຽວກັບຂໍ້ສອງ, ພວກທ່ານເວົ້າວ່າ, ເຫັນດີນຳ ນະໂຍບາຍ ຕ່າງປະເທດ ສັນຕິພາບ ເປັນກາງ ດັ່ງທີ່ ພວກຂ້າພະເຈົ້າ ໄດ້ສະເໜີອອກ. ພວກຂ້າພະເຈົ້າ ຖືວ່າ, ຄະແຫລງການ ວ່າດ້ວຍ ຄວາມເປັນກາງ ຂອງລາວ ລົງວັນທີ ໙/ກ/໑໙໖໒ ເຊິ່ງກອງປະຊຸມ ເຈີແນວປີ ໑໙໖໒ ກ່ຽວກັບລາວ ກໍໄດ້ຮັບຮູ້ ແລະ ໃຫ້ຄຳໝັ້ນ ສັນຍາ ເຄົາລົບນັ້ນ, ຍັງຄົງ ມີຄຸນຄ່າ ຢູ່ດັ່ງເດີມ, ແລະ ຍັງຄົງເປັນ ພື້ນຖານ ອັນຖືກຕ້ອງ ໃຫ້ແກ່ ນະໂຍບາຍ ຕ່າງປະເທດ ສັນຕິພາບ ເປັນກາງ ຂອງ ພຣະລາຊະອານາຈັກລາວ ໃນປະຈຸບັນ ແລະ ໃນອານາຄົດ.

ໃນຂໍ້ນີ້, ພວກທ່ານກໍ່ຄົງມີເຈຕະນາຢາກ ທຳນອງດຽວກັນ ອີກຄື: ລຶບລ້າງເສັ້ນຂີດຂັ້ນ ລະຫວ່າງຜູ້ຮຸກຮານ ກັບຜູ້ຖືກຮຸກຮານ. ພວກທ່ານຍັງຄົງ ຕັ້ງແກ້ງເອົາກຸ່ມຮຸກຮານ ຊີອາໂຕ ກັບການພົວພັນສາມັກຄີສູ້ຮົບ, ຈິງໃຈເຊິ່ງກັນ ແລະ ກັນ ລະຫວ່າງບັນດາປະຊາຊາດ ໃນອິນດູຈີນມາສັບປົນກັນ ແລ ແລະ ຕີລາຄາເກືອບເທົ່າກັນ. ມີຄວາມຈຳເປັນຕ້ອງຊີ້ອອກວ່າ, ໃນທາງເນື້ອແທ້ ກຸ່ມຮຸກຮານ ຊີອາໂຕ ກັບການພົວພັນສາມັກຄີສູ້ຮົບ ລະຫວ່າງປະຊາຊົນອິນດູຈີນ ນັ້ນແມ່ນແຕກຕ່າງກັນປານຟ້າກັບດິນ. ກຸ່ມຮຸກຮານ ຊີອາໂຕ ແມ່ນອົງການຈັດຕັ້ງການທະຫານ ທີ່ປະກອບດ້ວຍ ປະເທດສາມັນທະມິດ ແລະ ປະເທດລູກນ້ອງປະຕິການ ຂອງຈັກກະພັດອາເມລິກາ ເຊິ່ງສ່ວນຫຼາຍບໍ່ແມ່ນ ປະເທດຢູ່ໃນທະວີບອາຊີ, ມັນແມ່ນເຄື່ອງມືຮຸກຮານ ທີ່ແມ່ນອາເມລິກາສ້າງຂຶ້ນ ແລະ ໃຊ້ເພື່ອປະຕິບັດ ຈຸດປະສົງຮຸກຮານ ແລະ ລັດທິລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ ໃນອິນດູຈີນ ແລະ ອາຊີອາຄະເນ. ສ່ວນການພົວພັນສາມັກຄີສູ້ຮົບ ລະຫວ່າງ ປະຊາຊົນອິນດູຈີນນັ້ນ, ແມ່ນໄດ້ຮັບການຢືນຢັນຢ່າງຈະແຈ້ງທີ່ສຸດ ໃນຖະແຫຼງການຮ່ວມຂອງ ກອງປະຊຸມຂັ້ນສຸດຍອດ ປະຊາຊົນອິນດູຈີນ ເມື່ອວັນທີ ໒໕/໔/໑໙໗໐. ຖະແຫຼງການດັ່ງກ່າວນັ້ນ ໄດ້ລະບຸໄວ້ຢ່າງຈະແຈ້ງວ່າ:" ໂດຍຢຶດໝັ້ນໃນຫຼັກການທີ່ວ່າ, ການປົດປ່ອຍ ແລະ ປົກປັກຮັກສາປະເທດນັ້ນ ແມ່ນພາລະກິດ ຂອງປະຊາຊົນແຕ່ລະປະເທດ". ບັນດາຝ່າຍ ໃຫ້ຄຳໝັ້ນສັນຍາ ລະຫນັບສະໜູນ ເຊິ່ງກັນ ແລະ ກັນຢ່າງສຸດອົກສຸດໃຈ ຕາມຄຳຮ້ອງຂໍຂອງແຕ່ລະປະເທດ ບົນພື້ນຖານຕ່າງໃຫ້ຄວາມເຄົາລົບ ເຊິ່ງກັນ ແລະ ກັນ. ບັນດາຝ່າຍປະກາດ ຕັດສິນໃຈ ປົກປັກຮັກສາ ແລະ ຂະຫຍາຍມິດຕະພາບ ຖານອ້າຍນ້ອງ ແລະ ພົວພັນຖານພີ່ນ້ອງ ບ້ານໃກ້ເຮືອນຄຽງ ທີ່ດີກັນ ລະຫວ່າງ ໓ ປະເທດ. ໃນການພົວພັນ ລະຫວ່າງສາມປະເທດດ້ວຍກັນ, ບັນດາຝ່າຍເດັດດ່ຽວ ປະຕິບັດຫຼັກຫ້າປະການ ຢູ່ຮ່ວມກັນໂດຍສັນຕິ, ເຄົາລົບອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ຮຸກຮານກັນ, ເຄົາລົບລະບອບການເມືອງ ຂອງກັນ ແລະ ບໍ່ແຊກແຊງເຂົ້າວຽກງານພາຍໃນ ຂອງກັນ, ສະເໝີພາບ ຕ່າງຝ່າຍຕ່າງມີຜົນ ແລະ ຢູ່ຮ່ວມກັນໂດຍສັນຕິ. ບັນດາຝ່າຍ ເຄົາລົບບັນດາຫຼັກການພື້ນຖານ ຂອງສັນຍາເຈນີວ ປີ ໑໙໕໔ ກ່ຽວກັບອິນດູຈີນ ແລະ ເຄົາລົບສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ.

ຖະແຫຼງການ ອັນເປັນລາຍລັກ ອັກສອນ ດັ່ງກ່າວນັ້ນ, ແມ່ນຫຼັກຖານພະຍານ ອັນໜັກແໜ້ນ ທີ່ສະແດງໃຫ້ເຫັນວ່າ ການພົວພັນ ລະຫວ່າງປະຊາຊົນ ໓ ປະເທດອິນດູຈີນໃນພາລະກິດ ກູ້ຊາດຕ້ານອາເມລິການັ້ນ, ແມ່ນຮຸ່ງເຮືອງເຫຼືອງເຫຼື້ອມທີ່ສຸດ ເຊິ່ງກຳເນີດມາຈາກຜົນປະໂຫຍດ ຕົວຈິງສະເພາະຂອງແຕ່ລະຊາດ, ມັນມີແຕ່ນຳເອົາຜົນມາໃຫ້ປະຊາຊົນ ໓ ປະເທດໃນອິນດູຈີນເທົ່ານັ້ນ, ແລະ ບໍ່ໄດ້ຂົ່ມຂູ່ ຫຼືກໍ່ຄວາມເສຽຫາຍໃຫ້ແກ່ປະເທດໃດໜຶ່ງ. ດັ່ງນັ້ນ ຈຶ່ງບໍ່ຄວນ ແລະ ກໍບໍ່ອາດຈະໃຫ້ມີການມະລຸ້ນມະລົ່ງ ແລະ ປົນເປກັນ ໃນບັນຫາເຫຼົ່ານີ້.

<u>ກ່ຽວກັບຂໍ້ສາມ</u>, ຂໍ້ນີ້ແມ່ນຂໍ້ສຳຄັນທີ່ສຸດ ຂໍ້ໜຶ່ງໃນວິທີການແກ້ໄຂບັນຫາລາວ ແລະ ກໍ່ແມ່ນຂໍ້ໜຶ່ງ ໃນຈຳນວນຂໍ້ຕ່າງໆ ທີ່ມີຄວາມເຫັນແຕກຕ່າງກັນຢ່າງຫຼວງຫຼາຍ ລະຫວ່າງຫຼັກໝັ້ນຂອງພວກ ຂ້າພະເຈົ້າ ແລະຂອງພວກທ່ານ. ໃນຂໍ້ນີ້, ເນື້ອແທ້ຂອງມັນ ແມ່ນພວກທ່ານຢາກເວົ້າຫຍັງ ? ອາດຈະຕອບຢ່າງຈະແຈ້ງວ່າ, ແມ່ນພວກທ່ານ ຢາກກັບຄືນສູ່ສະພາບການປີ ໑໙໕໘ ຫຼື ໄກກວ່ານັ້ນອີກ. ພວກທ່ານຢາກໃຫ້ພວກຂ້າພະເຈົ້າຮັບຮູ້ ລັກສະນະຖືກກົດໝາຍ ຂອງອຳນາດການປົກຄອງລູກມື ອາເມລິກາຢູ່ວຽງຈັນປະຈຸບັນ. ພວກທ່ານຢາກໃຫ້ ພວກຂ້າພະເຈົ້າກັບຄືນມາຢູ່ໃນ ວົງລະບອບການເມືອງທີ່ອາເມລິກາ ປັ້ນແຕ່ງຂຶ້ນໃນ

ເຂດກວດກາ ຂອງພວກທ່ານ ເພື່ອຮັບເອົາຕົວແທນໜ່ອຍ ໃນອັນທີ່ເອີ້ນວ່າ "ລັດຖະບານ" ແລະ "ສະພາ" ຂອງຝ່າຍຂວາວຽງຈັນ. ອັນນີ້ ມັນທັງແມ່ນຂໍ້ຫລອກລວງ ແລະ ໃຊ້ເວດພິນທີ່ສຸດ. ພວກທ່ານ ແມ່ນທາງເຫັນຈາກສະພາບການຕົວຈິງ ຂອງລາວທີ່ສຸດ. ພວກທ່ານໄດ້ລ້ຽງ ຄວາມໄຝ່ຝັນ ຢາກໄດ້ຢູ່ເທິງໂຕະເຈລະຈາ ສິ່ງທີ່ພວກທ່ານບໍ່ສາມາດຍາດເອົາໄດ້ ຢູ່ໃນສະໜາມຮົບ, ທັງໆທີ່... ຈັກກະພັດ ອາເມລິກາ ໄດ້ໃຊ້ລູກລະເບີດເປັນລ້ານໆໂຕນ ແລະ ໃຊ້ຄວາມພະຍາຍາມ ທາງການທະຫານ ມາຕັ້ງ ໑໐ ກວ່າປີແລ້ວ.

ພວກຂ້າພະເຈົ້າເຫັນມີຄວາມ ຈຳເປັນຕ້ອງເນັ້ນຢ້ຳອີກເທື່ອໜຶ່ງວ່າ, ລັດຖະບານປະສົມແຕ່ງຊາວສາມຝ່າຍປີ ໑໙໖໒ ນັ້ນ, ໄດ້ຖືກພວກລັກທິລ່າຈັກຂອງ ອາເມລິກາ ເຮັດລັດຖະປະຫານ ໂຄ່ນລົ້ມຢ່າງສິ້ນເຊີງ ແຕ່ວັນທີ ໑໙/໔/໑໙໖໔ ພຸ້ນ, ນັບບໍ່ປ່ອກແລ້ວ. ຜ່ານການດັດແປງ ຕາມໃຈຊອບແຕ່ຝ່າຍດຽວ ຕັ້ງ ໕ ເທື່ອມາແລ້ວ, ລັດຖະບານດັ່ງກ່າວນັ້ນ ໄດ້ປ່ຽນທາດ, ປ່ຽນທັງດ້ານອົງການ, ເນື້ອໃນ, ປ່ຽນທັງໂຄງຮ່າງ ການຈັດຕັ້ງກໍດີ ແນວທາງການເມືອງພາຍໃນ ແລະ ຕ່າງປະເທດ, ແລະ ຫລັກການເອັດຕອງກອງຄຸງນັບຢ່າງສິ້ນເຊີງ. ສຳລັບສະພາປະຈຸບັນ ນັ້ນພຽງແຕ່ ແມ່ນສະພາທີ່ຝ່າຍຂວາວຽງຈັນ ເລືອກຕັ້ງຂຶ້ນ ໂດຍຝ່າຍດຽວ ໃນຂອບເຂດ ໑/໕ ຂອງດິນແດນທົ່ວປະເທດເທົ່ານັ້ນ, ແລະ ການເລືອກຕັ້ງ ດັ່ງກ່າວນັ້ນ ກໍໄດ້ດຳເນີນໄປຕາມກົດໝາຍ ທີ່ບໍ່ເສລີພາບ ປະຊາທິປະໄຕ ແລະ ດ້ວຍວິທີລັກໂລບ ປອມແປງ, ຊື້ຈ້າງຈອບຍອງ ພວກຜູ້ສະໝັກເລືອກຕັ້ງ ແລະ ຊື້ເອົາບັດ ດ້ວຍເງິນຂອງ ອາເມລິກາ ເຊິ່ງພວກຂ້າພະເຈົ້າບໍ່ໄດ້ມີການກ່ຽວຂ້ອງ ແລະ ເຂົ້າຮ່ວມແຕ່ຢ່າງໃດ. ແຕ່ເຖິງຫຍັງ ພວກທ່ານຈຶ່ງຍັງທວງໃຫ້ພວກຂ້າພະເຈົ້າຮັບຮູ້ວ່າ, ອຳນາດການປົກຄອງລູກມື ອາເມລິກາດັ່ງກ່າວນັ້ນ ມີລັກສະນະຖືກກົດໝາຍ ແລະ ເປັນຕົວແທນໃຫ້ແກ່ທົ່ວປະເທດ. ພວກຂ້າພະເຈົ້າກໍຮູ້ດີຢູ່ວ່າ, ໃນສະພາວຽງຈັນປະຈຸບັນ ກໍມີສະມາຊິກຈຳນວນໜຶ່ງ ທີ່ມີຈິດໃຈຊາດ ບາງທ່ານກໍຫນັ້ງ, ບໍ່ເຫັນດີ ເຫັນພ້ອມນຳການຮຸກຮານ ແລະ ການຄອບຄອງ ຂອງອາເມລິກາປານໃດ. ພວກຂ້າພະເຈົ້າກໍບໍ່ໄດ້ ຊັກລອງດາວພຽງຈັກເທື່ອວ່າ, ບັນດາສະມາຊິກສະພາ ເປັນປະຕິການ ແລະ ເປັນລູກມືໃຫ້ອາເມລິກາໝົດ. ສຳລັບບຸກຄົນເຫລົ່ານັ້ນ ກໍເຊັ່ນດຽວກັບອັນລາວຮັກຊາດ, ຜູ້ຊົງຄຸນນະວຸດທິ, ປັນຍາຊົນທຸກຄົນທີ່ເຫັນດີນຳສັນຕິພາບ ເປັນກາງ ແລະ ເອກະລາດນັ້ນ, ພວກຂ້າພະເຈົ້າມີຄວາມປະສົງ ຢາກມີການຮ່ວມໄມ້ຮ່ວມມື ດ້ວຍຄວາມບໍລິສຸດ, ເພື່ອພ້ອມພຽງກັນສ້າງສາ ປະເທດລາວໃຫ້ເປັນປະເທດ ສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ. ສ່ວນຝ່າຍ ບັນດາກຳລັງຮັກຊາດນັ້ນ, ພວກຂ້າພະເຈົ້າກໍເຄີຍປະກາດມາຫລາຍເທື່ອແລ້ວວ່າ, ພວກຂ້າພະເຈົ້າບໍ່ ຮັບຮູ້ລັດຖະບານ ແລະ ສະພາດັ່ງກ່າວ, ແລະ ຖືເປັນພຽງ ອຳນາດການປົກຄອງ ຂອງຝ່າຍຂວາວຽງຈັນ, ແລະ ອຳນາດການປົກຄອງດັ່ງກ່າວນັ້ນ ອາດເປັນພຽງແຕ່ຕົວແທນໃຫ້ຝ່າຍຂວາວຽງຈັນເທົ່ານັ້ນ.

ພວກຂ້າພະເຈົ້າຖືວ່າ, ການແກ້ໄຂທຸກບັນຫາການເມືອງ ພາຍໃນຂອງລາວນັ້ນ, ຕ້ອງອີງໃສ່ຈຸດພິເສດພື້ນຖານຂອງສະພາບການຢູ່ລາວ ໃນປະຈຸບັນ ນັ້ນແມ່ນມີສອງເຂດ, ສອງອຳນາດການປົກຄອງ ພ້ອມດ້ວຍ ສອງກຳລັງການເມືອງ ແລະ ກຳລັງປະກອບອາວຸດ ທີ່ຕ່າງໆກັນ. ດັ່ງນັ້ນຜູ້ທີ່ເປັນຕົວແທນໃຫ້ແກ່ສອງເຂດ, ສອງກຳລັງການເມືອງ ແລະ ກຳລັງປະກອບອາວຸດນັ້ນ ຈຶ່ງຕ້ອງພ້ອມກັນເຈລະ

ຈາຢ່າງສະເຫມີພາບ ໂດຍບໍ່ໃຫ້ຝ່າຍໃດກືນກິນກັນ ແລະ ບີບບັງຄັບກັນ, ເພື່ອພ້ອມກັນຊອກຫາວິທີການການເມືອງທີ່ສອດຄ່ອງກັບຜົນປະໂຫຍດ ພື້ນຖານຂອງປະຊາຊົນເຮົາ ເຊິ່ງບັນດາຝ່າຍພໍຈະຮັບເອົາໄດ້. ຖ້າຫາກປະຕິເສດຫຼື ຕັ້ງແກ້ງບໍ່ຮັບຮູ້ຄວາມຈິງດັ່ງກ່າວນັ້ນ, ກໍບໍ່ອາດຈະແກ້ໄຂ ບັນຫາລາວຢ່າງຖືກຕ້ອງໄດ້. ທຸກກົນອຸບາຍທີ່ຢາກທຸບຍອບ ບິດບາດ ແລະ ຖານະ ຂອງ ບັນດາກຳລັງຮັກຊາດໃຫ້ຕ່ຳລົງ, ທຸກເຈຕະນາທີ່ຢາກໃຊ້ຖານະ ລັດຖະບານມາເຈລະຈາກັບ ບັນດາກຳລັງຮັກຊາດ, ທຸກຄວາມໃຝ່ຝັນທີ່ຢາກເອົາໂຄງຮ່າງ ການເມືອງທີ່ ແມ່ນອາເມລິກາ ແລະ ພວກຂວາຈັດປັ້ນແຕ່ງຂຶ້ນຢູ່ວຽງຈັນ ມາຫນີບຕັ້ງພວກຂ້າພະເຈົ້ານັ້ນ, ລ້ວນແຕ່ຈະເສຍແຮງລ້າໆ, ແລະ ເດັດຂາດຈະຕ້ອງເສຍໄຊຢ່າງສິ້ນເຊີງ.

ໂດຍອີງຕາມສະພາບການຕົວຈິງຢູ່ລາວໃນປະຈຸບັນນີ້ ແລະ ບົດຮຽນປະຫວັດສາດໃນການປອງດອງຊາດ ສອງເທື່ອທີ່ຜ່ານມາ, ພວກຂ້າພະເຈົ້າຖືວ່າ, ເພື່ອແກ້ໄຂ ທຸກວຽກງານການເມືອງ ພາຍໃນຂອງລາວ, ບັນດາຝ່າຍລາວທີ່ກ່ຽວຂ້ອງ ຕ້ອງຈັດຕັ້ງສະພາປະສົມການເມືອງ ແລະ ລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃຫມ່.

ສະພາປະສົມການເມືອງ ແມ່ນສະຖາບັນ ແຫ່ງຄວາມຖືກຕ້ອງປອງດອງຊາດ ທີ່ມີອຳນາດສູງສຸດ, ມີຫນ້າທີ່ວາງ ແນວທາງນະໂຍບາຍ ພາຍໃນ ແລະ ຕ່າງປະເທດຂອງລາວ, ສືບຕໍ່ເປີກສາແກ້ໄຂບັນຫາທີ່ຍັງຄ້າງ ຢູ່ ທີ່ພົວພັນເຖິງສອງເຂດ ແລະ ບັນດາຝ່າຍລາວທີ່ກ່ຽວຂ້ອງ, ຮັບຜິດຊອບຕິດຕາມ, ຊຸກຍູ້, ກວດກາ ແລະ ຊ່ວຍເຫຼືອລັດຖະບານປະສົມແຫ່ງຊາດຊົ່ວຄາວ ໃນການປະຕິບັດສັນຍາຕ່າງໆ ແລະ ໂຄງການການເມືອງ ຂອງລັດຖະບານດັ່ງກ່າວ ເຊິ່ງບັນດາຝ່າຍໄດ້ຕົກລົງກັນ. ພ້ອມກັນນັ້ນ ກ່ຽມ ແລະ ດຳເນີນການເລືອກຕັ້ງສະພາ ແຫ່ງຊາດຢ່າງເສລີພາບ ປະຊາທິປະໄຕ ອັນແທ້ຈິງ, ແລະ ຈັດຕັ້ງລັດຖະບານປະສົມແຫ່ງຊາດເປັນທາງການ.

ສ່ວນລັດຖະບານປະສົມແຫ່ງຊາດຊົ່ວຄາວຊຸດໃຫມ່ນັ້ນ, ແມ່ນອົງການບໍລິຫານທີ່ຮັບຜິດຊອບໃນການປະຕິບັດການຕິດຕໍ່ພົວພັນກັບຕ່າງປະເທດ, ຮັກສາສັນຕິພາບ, ປະຕິບັດສັນຍາທີ່ໄດ້ເຊັນກັນ, ປະກາດໃຊ້ ແລະ ປະຕິບັດສິດເສລີພາບ ປະຊາທິປະໄຕຂອງປະຊາຊົນ, ຮັບເອົາ ແລະ ແບ່ງປັນການຊ່ວຍເຫຼືອຈາກຕ່າງປະເທດ.

ສະພາປະສົມການເມືອງ ແລະ ລັດຖະບານປະສົມແຫ່ງຊາດຊົ່ວຄາວ ເປັນອົງການ ການເມືອງອັນສຳຄັນແລ້ວ ເພື່ອບໍລິຫານທຸກວຽກງານຂອງປະເທດຊາດ, ເອົາໃຈໃສ່ຊຸກຍູ້ ການປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ ໄລຍະຂ້າມຜ່ານແຕ່ສັນຕິພາບ ກັບຄືນມາຈົນເຖິງ ເວລາສຳເລັດການເລືອກຕັ້ງສະພາແຫ່ງຊາດ ແລະ ລັດຖະບານປະສົມແຫ່ງຊາດເປັນທາງການ.

ເປັນຫຍັງຈຶ່ງຈຳເປັນຕ້ອງ ໃຫ້ມີທັງສະພາປະສົມການເມືອງ ແລະ ລັດຖະບານປະສົມແຫ່ງຊາດຊົ່ວຄາວ ? ເພາະວ່າ, ສະພາປະສົມການເມືອງ ແມ່ນຕົວແທນໃຫ້ແກ່ປາກສຽງ, ນ້ຳໃຈ ແລະ ຄວາມມຸ່ງມາດປາຖະຫນາ ຂອງປວງປະຊາຊົນ ບັນດາຊົນຊາດຢູ່ໃນທັງສອງເຂດ. ພາກສ່ວນປະກອບຂອງມັນກໍກວ້າງຂວາງ ແລະ ເປັນຕົວແທນຫຼາຍກວ່າ ຖ້າປຽບໃສ່ລັດຖະບານປະສົມ. ເພາະວ່າເຖິງແມ່ນສົງຄາມ ໄດ້ຢຸດເຊົາລົງ ແລະ ສັນຕິພາບໄດ້ກັບຄືນມາ ແລ້ວກໍຕາມ, ແຕ່ກໍຍັງມີສອງເຂດ

ຢູ່ລາວ, ທັງມີຫຼາຍບັນຫາ ທີ່ຍັງຄ້າງຄາ ເຊິ່ງພົວພັນເຖິງສອງເຂດ ແລະ ບັນດາຝ່າຍທີ່ຍັງຈະຕ້ອງສືບຕໍ່ປຶກສາຫາລືກັນ. ເພາະວ່າ ຊຸມຄອງທີ່ຂວາງຂື້ນ, ຄວາມແຕກແຍກ ແລະ ຄວາມອາຄາດບາດໝາງກັນ ລະຫວ່າງສອງເຂດ, ລະຫວ່າງບັນດາຊົນຊາດ, ລະຫວ່າງບັນດາຝ່າຍ ເຊິ່ງເປັນຜົນສືບເນື່ອງມາຈາກສົງຄາມຮຸກຮານ ແລະ ນະໂຍບາຍ ແບ່ງແຍກ ເພື່ອປົກຄອງຂອງອາເມລິກາ ໃນ ໑໐ ກວ່າປີມານີ້, ບໍ່ອາດຈະລົບ ແລະ ລຶບລ້າງ ໃນມື້ໜຶ່ງຍາມດຽວໄດ້. ສະພາປະຊຸມການເມືອງ ແມ່ນອົງການສູງສຸດ ເພື່ອຊຸກຍູ້ ການປະຕິບັດ ຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ ຂອງພວກເຮົາ. ດັ່ງນັ້ນແມ່ນຂໍ້ສະເໜີ ອັນສົມເຫດສົມຜົນທີ່ສຸດ, ແມ່ນອີງໃສ່ສະພາບການຕົວຈິງຂອງລາວ, ມັນບໍ່ແມ່ນ ເຮັດຕາມແບບ ຂອງປະເທດໃດໜຶ່ງ ດັ່ງທີ່ພວກທ່ານ ໄດ້ໂຄສະນາ ບິດເບືອນມານັ້ນ.

ກ່ຽວກັບຂໍ້ສີ່, ເພື່ອສ້າງບັນຍາກາດ ອຳນວຍຄວາມສະດວກ ແລະ ສ້າງໜໍ່ແໜງອັນຈຳເປັນ ໃຫ້ແກ່ ຄວາມຖືກຕ້ອງປອງດອງຊາດ, ເພື່ອ ກຳຈັດປັດເປົ່າ ຄວາມອາຄາດບາດໝາງ ແລະ ຄວາມແຕກແຍກ ໂດຍແມ່ນອາເມລິກາ ເປັນຜູ້ກໍ່ຂື້ນ ພາຍໃນຊາດເຮົາ ໃນຫຼາຍປີມານີ້, ເພື່ອເຮັດໃຫ້ ພົນລະເມືອງລາວທຸກຄົນ ສາມາດເຂົ້າຮ່ວມຊີວິດການເມືອງ ຂອງຊາດ, ຄວາມຮຽກຮ້ອງຕ້ອງການພື້ນຖານ ອັນຮີບດ່ວນ ທີ່ວາງອອກນັ້ນ ແມ່ນຕ້ອງປະກາດໃຊ້ ແລະ ປະຕິບັດ ທຸກສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນຢ່າງເດັດຂາດ, ເຊັ່ນ: ເສລີພາບ ໃນການປາກເວົ້າ, ພິມຈຳໜ່າຍ, ໂຮມຊຸມນຸມ, ຈັດຕັ້ງພັກ ແລະ ອົງການຈັດຕັ້ງການເມືອງ, ເສລີພາບ ໃນການເຊື່ອຖື, ຕັ້ງພູມລຳເນົາ, ເສລີພາບຂອງບຸກຄົນ, ກຳມະສິດ ຕໍ່ຊັບສົມບັດ ການທຳມາ ຄ້າຂາຍ ແລະ ອື່ນໆ; ຕ້ອງຈັດຕັ້ງການພົວພັນ ອັນເປັນປົກກະຕິຄືນ ໃນທຸກດ້ານ ລະຫວ່າງສອງເຂດ ຕາມຂໍ້ກຳໜົດ ທີ່ທັງສອງຝ່າຍ ໄດ້ຕົກລົງກັນ. ພ້ອມກັນນັ້ນ, ກໍຕ້ອງລຶບລ້າງ ທຸກກົດໝາຍ, ຂໍ້ບັນຍັດ, ທຸກການຈັດຕັ້ງ, ທຸກຮູບການທີ່ບີບຄັ້ນ ແລະ ກົດຂີ່ປະຊາຊົນ. ຢູ່ນີ້, ອັນເດັ່ນກວ່າເພິ່ນແມ່ນບັນຫາ "ຊາວອົບພະຍົບ" ເຊິ່ງຕາມຈຳນວນທີ່ສະມາຊິກສະພາສູງ ອາເມລິກາເປີດເຜີຍ ແມ່ນມີເຖິງ ໗ ແສນກວ່າຄົນ, ແລະ ຕາມສະຖິຕິຂອງ ອຳນາດການປົກຄອງວຽງຈັນແມ່ນ ມີເຖິງ ໔ ແສນກວ່າຄົນ. ບັນຫາ "ຊາວອົບພະຍົບ" ຢູ່ລາວແມ່ນຜົນຮ້າຍອັນໜັກໜ່ວງທີ່ສຸດ ຂອງນະໂຍບາຍບັງຄັບກວາດຕ້ອນເອົາ ປະຊາຊົນໃນເຂດປົດປ່ອຍຂອງບັນດາກຳລັງຮັກຊາດ ເຂົ້າມາຢູ່ໃນເຂດກວດກາ ຂອງຝ່າຍຂວາວຽງຈັນ, ແນໃສ່ຈຸດປະສົງທຳລາຍລະບົບເສດຖະກິດ ສັງຄົມໃນເຂດປົດປ່ອຍ ຂອງບັນດາກຳລັງຮັກຊາດ, ແຍກປະຊາຊົນອອກຈາກບັນດາກຳລັງຮັກຊາດ ແລະ ການປະຕິວັດ, ກອບໂກຍເອົາຊັບສິນ, ເກັບເກນເອົາຊາວໜຸ່ມໄປເປັນທະຫານ, ເພີ່ມຈຳນວນຜົນໃຫ້ແກ່ກຳລັງພິເສດ ແລະ ອື່ນໆ. ອາເມລິກາ ແລະ ອຳນາດການປົກຄອງວຽງຈັນປະຕິບັດກົນອຸບາຍດັ່ງກ່າວ ດ້ວຍວິທີໂຍນລູກລະເບີດ ແລະ ຫວ່ານຢາພິດຄີມີຢ່າງປ່າເຖື່ອນ ແລະ ຮ້າຍແຮງທີ່ສຸດ, ດ້ວຍວິທີໃຊ້ກອງທະຫານຝ່າຍຂວາ ແລະ ກຳລັງພິເສດ ເຄື່ອນທັບກວາດລ້າງ, ໃຊ້ກົນອຸບາຍ ບັງຄັບກວາດເອົາປະຊາຊົນຢ່າງໂຫດຮ້າຍສາມານ, ເຮັດໃຫ້ປະຊາຊົນເຫຼົ່ານັ້ນ ຈຳຕ້ອງພັດພາກຈາກບ້ານເກີດເມືອງນອນ, ປ່ອຍຖິ້ມທາງແຫ່ງຜະລິດຂອງຕົນ, ປະໄຮ່ນາຕາກ້າ ແລະ ເຮືອນຊານບ້ານຊ່ອງ ອັນເປັນມູນມໍລະດົກຕົກທອດມາແຕ່ປູ່ຍ່າຕາຍາຍ, ແລ້ວເຂົ້າມາດຳລົງຊີວິດ ແບບພັດເຊພະເນຈອນ ຕາມເຂດໃນຄ້າຍຢ່າງແສນທຸກທໍລະມານ. ດັ່ງນັ້ນ, ບັນຫາທີ່ວາງອອກຄື: ເມື່ອສົງຄາມຫາກ

ຢຸດເຊົາລົງແລ້ວ, ແມ່ນຕ້ອງ ຮັບປະກັນ ໃຫ້ປະຊາຊົນ ເຫຼົ່ານັ້ນ ມີສິດ ເສລີພາບ ຢ່າງເຕັມປ່ຽມ ໃນການ ກັບຄືນ ເມືອຫາ ພູມລໍາເນົາເດີມ ຂອງ ພວກເຂົາເຈົ້າ. ລັດຖະບານປະສົມ ແລະຝ່າຍ ພວກທ່ານ ຕ້ອງຍຸບເລີກ ບັນດາ "ເຂດອົບພະຍົບຫຼົບໄພ" ຢ່າງເດັດຂາດ, ຕ້ອງໃຊ້ຄ່າ ເສັຽ ຫາຍ ແລະຊ່ອຍ ພາຫະນະທຸກຢ່າງ ໃຫ້ເຂົາເຈົ້າ ສາມາດ ໄດ້ກັບຄືນສູ່ ບ້ານເດີມ ຂອງຕົນ ໂດຍ ບໍ່ໃຫ້ມີການ ຂັດຂວາງ ຫຼື ບີບບັງຄັບ ໃດໆ ຕໍ່ເຂົາເຈົ້າ ທັງສິ້ນ.

<u>ກ່ຽວກັບຂໍ້ຫ້າ</u>, ແມ່ນ ບັນຫາ ຢຸດຍິງ, ການຖອນ ທະຫານ ຕ່າງດ້າວ ແລະການມອບ ຫມາຍ ແລກປ່ຽນ ທະຫານ ແລະປະຊາຊົນ ສາມັນ ຂອງແຕ່ລະຝ່າຍທີ່ຖືກຈັບ. ໃນຂໍ້ນີ້, ຝ່າຍພວກ ທ່ານ ໄດ້ມີ ຂໍ້ທວງ ອັນໄຮ້ ເຫດຜົນ ແລະບໍ່ອາດຈະ ຮັບເອົາໄດ້, ນັ້ນກໍຄື ພວກທ່ານ ໄດ້ທວງໃຫ້ ບັນດາ ກໍາລັງປະກອບອາວຸດ ຂອງແຕ່ລະຝ່າຍ ຢຸດຍິງ ແລະຖອນຄືນ ເມືອຫາ ທີ່ຕັ້ງເກົ່າ ຂອງຕົນ ໃນລະໂຫມ ເດືອນ ໗ ປີ ໑໙໖໒. ດັ່ງທຸກຄົນ ໄດ້ຮູ້ດີ, ພາຍໃຕ້ ການບັງຄັບ ບັນຊາ ໂດຍກົງ ຂອງອາເມລິກາ, ກອງທະຫານ ຝ່າຍຂວາ ໄດ້ທໍາລາຍ ຄໍາສັ່ງ ຢຸດຍິງ ທົ່ວປະເທດ ຂອງລັດຖະບານ ປະສົມ ລົງວັນທີ ໒໔/໗/໑໙໖໒, ແລະເປັນຕົ້ນ ການ ປະທະກັນ ດ້ວຍອາວຸດ ຢູ່ລາວຄືນໃໝ່. ໂດຍ ປະຕິບັດ ຕາມຄໍາສັ່ງ ຂອງອາເມລິກາ, ໃນເດືອນ ໔/໑໙໖໔, ທະຫານຫຼວງ ຂອງຝ່າຍຂວາ ໗.໐໐໐ ຄົນ ໄດ້ລົມທົບ ກັບກໍາລັງພິເສດ ເປີດການ ບຸກໂຈມຕີ ບຸກຢຶດ ຢ່າງຂະໜານໃຫຍ່ ເທື່ອ ທໍາອິດ ເຂົ້າເຂດປົດປ່ອຍ ທົ່ງໄຫຫີນ-ຊຽງຂວາງ ຂອງບັນດາ ກໍາລັງຮັກຊາດ. ແຕ່ເດືອນ ໕/໑໙໖໔ ເປັນຕົ້ນມາ, ກອງທັບ ອາກາດ ອາເມລິກາ ໄດ້ເລີ່ມເຂົ້າ ຮ່ວມສົງຄາມ ຢູ່ລາວ ຢ່າງອຶກກະທຶກຄຶກ ໂຄມ, ດ້ານໜຶ່ງ ກໍເພື່ອ ຄຸ້ມກັນໃຫ້ ແກ່ການເຄື່ອນທັບຕ່າງໆ ຂອງກອງທະຫານ ຝ່າຍຂວາ ແລະ ກໍາລັງພິເສດ ໂດຍກົງ, ດ້ານໜຶ່ງອີກ ກໍເພື່ອ ຖິ້ມລະເບີດ ຍິງທໍາລາຍ ທີ່ມັ້ນກາລະບະ ລ້າງຜານຢູ່ ຕາມຫລາຍເຂດ ອັນກວ້າງຂວາງ ໃນທົ່ວດິນແດນລາວ. ແຕ່ນັ້ນມາ ສົງຄາມພິເສດ ເຊິ່ງ ແມ່ນອາເມ ລິກາ ໄດ້ດໍາເນີນ ຢູ່ລາວ ໄດ້ຮັບການ ຊຸກຍູ້ ຢ່າງຂະໜານໃຫຍ່, ກວ້າງຂວາງ ແລະດຸເດືອດ ເຊິ່ງ ບໍ່ເຄີຍມີ ມາແຕ່ກ່ອນ. ເຖິງວ່າ ຈັກກະພັດອາເມລິກາ ໄດ້ຖອກເທ ລູກລະເບີດ ລົງໃສ່ດິນ ແດນລາວຕັ້ງ ໓ ລ້ານກວ່າໂຕນ, ເຖິງວ່າ ກອງທະຫານລູກມື ອາເມລິກາ ເຊິ່ງໄດ້ຮັບການໜູນຊ່ອຍ ຈາກທະຫານຫລວງ ຂອງໄທ ໓໐ ກວ່າກອງພັນ ແລະ ທະຫານຫຸ່ນ ໄຊງ່ອນ ໄດ້ເປີດການ ເຄື່ອນ ທັບ ນ້ອຍ ໃຫຍ່ ນັບເປັນພັນເທື່ອ ແລະ ເປີດບັ້ນຮົບ ຂະໜານໃຫຍ່ ທີ່ມີທະຫານ ເຂົ້າຮ່ວມ ຕັ້ງ ໔໐-໕໐ ກອງພັນ ນັບເປັນ ໑໐ ໆ ເທື່ອ ບຸກໂຈມຕີ ທໍາລາຍ ແລະ ບຸກຢຶດ ເຂດປົດປ່ອຍ ຂອງບັນ ດາ ກໍາລັງຮັກຊາດ ໂດຍກົງ ກໍຕາມ; ແຕ່ ຕໍ່ໜ້າ ກໍາລັງແຮງ ແຫ່ງການສູ້ຮົບ ປ້ອງກັນຕົວ, ແລະ ການຕ້ານ ໂຈມຕີຄືນ ຢ່າງເດັດດ່ຽວ, ດຸເດືອດ ແລະ ອົງອາດ ກ້າຫານ ທີ່ສຸດ ຂອງກອງທັບ ແລະ ປະຊາຊົນເຮົາ ໃນທົ່ວທຸກ ສະໜາມຮົບ, ຜົນສຸດທ້າຍ ກໍໄດ້ ເຮັດໃຫ້ ພວກເຂົາ ປະລາໄຊ ແລ້ວ ປະລາໄຊອີກ. ພວກເຂົາ ນັບມື້ນັບ ຕົກຢູ່ໃນ ທ່າຮັບ ແລະ ກະອົບກະອາງ. ແຕ່ປານນັ້ນ, ຢູ່ ເທິງໂຕະ ເຈລະຈາ ໃນປະຈຸບັນ, ພວກທ່ານ ກໍຍັງ ທວງໃຫ້ ພວກຂ້າພະເຈົ້າ ຕ້ອງໃຊ້ ຄ່າໃຫ້ແກ່ ການຮຸກຮານ ຂອງອາເມລິກາ, ທວງໃຫ້ ພວກຂ້າພະເຈົ້າ ຕ້ອງສົ່ງ ເຂດແດນຄືນ ໃຫ້ພວກທ່ານ

ຢ່າງພໍໃຈ, ທັງໆ ທີ່ ພວກທ່ານ ບໍ່ສາມາດ ຢຶດຄືນໄດ້ ດ້ວຍກຳລັງ ອາວຸດ. ອັນນີ້ ນັ້ນຕ້ອງແມ່ນ ເລື່ອງໄຮ້ ສາລະ ແລະ ຂອງ ທີ່ສຸດ, ທັງເປັນການ ປະຫມາດ ຄວາມຈິງ ແລະຫລັກ ແຫ່ງຄວາມ ເປັນທຳ ທົ່ວໄປ ອີກດ້ວຍ. ຫລັກການນັ້ນ ຂອງພວກ ຂ້າພະເຈົ້າ ຍາມໃດ ກໍ່ແມ່ນ ຕ້ອງໃຫ້ ປະຕິບັດ ການ ຢຸດຍິງ ກັບທີ່ ຢ່າງສັນເຈິງ ແລະ ພ້ອມກັນ ໃນທົ່ວ ດິນແດນລາວ, ບໍ່ອາດ ຈະໃຫ້ມີ ການ ເຕົ້າໂຮມ, ເຄື່ອນຍ້າຍ ກອງທະຫານ ແລະ ແລກປ່ຽນ ເຂດແດນກັນ.

ເລື່ອງທີ່ ກ່າວມາ ຂ້າງເທິງນັ້ນ, ແມ່ນ ການອະທິບາຍ ຫລັກການນັ້ນ ແລະ ຄຳຄິດ ຄຳ ເຫັນ ຂອງ ຄະນະຜູ້ແທນ ບັນດາ ກຳລັງຮັກຊາດ ຕໍ່ບົດ ເທື່ອຫນຶ່ງ ຕໍ່ຂໍ້ ສະເຫນີ ໕ ຂໍ້ ຂອງ ຝ່າຍ ພວກທ່ານ. ພວກຂ້າພະເຈົ້າ ຖືວ່າ, ຂໍ້ສະເຫນີ ຕ່າງໆດັ່ງກ່າວ ຂອງ ພວກທ່ານນັ້ນ ແມ່ນ ໄດ້ຕ່າງໄກ ຈາກສະພາບຕົວຈິງຢູ່ລາວປະຈຸບັນຫລາຍ, ມັນສະແດງເຖິງຫລັກການນັ້ນ ອັນແຂງກະດ້າງແລະ ດ້ານດຽວຂອງພວກທ່ານ ກ່ຽວກັບບັນຫາພື້ນຖານຕົ້ນຕໍຂອງບັນຫາລາວ. ບໍ່ພຽງແຕ່ເທົ່ານັ້ນ, ຝ່າຍຂວາອຽງ ຈັດ ຍັງສະແດງຄວາມບໍ່ຈິງໃຈໃນການເຈລະຈາ, ຕັ້ງແຕ່ງຫນ່ວງຫນ່ຽວ ແລະ ຂັດຂວາງບໍ່ໃຫ້ການ ເຈລະຈາກ້າວເຂົ້າສູ່ການ ເປີກສາຫາລືແກ້ໄຂບັນຫາເນື້ອໃນ ຕົວຈິງດ້ວຍ ວິທີກົນອຸບາຍຕ່າງໆ ນາໆ, ເຊັ່ນ: ບໍ່ຍອມແກ້ໄຂບັນຫາ ຈຳນວນຫນຶ່ງ ກ່ຽວກັບລະບຽບການໃຫ້ຕົກໄປຢ່າງເດັດຂາດ, ຍັງຄົງ ປັກຫຸຢູ່ໃນຫ້ອງປະຊຸມ, ບັນຫາຖານະຂອງ ຄະນະຜູ້ແທນ ແລະ ບັນຫາສອງໃຊ້ເວທີກອງປະຊຸມມາ ໂຄສະນາບິດເບືອນຂະບວນ ການຕໍ່ສູ້ກູ້ຊາດຕ້ານອາເມລິກາ ອັນເປັນທຳ ແລະ ສະຫວ່າງແຈ້ງ ຂອງ ປະຊາຊົນເຮົາ, ຕັ້ງແກ້ງປົກປິດໃຫ້ແກ່ການຮຸກຮານອັນນອງເລືອດ ແລະ ໂຫດກຳອັນລື້ນຟ້າເຫລືອແຜ່ນ ດິນຂອງອາເມລິກາຢູ່ລາວ, ແລະ ດ້ວຍວິທີຢາກຕັດແຍກ ບັນຫາການທະຫານອອກຈາກ ບັນຫາການ ເມືອງ ໃນການເຈລະຈາ ແລະ ອື່ນໆ. ໃນຄຳຖະແຫລງຂອງ ພວກທ່ານໃນວາລະປະຊຸມເທື່ອທີ່ ໗, ພັດໄດ້ມີປະກົດການຍຸຫຍັ້ງ ຍິ່ງກວ່າຄຳຖະແຫລງຕ່າງໆ ຂອງພວກທ່ານເມື່ອກ່ອນນັ້ນອີກຊ້ຳ. ໃນຂະນະ ດຽວກັນນັ້ນ, ໃນເວລາຕອບຄຳສຳພາດຂອງນັກຂ່າວ ຢູເປອີ, ເມື່ອວັນທີ ໒໔/໑໑/໗໒ ນີ້, ສະ ເດັດເຈົ້າສຸວັນນະພູມາກໍ່ໄດ້ເວົ້າຢ່າງບໍ່ປິດບັງວ່າ: "ຖ້າສົງຄາມຢູ່ລາວຫາກບໍ່ທັນໄດ້ຮັບການແກ້ໄຂ, ແນ່ນອນວ່າ, ອາເມລິກາກໍ່ຍັງຈະຖິ້ມລະເບີດໃສ່ລາວຕໍ່ໄປ". ຄຳປະກາດດັ່ງກ່າວນັ້ນ ເປັນການຮັບ ສາລະພາບຢ່າງເປີດເຜີຍ ກ່ຽວກັບຝ່າຍຂວາອຽງຈັດ ໄດ້ຮ່ວມກັບອາເມລິກາ. ພ້ອມກັນນັ້ນ, ກໍ່ເປັນ ການນາບຂູ່ ບັນດາກຳລັງຮັກຊາດຢ່າງບັງອາດ. ການປະກາດແນວນັ້ນ ພ້ອມກັບການທີ່ອາເມລິກາ ນັບເປັນຮ້ອຍໆຖ້ຽວລຳ ຖິ້ມລະເບີດອັນມີລັກສະນະລ້າງຜານ ລົງໃສ່ຕົວເມືອງສາລະວັນ ໃນວັນທີ ໑໗, ໑໘,໑໙/໑໑/໑໙໗໒ ຢ່າງປ່າເຖື່ອນທີ່ສຸດນັ້ນ, ເປັນການກໍ່ຄວາມເສົ້າຫມອງ ໃຫ້ແກ່ບັນຍາກາດ ຂອງ ການເຈລະຈາຕື່ມອີກ, ແລະ ມັນກີດຂວາງຫຍັງໃຫ້ການເຈລະຈາຄືບຫນ້າໄປໄດ້. ພວກຂ້າພະເຈົ້າ ຢາກຂໍເນັ້ນຕື່ມອີກເທື່ອຫນຶ່ງວ່າ, ຄຳປະກາດດັ່ງກ່າວນັ້ນ ບໍ່ສາມາດນາບຂູ່ ຫນີບເຕັງ ບັນດາກຳລັງ ຮັກຊາດໄດ້. ການຖິ້ມລະເບີດຂອງອາເມລິກາຢູ່ລາວນັ້ນ ແມ່ນບໍ່ສາມາດຈະຊ່ວຍປົກປ້ອງໃຫ້ ແກກອງ ທະຫານຝ່າຍຂວາພົ້ນອອກຈາກການປະລາໄຊ ທີ່ນັບມື້ນັບຫນັກຫນ່ວງນັ້ນໄດ້ ຢ່າງເດັດຂາດ.

ພວກຂ້າພະເຈົ້າ ຫວັງວ່າ, ຝ່າຍພວກທ່ານ ຄົງຈະເອົາຕົວອອກ ຈາກການຄອບງຳ ຂອງອາເມລິກາ, ແລ້ວພ້ອມກັບພວກຂ້າພະເຈົ້າ ກຳຈັດປັດເປົ່າທຸກອຸປະສັກ, ດຳເນີນການເຈລະຈາຢ່າງຈິງຈັງ, ປຶກສາຫາລື ເນື້ອໃນອັນແທ້ຈິງຢ່າງ ເຂັ້ມງວດ ດັ່ງທີ່ພວກຂ້າພະເຈົ້າ ໄດ້ສະເໜີມາ, ເຮັດໃຫ້ການເຈລະຈານີການ ຄືບໜ້າໂດຍສະດວກດີ, ນຳເອົາຜົນສຳເລັດ ອັນຈິງຈັງ ມາສູ່ພວກເຮົາໂດຍໄວ ເພື່ອຕອບສະໜອງ ຄວາມຄອງຄອຍຂອງ ປວງປະຊາຊົນທັງຊາດ./.